

# ຊີວິດ ແລະ ຜົນງານ

ຂອງພຣະຄຣູອະນາວິໄຣ(ບຸນທອງ ວິປະໄຊຍ໌)

ປະທານ ອ.ພ.ສ ເມືອງໂຂງ

ຄະນະປະຈຳ ອ.ພ.ສ ແຂວງຈຳປາສັກ

ກຳມະການສູນກາງອົງການພຸດທະສາສນາສຳພັນລາວ

ພ.ສ. ໒໕໔໓ ຄ.ສ. ໒໐໐໐



ພຣະຄຣູອະນາວິໂຣ(ບຸນທອງ ວິປະໄຊຍ໌)

ປະທານ ອ.ພ.ສ ເມືອງໂຂງ

ຄະນະປະຈຳ ອ.ພ.ສ ແຂວງຈຳປາສັກ

ກຳມະການສູນກາງອົງການພຸດທະສາສນາສຳພັນລາວ



# ອະນຸສອນ

## ໃນພິທີເຮັດບຸນວັນຄ້າຍວັນເກີດ

## ພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌)

*ປະທານ ອ.ພ.ສ ເມືອງໂຂງ ຄະນະປະຈໍາ ອ.ພ.ສ ແຂວງຈໍາປາສັກ*

*ກໍາມະການສູນກາງອົງການພຸດທະສາສນາສໍາພັນລາວ*

ພ.ສ ໒໕໔໓ ຄ.ສ ໒໐໐໐

# ຄຳອະນຸໂມທະນາຄາຖາ

ຂອງປະທານສູນກາງອົງການພຸດທະສາສະນາສຳພັນລາວ

ຂ້າພະເຈົ້າຂໍສະແດງມຸທິຕາຈິດ ໃນສ່ວນກຸສົນເຈຕະນາຂອງຄະນະກຳມະການ ແລະສິດສານຸສິດຂອງພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌) ທີ່ໄດ້ຈັດງານບຸນວັນຄ້າຍວັນເກີດ ແລະຈັດພິມຫນັງສືນີ້ຂຶ້ນມາເປັນເຫລັ້ມໄດ້ ນັບວ່າໄດ້ໃຊ້ເວລາແລະຄວາມມານະພະຍາຍາມເປັນຢ່າງຍິ່ງ ຄວາມສຳເລັດໃນຄັ້ງນີ້ນັບໄດ້ເກີດແກ່ສ່ວນລວມພ້ອມທັງໄດ້ສືບຕໍ່ຮັກສາພຣະພຸດທະສາສນາ ໃຫ້ດຳລົງຄົງຢູ່ຕະຫລອດໄປ ໂດຍສະເພາະອະນຸຊົນຄົນລຸ້ນຫລັງ ໃຫ້ມີຄວາມຮູ້ຄວາມສາມາດນຳເອົາທັມມະນີ້ໄປປະພຶດປະຕິບັດໃຫ້ຖືກຕ້ອງຕາມແນວທາງຄຳສອນທາງພຣະພຸດທະສາສນາ ພ້ອມນີ້ຍັງໄດ້ສະແດງອອກເຖິງຄວາມກະຕັນຍູກະເວທີທີ່ມີຕໍ່ພຣະຄຣູອະນາວິໂຣ ທີ່ມີບຸນຄຸນຕໍ່ບັນດາສິດທັງຫລາຍນັບວ່າເປັນການສະແດງອອກທີ່ຖືກຕ້ອງເປັນເຄື່ອງຫມາຍຂອງຄົນດີ.

ພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌) ເປັນພຣະເຖຣະອົງຫນຶ່ງທີ່ມີຄວາມຮູ້ຄວາມສາມາດ ໄດ້ມີສັດທາອັນແຮງກ້າອຸທິດຕົນເພື່ອພຣະພຸດທະສາສນາ ແລະປະເທດຊາດ ປະກອບສ່ວນຊ່ວຍສ້າງສັນສັງຄົມ ຄືໃນດ້ານການສຶກສາ ການປົກຄອງ ການເຜີຍແຜ່ ສາທາຣະນູປະການ ແລະຫນ່ຍາພົ້ນເມືອງເປັນຕົ້ນ.

ເນື່ອງໃນສຸພາວະຣະເລີກສຸພະວະຣະດິຖີມຸງຄຸນສະໄຫມວັນຄົບຮອບ ຜົດ ປີ ໔໑ ພັນສາຂອງທ່ານພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌) ໄດ້ຫັນວຽນມາບັນຈົບຄົບຮອບເຂົ້າໃນມື້ນີ້ຂ້າພະເຈົ້າໃນນາມປະທານສູນກາງອົງການພຸດທະສາສະນາສຳພັນລາວ ຂໍຕັ້ງຈິດອະທິດຖານ ໃຫ້ພຣະຄຣູອະນາວິໂຣຈົ່ງມີສຸຂະພາບພະລານາໄມສົມບູນທັງຮ່າງກາຍ ແລະຈິດໃຈເປັນຫລັກໄຊໃຫ້ພຣະພຸດທະສາສນາດ້ວຍເທີ້ນ.

ທີ່ວັດພຣະທາດຫລວງເຫນືອ

ນະຄອນຫລວງວຽງຈັນ ວັນທີ ໑ ມັງກອນ ພ.ສ ໒໕໔໓

ປະທານສູນກາງອົງການພຸດທະສາສນາສຳພັນລາວ

ດຣ. ພຣະມະຫາວິຈິດ ສິງຫະຣາຊ

# ຄໍາອະນຸໂມທະນາ

ຂອງພຣະອາຈາຣຍ໌ບຸນສີ ວົງພູມີ

ຫົວໜ້າຫ້ອງການສູນກາງ ອ.ພ.ສ ເລຂາປະທານອົງການ

ພຣະອາຈາຣຍ໌ໃຫຍ່ບຸນທອງ ວິປະໄຊຍ໌ ຄະນະກັມມະການສູນກາງອົງການພຸດທະສາສະນາສໍາພັນລາວ ຄະນະປະຈໍາ ອ.ພ.ສ ແຂວງແຂວງຈໍາປາສັກ ເປັນພຣະມະຫາເຖຣະທີ່ມີບົດບາດສໍາຄັນອົງໜຶ່ງຕໍ່ປະເທດຊາດ ແລະພຣະພຸດທະສາສະນາ.

ໃນໂອກາດທີ່ພຣະອາຈານໃຫຍ່ມີອາຍຸຄົບ ໕໑ ປີ໔໑ ພັນສາ ຄະນະສິດສານຸສິດ ຂອງທ່ານໄດ້ລວມກັນເຮັດບຸນວັນຄ້າຍວັນເກີດແລະພິມໜັງສືເປັນອະນຸສອນ ເພື່ອມອບຖວາຍ ແລະແຈກຢາຍແກ່ຍາດໂຍມເປັນການປະກາດກຽດຕິຄຸນຂອງທ່ານ ໄດ້ຈາຣຶກບັນທຶກໄວ້ເພື່ອໃຫ້ກຸນລະບຸດໄດ້ສຶກສາຫາຄວາມຮູ້ ນັບວ່າບັນດາສິດສານສິດຂອງພຣະອາຈາຣຍ໌ໃຫຍ່ບຸນທອງ ວິປະໄຊຍ໌ ທັງບັນພະຊິດແລະຄະຣາວາດໄດ້ສະແດງອອກເຖິງຄວາມກະຕັນຍູບູຊາຄຸນຜູ້ມີບຸນຄຸນທັງຫລາຍມີພຣະອາຈາຣຍ໌ເປັນຕົ້ນ

ຂ້າພະເຈົ້າໃນນາມສ່ວນຕົວ ຈຶ່ງຂໍຊົມເຊີຍແລະອະນຸໂມທະນາ ນໍາບັນດາສິດຂອງທ່ານແລະຂໍໃຫ້ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ຈົ່ງມີສຸຂະພາບພະລານາໄມສົມບູນ ປະສົບແຕ່ຄວາມຜາສຸກເທີ້ນ

ນະຄອນຫລວງວຽງຈັນ, ໑໐/໑໔/ ໔໐໐໐

ຫົວໜ້າຫ້ອງການ ອ.ພ.ສ.

# ຄຳອະນຸໂມທະນາ

ພຣະອາຈາຣຍ໌ໃຫຍ່ບຸນທອງ ວິປະໄຊຍ໌ ຄະນະກັມມະການສູນກາງອົງການພຸດທະສາສນາສຳພັນລາວ ຄະນະປະຈຳ ອ.ພ.ສ ແຂວງ ແຂວງຈຳປາສັກ ເປັນພຣະມະຫາເຖຣະທີ່ມີບົດບາດສຳຄັນອົງຫນຶ່ງຕໍ່ປະເທດຊາດ ແລະພຣະພຸດທະສາສະນາໃນຍຸກປັດຈຸບັນ.

ໃນໂອກາດທີ່ພຣະອາຈານໃຫຍ່ມີອາຍຸຄົບ ໖໑ ປີ໔໑ ພັນສາ ຄະນະສິດສານຸສິດ ຂອງທ່ານໄດ້ລວມກັນເຮັດບຸນວັນຄ້າຍວັນເກີດເພື່ອລະລຶກນຶກເຖີງບຸນຄຸນຂອງທ່ານພຣະອາຈາຣຍ໌ ທີ່ມີແກ່ບັນດາສິດນັບວ່າບັນດາສິດສານຸສິດ ຂອງພຣະອາຈາຣຍ໌ໃຫຍ່ບຸນທອງ ວິປະໄຊຍ໌ ທັງບັນພະຊິດແລະຄະຣາວາດໄດ້ສະແດງອອກເຖີງຄວາມກະຕັນຍູບູຊາຄຸນຂອງຜູ້ມີບຸນຄຸນທັງຫລາຍ ມີພຣະອາຈາຣຍ໌ໃຫຍ່ບຸນທອງເປັນຕົ້ນ

ຂ້າພະເຈົ້າໃນນາມປະທານ ອ.ພ.ສ ແຂວງຈິ່ງຂໍຊົມເຊີຍແລະອະນຸໂມທະນານຳບັນດາສິດຂອງທ່ານແລະຂໍໃຫ້ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ຜູ້ເປັນຮົ່ມໄຊທີ່ເພິ່ງຂອງສິດທັງ ຫລາຍຈົ່ງມີສຸຂະພາບພະລານາໄມສົມບູນ ປະສົບແຕ່ຄວາມຜາສຸກເທີ້ນ

ວັດຫລວງປາກເຊ , ໑ ມັງກອນ ພ.ສ ໒໕໔໓

ປະທານ ອ.ພ.ສ ແຂວງຈຳປາສັກ

ພຣະອາຈາຣຍ໌ສຸວັນ ຈັນທະຣາຊ

## ຄຳອະນຸໂມທະນາຄາຖາ

ເນື່ອງໃນໂອກາດວັນຄົບຮອບວັນຄ້າຍວັນເກີດ ໖໑ ປີ ໔໑ ພັນສາໃນວັນນີ້ ຄະນະສິດສານຸສິດໄດ້ເຮັດບຸນວັນຄ້າຍວັນເກີດ ແລະ ຮ່ວມກັນຈັດພິມໜັງສືທີ່ລະນຶກໃຫ້ອາຕະມາ ເພື່ອປະກາດຄຸນງາມຄວາມດີ ຂອງອາຕະມາ ທີ່ໄດ້ເອົາຕົນເຂົ້າບວດໃນພຸດທະສາສນາເຜີຍແຜ່ສືບທັມໃຫ້ແກ່ ພຸດທະສາສນິກກະຊົນບັນດາເຜົ່າເປັນເວລາ ໓໖ ປີເຕັມ ດ້ວຍບິດບາດທີ່ປະກອບສ່ວນກໍ່ສ້າງວັດວາພຸດທະສາສະນາໃຫ້ຈະເຣີນກ້າວໜ້າສີວິໄລ ຕໍ່ຜົນງານແລະຄວາມດີດັ່ງກ່າວ.

ດັ່ງນັ້ນ, ໃນຖານະໜ້າທີ່ຂອງຄູບາອາຈາຣຍ໌ຜູ້ເປັນບຸບພະກາລີບຸກຄົນຈຶ່ງຂໍອວຍພອນໃຫ້ແກ່ສິດສານຸສິດ ທັງບັນພະຊິດແລະຄະລືຫັດທັງຢູ່ໃກ້ ແລະຢູ່ໄກປີໃໝ່ມາຮອດແລ້ວສິດທິໂຊກມະຫາໄຊແດ່ທ່ານ

ຂໍອວຍພອນສິ່ງໃຫ້ ໃນປີໃໝ່ສອງພັນເອັດ
ຈົ່ງສຳເລັດໃນຄວາມຫວັງ ດັ່ງມະໂນໝາຍໄວ້
ຄວາມທຸກເຂັນຢ່າມາໄກ້ ຄວາມຈັງໄຮຈົ່ງເຫີນຫ່າງ
ຍູທ່າງຢູ່ສືບສ້າງ ຄູນຄ້ຳວັດທະນາ
ຂໍໃຫ້ກຸສົນທົ່ວໜ້າ ທີ່ສ້າງກໍ່ປົວແປງ
ຈົ່ງມາແຍງເບື້ອງຫາງ ຮັ່ງມີສຸກຂີດ້ວຍ
ຂໍໃຫ້ລວຍເງິນຄຳຕື້ ນໍ່ນິນແກ້ວປະເສີດ
ເລີດກວ່າຂອງສິ່ງນັ້ນ ສຸກຂະພະລະລົ້ນ
ຈົ່ງເກີດມີແກ່ທ່ານເທີ້ນ.

# ຄຳອວຍພອນ

ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ເປັນພຣະເຖຣະຜູ້ໃຫຍ່ອົງໜຶ່ງຂອງພຣະສົງລາວ ທີ່ຈະເຣີນດ້ວຍອາຍຸພັນສາ ໄວຍະວຸດຄຸນນະວຸດແລະຄຸນນະທັມ ພຣະອາຈາຣຍ໌ໄດ້ພ່ຳເພັງປະໂຫຍດແກ່ພຣະພຸດທະສາສນາ ແລະສັງຄົມຫລາຍປະການ ພ້ອມທັງສິດສານຸສິດໄດ້ຢຶດຖືເປັນແບບຢ່າງເປັນທີ່ເພິ່ງພາອາໄສ ໃຫ້ຄວາມຮົ່ມເຢັນເປັນສຸກແກ່ບັນດາສິດສານຸສິດທຸກຖ້ວນໜ້າປຽບດັ່ງຮົ່ມໂພຮົ່ມໄຊໃຫ້ຄວາມຮົ່ມເຢັນແກ່ສະກຸນາແລະຜູ້ຄົນເຂົ້າໄປຊຸ້ນອາໄສໃນຄາວເດືອດຮ້ອນເຊັ່ນນັ້ນ.

ນັບຕັ້ງແຕ່ພຣະອາຈາຣຍ໌ໄດ້ຖືກຳເນີດເກີດຂຶ້ນມານີ້ກໍນັບໄດ້ວ່າເປັນເວລາອັນອຸດົມມຸງຄຸນ ເພາະຊີວິດຂອງທ່ານບໍ່ເຄີຍບຽດບຽນຂົ່ມເຫັງສັດ ແລະມະນຸດໃຫ້ໄດ້ຮັບຄວາມທຸກເດືອດເນື້ອຮ້ອນໃຈ ກົງກັນຂ້າມ ພຣະອາຈາຣຍ໌ໄດ້ໃຊ້ຊີວິດແບບສະບາຍ ຢູ່ຢ່າງລຽບຫງ່າຍສະມະຖະ ສິດສານຸສິດ ສັງຄົມຍັງພອຍໄດ້ຮັບປາຣະມີທັມທີ່ພຣະອາຈາຣຍ໌ໄດ້ພ່ຳເພັງພຽນຕະຫລອດມາ.

ບັດນີ້ ວັນເວລາໄດ້ຫມູນວຽນມາເປັນວັນຄົບຮອບ ໖໑ ປີ (໑໙໓໗-໒໐໐) ອີກວາຣະໜຶ່ງ ນັບໄດ້ວ່າທ່ານພຣະອາຈາຣຍ໌ໄດ້ປະກອບກິດນານາປະການທີ່ເກີດປະໂຫຍດແກ່ສັງຄົມປະເທດຊາດ. ທ່ານບໍ່ມີບ້ານ ບໍ່ມີເຮືອນ ຄືເປັນຜູ້ປາສະຈາກບ້ານເຮືອນ ທ່ານມີແຕ່ວັດກໍຄືສະຖານທີ່ສາທາລະນະໃຫ້ບັນດາສິດໄດ້ເພິ່ງປາຣະມີທັມ.

ຖ້າຫາກເຮົາຫວນຄືນຊີວິດຂອງທ່ານແລ້ວ ເປັນສິ່ງທີ່ໃຫ້ຄວາມຮູ້ແກ່ພວກເຮົາສິດສານຸສິດ ແລະເປັນພາບທີ່ດີທີ່ສຸດ ເພາະວິຖີຊີວິດຂອງທ່ານນັ້ນເຕັມໄປດ້ວຍອຸປະສັກຂວັກຫນາມ ທ່ານຈໍາຕ້ອງຟັນຜ່າພິຊິດຄວາມຍາກລໍາບາກເຫລົ່ານັ້ນມາດ້ວຍໄຊຊະນະ ແລະກ້າວໄປຂ້າງຫນ້າຢ່າງທັນການ ນັບວ່າທ່ານປະສົບຜົນສໍາເລັດໃນຊີວິດຂອງທ່ານຢ່າງຫນ້າພາກພູມໃຈ ຊີວິດຂອງພຣະອາຈາຣຍ໌ທີ່ແທ້ຈິງແລ້ວກໍຄືປະຫວັດສາດຫນ້າຫນຶ່ງແຫ່ງການຕໍ່ສູ້ ທ່ານບໍ່ພຽງແຕ່ຕໍ່ສູ້ກັບຊີວິດເທົ່ານັ້ນ ແຕ່ຕ້ອງຕໍ່ສູ້ກັບທໍາມະຊາດ ເປັນການຕໍ່ສູ້ເພື່ອອະນາຄົດພວກເຮົາສິດສານຸສິດເຫັນໄດ້ດ້ວຍຕົວຂອງພວກເຮົາເອງ.

ພຣະອາຈາຣຍ໌ເປັນຄົນດີຄົນຫນຶ່ງ ແລະການທີ່ຈະມີຄົນດີນັ້ນເປັນເລື່ອງຍາກພໍສົມຄວນ ແຕ່ກໍບໍ່ໄດ້ຫມາຍຄວາມວ່າ ໃນສັງຄົມນີ້ຈະມີແຕ່ຄົນຊົ່ວ ຖ້າຫາກຍາມໃດ ເວລາໃດມີຄົນຊົ່ວ ຫລາຍກວ່າຄົນດີແລະມີອໍານາດ ໂລກນີ້ກໍຄົງສັບສົນ ແລະເສື່ອມສະຫລາຍໄປຕັ້ງນານແລ້ວ ອັນນີ້ກໍເພາະມີຄົນດີຊ່ວຍສ້າງເສີມ ແຕ່ງເຕີມສັງຄົມໂລກໃຫ້ສະຫງົບຫນ້າຢູ່ຈົນທຸກວັນນີ້.

ຊີວິດຂອງຄົນເຮົາ ຖ້າປຽບເປັນບົດກອນ ກໍເປັນບົດກອນທີ່ຂຽນບໍ່ມີວັນດັບ ຖ້າຫາກດິນບໍ່ຖົມ ໄຟບໍ່ໄຫມ້ ຄຸນຄວາມດີການກະທໍາຍາມໃດ ກໍຖືກກ່າວລະນຶກຄິດເຖິງຢ່າງບໍ່ມີວັນຈືດຈາງຫ່າງຫາຍໄປຈາກໂລກນີ້ ທ່ານພຣະອາຈາຣຍ໌ ບຸນທອງ ວິປະໄຊຍ໌ກໍເຊັ່ນດຽວກັນ ສິດສານຸສິດທຸກສາຣະທິດບໍ່ວ່າເຫນືອ ແລະໃຕ້ຕ່າງກໍໃຫ້

ຄວາມຕ້ອນຮັບນ້ອມດ້ວຍປາຣະມີທັມ ແລະເມດຕາທັມທີ່ທ່ານໄດ້ປະຕິບັດມາເປັນເວລານານກວ່າເຄິ່ງສະຕະວັດ.

ຂະນ້ອຍ ໃນນາມຜູ້ມີຄວາມສັດທາໃນສີລາຈະຣິຍະວັດຂອງທ່ານພຣະອາຈາຣຍ໌ອົງຫນຶ່ງ ຂໍນ້ອມນໍາເອົາຄຸນພຣະສີຣັດຕະນະໄຕຣ ແລະສິ່ງສັກສິດທັງຫລາຍ ຈົ່ງມາປົກປ້ອງຄຸ້ມຄອງໃຫ້ອົງບິດາຈາຣຍ໌ມີຄວາມສຸກມີຄວາມຈະເຣີນ ມີພະລານາໄມສົມບູນແຂງແຮງ ແລະມີອາຍຸຫມັ້ນຂວັນຍືນ ຢູ່ເປັນຣົ່ມໂພຣົ່ມໄຊ ໃຫ້ບັນດາເຫລົ່າສັດສານຸສິດທັງຫລາຍ ໄດ້ເພິ່ງພາປາຣະມີຂອງທ່ານຕະຫລອດໄປ ດ້ວຍເຖີດ.

ວຽງຈັນ, ວັນທີ ໑ ມັງກອນ ພ.ສ ໒໕໔໓

ພຣະຊາຍຄໍາ ຈໍາປາອຸທຸມ

# ຄໍາອວຍພອນ

ຂອງ. ພຣະມະຫາບຸນທະວີ ວິໄລຈັກຣ໌

ເນື່ອງໃນສຸພາວະຣະເລີກສຸພະອະຣະດີຖີມຸງຄຸນສະໃຫມອັນຄົບຮອບ ໖໑ ປີ ໔໑ ພັນສາຂອງທ່ານພຣະຄຣູອະນາວິໂຣ (ບຸນທອງວິປະໄຊຍ໌) ໄດ້ຫັນວຽນມາບັນຈົບຄົບຮອບເຂົ້າໃນວັນນີ້ ຂະນ້ອຍຂໍອວຍພອນໃຫ້ ພຣະຄຣູອະນາວິໂຣ ຈົ່ງມີສຸຂະພາບພະລານາໄມສົມບູນທັງຮ່າງກາຍແລະຈິດໃຈ ເປັນທີ່ເພິ່ງຂອງບັນດາສິດທັງຫລາຍເປັນຫລັກໄຊໃຫ້ພຣະພຸດທະສາສນາດ້ວຍເທີ້ນ.

ທີ່ວັດພຣະທາດຫລວງເຫນືອ

ນະຄອນຫລວງວຽງຈັນ ວັນທີ ໑ ມັງກອນ ພ.ສ ໒໕໕໖

ສໍານັກງານສູນກາງອົງການພຸດທະສາສນາສໍາພັນລາວ

ພຣະມະຫາບຸນທະວີ ວິໄລຈັກຣ໌

# ບົດອວຍພອນຂອງ

## ທ່ານເຈົ້າແຂວງ ຊຽງຂວາງ

ມື້ນີ້ຟ້າສ່ອງແຈ້ງ　　ເບີຍເບີກເວຫາ
ແສງອາຣຸນເງີງາມ　　ສ່ອງລົງທາງໃຕ້
ເປັນສີໃສແສງກ້າ　　ປັດຖະພີເຮືອງຮຸ່ງ
ແສງປະກາຍພຸ່ງພົ້ນ　　ບຸນຄຸນລົ້ນພຣະອາຈາຣຍ໌
ມື້ນີ້ຂ້າຂ່ຍມືໄຫວ້　　ພຣະເຖຣະບຸນທອງ
ຄະນະນຳການສົງ　　ອ.ພ.ສ ຄາວນີ້
ພໍດີຄົບຂວບໄດ້　　໕໑ ພັນສາວຽນຮອບ
ປະກອບບຸນກໍ່ເກື້ອ　　ເພື່ອຍາດໂຍມພົ້ນອົງເຮົາໄດ້ເພິ່ງພາ
ພຣະອາຈາຣຍ໌ບໍ່ໄດ້ຄິດຕໍ່ເຕື້ອງ　　ຄະຣາວາດເຄຫາ
ໃຈປະສົງໃນທັມ　　ຕໍ່ອົງພຸດໂທເຈົ້າ
ໄດ້ຖະຫນອມຕົນເຂົ້າ　　ຄອງທັມຕັດກິເລດ
ລະເພດໂຍມບວດສ້າງ　　ພຣະທັມເຈົ້າໃຫ້ຈະເຣີນ
ທ່ານເພິ່ນເອົາໃຈຕັ້ງ　　ນຳຄວາມດີສອນສັ່ງ
ທັງບາບກັມລະເວັ້ນ　　ແນວຮ້າຍບໍ່ກະທຳ
ຕັ້ງແຕ່ໄວຍັງນ້ອຍ　　ຈົນເຖິງແກ່ພັນສາ
ຈະເຣີນເມດຕາທັມ　　ທຸກແລງວັນເຊົ້າ
ທ່ານໄດ້ເປັນເສົາຄ້ຳ　　ຫລັກສິນທັມກົງທ່ຽງ
ບໍ່ອຽງເອນທັ້ແທ້　　ຄອງທັມນັ້ນໃຫ້ເສື່ອມເສຍ

ນອກຈາກນັ້ນທ່ານຍັງສະສົມສ້າງ ພຣະເຈດີຫລາຍແຫ່ງ
ດ້ວຍຈິດໃຈແຜ່ກວ້າງ ປະສິງສ້າງແຕ່ສິ່ງດີ
ໂອກາດຕອນທ້າຍນີ້ ຂ້າຂ່ອຍນ້ອມສິ່ງພອນໄຊ
ຖວາຍແດ່ພຣະອາຈາຣຍ໌ບຸນທອງ ເທີດທູນພຣະຄຸນເຈົ້າ
ຂ້າຂ່ອຍນ້ອມພະນົມໄຫວ້ ເທວາພົມມະໂລກ
ທັງໂບກຂາຣະນີຍ່ານກວ້າງ ເທິງຟ້າຝາກສະຫວັນ
ຂໍຈົ່ງບັນດົນໃຫ້ ພຣະອາຈາຣຍ໌ອິງປະເສີດ
ຢ່າເກີດມີເຫດຮ້າຍ ໄປຫນ້າໃຫ້ຢູ່ດີ
ວັນນະສີໃສແຈ້ງ ຄອງທັມໃສສ່ອງ
ຊາວພຸດລາວພີ່ນ້ອງ ອາໄສເຈົ້າເພິ່ງພຣະອົງ ທ່ານເຮີຍ!

# ນ້ອມລະນຶກໃນຄຸນງາມຄວາມດີ

ຂອງ

ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌

ຜູ້ໃຫ້ແສງທັມ ສ່ອງສາຍທາງ

ໂດຍ: ດຣ. ທອງຄໍາ ອ່ອນມະນີສອນ

➡ ຕາເວັນວັນອູ່ແຈ້ງ ແສງສ່ອງປະກາຍສີ
ທຸກທີ່ເທິງທະຣັງດິນ ດ່ານແດນອຸດົມລົ້ນ
ຝົນຫລັ່ງລິນທາຣາທົ່ງ ປະສົງໂຣຍຣ່ຳໂລກ
ພຣະທັມດັບໂສກແຄ້ນ ໃຫ້ເຊົາແຫນັ້ນຫນ່ວງລະທົມ
➡ ດົມເນດຕາຊ່ວຍຄໍ້າ ຄູນໂລກສົດໃສ ທ່ານເອີຍ
ວິປະໄຊຍ໌ເຊັ່ງອາຈາຣຍ໌ ທ່ານຜູ້ເສຍສະລະແທ້
ພັດທະນາພາແກ້ ແນມແນມທາງປະເສີດ
ເກີດມາຊູຊາດເຊື້ອ ເຄືອເຫງົ້າຫນໍ່ພຸດໂທ ແທ້ນາ
➡ ສາຍອາໂປເປັ່ງທ້າງ ນະທີທັ່ງເທໄຫລ
ໄປສູ່ຄອນພະເພັງຟົດ ເຟືອດຟອງຟູມຟົ້ງ
ບໍ່ເຄີຍຫລົງໄຫລຂຶ້ນ ທວນກະແສຕະຫລົບຕ່າວ
ແຕ່ວ່າ ພຣະອາຈາຣຍ໌ບຸນທອງ ນໍາແສງທັມຕ່າວຂຶ້ນ
ທວນແກ້ງແກ່ງກະແສ ແທ້ໃດ!
➡ ກິ່ນຫອມດວງດອກໄມ້ ມາໄລຊຸ່ແສນດົງ
ຊ້ອນສົ່ງໂຊຍເຊີຍຊົມ ແລ້ວແຕ່ລົມຊິຊູນຕ້ອງ

ບໍ່ເຄີຍຊວນລະອອງຕ້ານ ຫອນກະແສສົນຜ່ານ
ແຕ່ວ່າ! ກຽດກິ່ນຫອມຂອງອາຈາຣຍ໌ ຜົນງານຊູສິ່ງຂຶ້ນ
ໃຫ້ຢືນປ້ານຜ່ານລົມ

➡ ນ້ຳຂອງກວ້າງຕໍ່ກວ້າງ ເປັນວັງວ່າງເວີນໃສ
ໄຫລເລິກລົ້ນລອຍລົງ ຕະຫລອດການໄກເຍີ້ນ
ຍັງບໍ່ສົມສະເຫມີເທົ້າ ລີໄຫຫົງທົ່ມສະອາດ
ປັນຍາຍານສະຫລາດໄດ້ ໃຈອາຈາຣຍ໌ເລີກລ້ຳ
ໄກກວ້າງກວ່າທະເລ

➡ ດວງໃຈທ່ານປະເສີດແທ້ ໃສສະອາດບໍລິສຸດ
ຜຸດຜ່ອງແຍງເຍືອງເຫັນ ເຫດການປະການດີຮ້າຍ
ດວງຈິດທົ່ງທົ່ມແຫນ້ນ ຫນັກໃນອານຸພາບ
ປາບຫມູ່ມານຫມີ່ນຫນ້າ ພັດທະນາຊາດກ້າວ
ໃຫ້ລາວນີ້ຮຸ່ງເຮືອງ

➡ ແຜ່ນດິນຈະອາດແຕ້ມ ສະຫລັກຂີດຂຽນລະນຶກ
ບັນທຶກພຽນແພງປະຫວັດ ກຽດຕິຄຸນອາຈາຣຍ໌ໄວ້
ໄຂຕຳນານເມື່ອຫນ້າ ປະຊາຊົນຈຳຈື່
ລືຊ່າດັງເດັ່ນກ້າ ພຣະອາຈາຣຍ໌ຊາໂຍນ
ແນວຫນໍ່ນາມຊື່ນີ້ ເປັນສີເຊື້ອຊາດປະຊາ
ແທ້ນາ

ເພີ່ນວ່າ !

➡ ສັງຂານຄົນມຸ່ນມ້າງ ສູນເສື່ອມເສຍສະຫລາຍ
ກາຍແຕກພັງທະລາຍມຸດ ມອດໄປແປນກ້ຽງ
ໂລກອອກສຽງຜະດຽງອ້າງ ສະດຸດີຄົນປະເສີດ
ລືເລີດນາມຊື່ກ້ອງ ຍ້ອງຍົກຫອມຮັກຫມັ້ນ
ນິລັນໄວ້ວ່າບໍ່ຕາຍ ແທ້ໃດ !

➡ ຂໍທ່ານ !

ເປັນກົກໂພກິ່ງແກ້ວ ແນວດອກດວງສະໄຫວ
ລຳໃຫຍ່ຍາວທະຍານສູງ ສອດດາວເດືອນຟ້າ
ແຜ່ກິ່ງສາຂາຫຸ້ມ ເງົາງາມງຸມເຫລື່ອມ
ເງື້ອມງ່າຢາຍຢາດນ້ຳ ພຣະທັມເກື້ອກ່ອນທຸກຄົນ
ຊອບແລ້ວ!

➡ ຂໍທ່ານ !

ສຸກຢູ່ສ້າງ ປະເທດຊາດຂັນແຂງ
ແຮງເຫືອມີພະລັງນຳ ສາດສະຫນາຈະເຣີນລ້ຳ
ລາວຈົດຈຳແນມນ້ອມ ຖະຫນອມຄຸນຄະນຶງຮອດ
ຍອດພຣະນັກຕໍ່ສູ້ ກູ້ກຽດກອດຊາດໄວ້
ຊູໃຈສູງສິ່ງກ້າ ບຸກຫນ້າຜ່າຢ່າຖອຍ
ຂະນ້ອຍທ້ອນ !

# ແດ່ຄົບຮອບວັນເກີດ ຜົດ ພັນສາ

ຂອງພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌

໑໔/໐໔/໑໙໔໐-໑໔/໐໔/໒໐໐໑

♥ ຜົດ ພັນສາ ວຽນບັນຈົບ ຄົບວັນເກີດ
ຜົດ ພັນສາ ສີປະເສີດ ໃນໃຈຊົນ
ຜົດ ພັນສາ ເສັຍສະລະ ອຸທິດຕົນ
ຜົດ ພັນສາ ເປັນຢາດຝົນ ຊຸ່ມແຜ່ນດິນ

♥ ອາຈາຣຍ໌ ເປັນແມ່ນ້ຳ ເພື່ອມັດສາ
ອາຈາຣຍ໌ ເປັນຜົນນາ ເພື່ອເມັດເຂົ້າ
ອາຈາຣຍ໌ ລອຍເດັ່ນຟ້າ ດັ່ງດວງດາວ
ອາຈາຣຍ໌ ສະກາວສ່ອງ ທວນທຽນທັມ

♥ ອາຈາຣຍ໌ ເປັນໂພເງິນ ເປັນໂພຄຳ
ໃບຮົ່ມງາມ ກ້ານກິ່ງຂຽວ ເພື່ອຊົນເພິ່ງ
ເປັນນາວາ ລ່ອງສົດ ຈອດຮອດເຖິງ
ສຸດເລີກເຊິ່ງ ຄຸນຄວາມດີ ພຣະອາຈາຣຍ໌

♥ ຜົດ ພັນສາ ສັ່ງຂານ ຄົບຂວບເຂົ້າ
ຍົກໃສ່ເກົ້າ ນິ້ນອມນົບ ຄຸນພຣະສີ
ໃຫ້ອາຈາຣຍ໌ ຢືນຢູ່ຍັງ ດັ່ງຄວາມດີ
ຫມື່ນໆປີ ສ້າງຄວາມດີ ເປັນນິຣັນ!...

ດາວວຽງ ບຸດນາໂຄ



ທ່ານ ພຣະຄຣຸອະນາວິໂຣ(ບຸນທອງ ວິປະໄຊຍ໌ ກ່າວບົດສະຫລູບການ ກໍ່ສ້າງວັດພູກິ່ງແກ້ວກອງມະນີສີຫັນຕຣາຈາຣຍ໌ ໃນວັນເປີດພິພິທະພັນ ວັນທີ ໔໔ ເດືອນ ໔ ຄ.ສ ໔໐໐໐



ທ່ານອ່ອນເນື້ອ ພົມມະຈັນ ເຈົ້າແຂວງໆຈໍາປາສັກ ທ່ານສົມສະຫນິດ ບຸດຕີວົງ ເຈົ້າເມືອງໆໂຂງ ທ່ານເຈນ ເຈົ້າເມືອງໆ ປາກຊ່ອງ ພ້ອມ ດ້ວຍຄະນະພັກຄະນະປົກຄອງເມືອງເຂົ້າຮ່ອມພິທີເປີດພິພິທະພັນວັດພູ ກິ່ງແກ້ວກອງມະນີສີຫັນຕຣາຈາຣຍ໌ ເມືອງໂຂງ ແຂວງຈໍາປາສັກ



ພຣະອາຈາຣຍ໌ສຸວັນ  ຈັນທະຣາຊ ປະທານ ອ.ພ.ສ ແຂວງຈຳປາສັກ
ພ້ອມດ້ວຍພຣະເຖຣານຸເຖຣະ ເຂົ້າຮ່ວມພິທີເປີດຫໍພິພິທະພັນວັດພູ



ພຣະອາຈາຣຍ໌ສຸວັນ  ຈັນທະຣາຊ ປະທານ ອ.ພ.ສ ແຂວງຈຳປາສັກ
ທ່ານອ່ອນເນື້ອ ພົມມະຈັນ ເຈົ້າແຂວງງຈຳປາສັກ ກຳລັງຕັດຜ້າເປີດ
ຫໍພິພິທະພັນ ວັດພູກິ່ງແກ້ວກອງມະນີ ວັນທີ ໒໔.໑.໒໐໐໐



ຄະນະສົງທີ່ຖືກນິມົນມາຮ່ວມພິທີເປີດຫໍພິພິທະພັນ
ພ້ອມດ້ວຍຄະຣາວາດຖ່າຍຮູບຮ່ວມກັນ ໒໔.໑.໒໐໐໐



ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ພ້ອມດ້ວຍສິດສານຸສິດ
ທອດກະຖິນທີ່ວັດສູນທະຣາຣາມ ບ້ານທ່າຫມາກເຫັບ
ວັດຂອງພຣະອາຈາຣຍ໌ຊາຄຳແດງ ຍານະວຸດໂທ



ພິທີສົມໂພດພຣະພຸດທະຮູບ ຂອງພະນະທ່ານຄໍາໄຕ ສີພັນດອນ
ທີ່ວັດພູກິ່ງແກ້ວກອງມະນີສີທັນຕຣາຈາຣຍ໌ ວັນທີ ໙.໑໑.໙໗




ຄະນະສິດສານຸສິດ ພຣະຄຣູອະນາວິໂຣ ຮ່ວມກັນເຮັດບຸນວັນຄ້າຍວັນ
ເກີດ ຄົບຮອບ ໖໐ ປີ ໔໐ ພັນສາ ວັນທີ ໒໔.໑.໒໐໐໐



ພິທີເປີດຂົວຂ້າມນ້ຳຂອງ ມິດຕະພາບລາວ-ຍີ່ປຸ່ນ ວັນທີ ໔.໘.໔໐໐໐



ພຣະອາຈາຣຍ໌ໃຫຍ່ ພ້ອມດ້ວຍຄະນະສົງແຂວງຈຳປາສັກ ທຳພິທີເປີດ
ຂົວຂ້າມແມ່ນ້ຳຂອງ



ພຣະອາຈາຣຍ໌ບຸນທອງ  ວິປະໄຊຍ໌ ສະແດງພຣະທັມມະເທສນາ
ທີ່ວັດສັນຕິພາບ ເມືອງແປກ ແຂວງຊຽງຂວາງ ຕາມການນິມົນ
ຂອງທ່ານນາງບຸນເພັງ ມູນໂພໄຊ ເຈົ້າແຂວງງຊຽງຂວາງ



ຖ່າຍຮູບຮ່ວມກັບຄະນະສົງແຂວງຊຽງຂວາງຕອນໄປປະຕິບັດສາສນາ
ກິດ  ເປີດຕລາດ ທີ່ເມືອງແປກ ແຂວງຊຽງຂວາງ ປີ ຄ.ສ ໒໐໐໐



ໂປດຍາດໂຍມລາວ ທີ່ສະຖານທູດລາວປະຈຳບາງກອກ




ຖ່າຍຮູບຮ່ວມກັບຄະນະສົງ ທ່ານເຈົ້າແຂວງ ແລະສັດທາຍາດໂຍມ
ແຂວງຊຽງຂວາງ ທີ່ວັດສັນຕິພາບ ຕອນໄປປະຕິບັດສາສນາກິດ

# ຊີວະປະຫວັດຫຍໍ້

## ຂອງ: ພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌)

ພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌) ທ່ານເກີດເມື່ອ ວັນອາທິດ ກົງກັບວັນທີ ໑໔ ເດືອນກຸມພາ ປີ ພ.ສ. ໒໔໗໔ ປີ ຄ.ສ. ໑໙໔໐ ເດືອນຍີ່ ປີມະເສງ ເປັນບຸດຜູ້ທີສອງຂອງພໍ່ ຈານພາ ວິປະໄຊຍ໌ ແມ່ແກ້ວ ວິປະໄຊຍ໌ ເກີດທີ່ບ້ານຫົວດອນຊ້າງໄພ ໂພນກ່າມ ຕາແສງບ້ານຫ້ວຍ ເມືອງໂຂງ ແຂວງຈຳປາສັກ ມີພີ່ນ້ອງຮ່ວມທ້ອງແມ່ດຽວກັນ ໓ ຄົນຄື:

(໑). ຈານຄຣູເພັງ ວິປະໄຊຍ໌ ຍັງມີຊີວິດຢູ່

(໒). ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌

(໓). ນາງວັນຄຳ ວິປະໄຊຍ໌ ເສັຍຊີວິດແລ້ວ

## ຊີວິດໃນປະຖົມມະໄວ

ເມື່ອທ່ານພຣະອາຈາຣຍ໌ຢູ່ໃນປະຖົມມະໄວ ອາຍຸຂອງທ່ານໄດ້ ໗ ປີ ພໍ່ແມ່ຂອງທ່ານກໍໄດ້ນຳໂຕໄປຝາກເຂົ້າໂຮງຮຽນໂພນແສງ ບ້ານຫົວດອນຊ້າງໄພໂພນກ່າມ ເມືອງໂຂງ ແຂວງຈຳປາສັກ ທ່ານພຣະອາຈາຣຍ໌ ເປັນເດັກນ້ອຍຊາວບ້ານທຳມະດາທີ່ມີຄວາມອົດທົນ ຂະຫຍັນຫມັ່ນພຽນ ຕໍ່ການສຶກສາຮ່ຳຮຽນກວ່າເດັກນ້ອຍຄົນອື່ນໆ ເປັນຢ່າງດີ ບໍ່ວ່າເລື່ອງອັນໃດ ເປັນຜູ້ທີ່ເວົ້າແທ້ເຮັດຈິງຈັງຕໍ່ຫນ້າທີ່ວຽກງານທຸກຢ່າງ ຈົນສາມາດສອບເສັງຊຸ້ນໄດ້ຕາມລຳດັບ.

ປີ ຄ. ສ ໑໙໔໗-ຄ.ສ ໑໙໕໔ ຮຽນຈົບຊັ້ນປະຖົມບໍຣິບູນ ຈຶ່ງໄດ້ອອກຊ່ວຍວຽກພໍ່ແມ່

## ເຂົ້າຮົ່ມຜ້າກາສາວະພັດ

ເມື່ອອາຍຸຂອງທ່ານພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ໄດ້ ໑໙ ປີ ທ່ານໄດ້ເຂົ້າບັນພະຊາເປັນສາມະເນນ ຢູ່ທີ່ສຳນັກວັດຊ້າງແກ້ວກຳແພງເພັດ ບ້ານດອນຊ້າງໄພໂພນກ່າມ ເມືອງໂຂງ ແຂວງຈຳປາສັກ ໂດຍມີພຣະມະຫາສະຫລວຍ ປະກະມາ ເປັນພຣະອຸປັດຊາ.

## ອຸປະສົມບົດເປັນພຣະພິກຂຸ

ເມື່ອອາຍຸຂອງທ່ານພຣະອາຈາຣຍ໌ ໄດ້ ໒໐ ປີ ບໍຣິບູນແລ້ວ ທ່ານກໍໄດ້ທຳການອຸປະສົມບົດເປັນພຣະພິກຂຸໃນເດືອນ ໗ ເພັງ (ແປດສອງຫົນ) ກົງກັບວັນພຸດ ເດືອນມິຖຸນາ ປີ ຄ.ສ ໑໙໕໙ ທີ່ພັດທະສີມາວັດຊ້າງແກ້ວກຳແພງເພັດໂພນກ່າມ ເມືອງໂຂງ ແຂວງຈຳປາສັກ ໂດຍມີ: ພຣະຄຣູວິສຸດທິໂສດາ(ຄຳຕັນ)ວັດບາງຄວັດ ເປັນພຣະອຸປັດຊາ ພຣະຄຣູຄຳ ວັດຫີນສິ່ວ ເປັນພຣະກັມມະວາຈາຈານ ພຣະມະຫາສະຫລວຍ ປະກະມາ ເປັນພຣະອະນຸສາວະນາຈານ ພ້ອມດ້ວຍຄະນະສົງ ໒໐ ອົງ.

## ເລີ່ມເຂົ້າສຶກສາພຣະປະຣິຍັດຕິທັມ

ປີ ຄ.ສ ໑໙໖໐ ເຂົ້າຮຽນທີ່ສຳນັກຮຽນວັດອຳພາວັນ ບ້ານລົບປາດີກາງ ສອບໄດ້ນັກທັມຊັ້ນຕຣີ

ປີ ຄ.ສ ໑໙໕໑ ເຂົ້າຮຽນທີ່ສຳນັກຮຽນວັດສາແກ້ວປະທຸມທອງ ບ້ານຫາດຂີ້ຄວາຍ ສອບໄດ້ນັກທັມຊຸ້ນໂທ

ປີ ຄ.ສ ໑໙໕໔ ເຂົ້າຮຽນທີ່ສຳນັກຮຽນວັດມະຫັນຕະວິຫານ ສອບໄດ້ນັກທັມຊຸ້ນເອກ

ຫລັງຈາກນັ້ນທ່ານພຣະອາຈາຣຍ໌ກໍໄດ້ສຶກສາປາລີໄວຍາກອນ ຈົນສາມາດສອບປາລີໄດ້ປະໂຫຍກ ໖ ໃນສະໄຫມນັ້ນໄດ້ເປັນ ພຣະມະຫາບຸນທອງ ວິປະໄຊຍ໌

ຫລັງຈາກພຣະອາຈາຣຍ໌ ໄດ້ສຶກສາພຣະປະຣິຍັດຕິທັມຈົບລົງແລ້ວ ຮູ້ທິດທາງທີ່ເດີນຕໍ່ໄປ ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ຈຶ່ງມີຄວາມປາຖະນາຈະສຶກສາທາງດ້ານການປະຕິບັດວິປັດສະນາກັມມະຖານ ພໍຮອດເດືອນ ໗ ຂຶ້ນ ໑໐ ຄໍ່າ ປີ ຄ.ສ ໑໙໕໖ ພຣະອາຈາຣຍ໌ໄດ້ຕັດສິນໃຈໄປຮຽນຫລັກວິປັດສະນາກັມມະຖານ

ໂດຍມອບຕົວເປັນສິດຂອງ ພຣະອາຈາຣຍ໌ຊາຄໍາແດງ ຍານະວຸດໂທ ເຈົ້າສຳນັກວັດສູນທະຣາຣາມ ບ້ານທ່າຫມາກເຫັບ ເມືອງໂຂງ ແຂວງຈໍາປາສັກ ໄດ້ຝຶກແອບປະຕິບັດຕາມແນວທາງຂອງທ່ານ ພ້ອມທັງຮຽນຫລັກປະຣິຍັດຕິທັມ ຄືຮຽນພຣະອະພິທັມເບື້ອງຕົ້ນນໍາທ່ານ ພຣະອາຈາຣຍ໌ຊາຈູມ ຜູ້ເປັນສິດຂອງທ່ານ ພຣະອາຈາຣຍ໌ໃຫຍ່ມະຫາປາລ ອານັນໂທ ອະດີດເຈົ້າສຳນັກວັດມະຫາພຸດທະວົງສາປາຫລວງ ນະຄອນວຽງຈັນ ເຂົ້າຮຽນພົ້ນການ ພຣະອະພິທັມໄດ້ ໙ ເດືອນເຕັມ ຮຽນເບື້ອງຕົ້ນເລື່ອງ ຈິດ ເຈຕະສິກ ຮູບ ນິບພານ.

# ກັບຖິ່ນໂຜດຍາດໂຍມ

ທາງຍາດໂຍມຊາວບ້ານ ແລະພຣະເຖຣານຸເຖຣະ ໄດ້ເຫັນພຣະອາຈາຣຍ໌ທຽວໄປທຽວມາຫລາຍ ຈຶ່ງນິມົນໃຫ້ໄປຢູ່ທີ່ ວັດໂພນກ່າມ ແລະແຕ່ງຕັ້ງໃຫ້ເປັນເຈົ້າອະທິການວັດ ໃນປີ ຄ.ສ ໑໙໕໓ ສະໄຫມທີ່ພຣະອາຈາຣຍ໌ຈຳພັນສາຢູ່ທີ່ວັດຊ້າງໄພໂພນກ່າມ ໄດ້ເທດສອນອົບຮົມຍາດໂຍມບໍ່ໄດ້ຂາດ ຕັ້ງແຕ່ນັ້ນມາພຣະທັມຄຳສັ່ງສອນຂອງອົງສົມເດັດພຣະສັມມາສັມພຸດທະເຈົ້າ ກໍໄດ້ເລີ່ມມີຂຶ້ນແກ່ຊາວບ້ານດອນຊ້າງໄພ ທີ່ຖືກປິດບັງມາເປັນເວລາເຫິງນານ ໄດ້ກະຈ່າງແຈ້ງອອກໄປ ເປັນແສງສະຫວ່າງແຫ່ງຊີວິດທຸກທ່ານທຸກຄົນ ນັບວ່າພຣະອາຈາຣຍ໌ໄດ້ເຮັດວຽກເພື່ອຊາດ ເພື່ອສັງຄົມ ຈົນບໍ່ສາມາດທີ່ຈະພັນລະນາໃນຫນັງສືເຫລັ້ມນີ້ໄດ້ເລີຍ.

ຕໍ່ມາ ພຣະອາຈາຣຍ໌ກໍໄດ້ນຳພາຍາດໂຍມສາທຸຊົນສະລະຊັບຜູ້ລະເລັກຜູ້ລະນ້ອຍຕາມໄດ້ຕາມມີ ສ້າງຫໍໄຕກາງສະນ້ຳຂຶ້ນຫນຶ່ງຫລັງໃນປີ ຄ.ສ ໑໙໕໓.

ສ້າງກຸຕິນ້ອຍຫນຶ່ງຫລັງ ສາລາຍາວຫນຶ່ງຫລັງຫໍຣະຄັງຫນຶ່ງຫລັງ ລວມມູນຄ່າທັງຫມົດໃນການກໍ່ສ້າງຄັ້ງນີ້ (ສິບເກົ້າລ້ານກີບ) ໃນສະໄຫມນັ້ນ ເຖິງແມ່ນວ່າ ວຽກງານຈະຫນັກເບົາປານໃດກໍຕາມ ທ່ານພຣະອາຈາຣຍ໌ກໍບໍ່ໄດ້ປະລະເລີຍ ໃນການປະພຶດປະຕິບັດທັມຈະທຸກຈະຍາກປານໃດກໍຕາມ ຝົນຈະຕົກແດດຈະອອກກໍບໍ່ຫວັ່ນໄຫວຖ້າຟ້າບໍ່ທັບຖະຫລົ່ມ ດິນບໍ່ທັບສະຫລາຍຈະບໍ່ປະລະຈາກການປະຕິບັດ

ທັມເປັນອັນຊາດ ຍັງສືບຕໍ່ມູນເຊື້ອເກົ່າທີ່ໄດ້ຮຽນມາຢູ່ ໃນ ປີປາຍຈົບ ມາຮອດປີ ໑໙໗໔ ຂຶ້ນ ໑໐ ຄ່ຳ ເດືອນ ໓ ກົງກັບ ວັນພຸດ ເດືອນ ກຸມພາ ປີ ໑໙໗໔ ທາງຄະນະສົງ ແຂວງສີພັນດອນ ໂດຍມີ:

ພຣະຄຣູຫລັກຄໍາສີທັມຕຣາຈາຣຍ໌(ແກ້ວສັບປຸນໂຍ)ເຈົ້າຄະນະ ແຂວງສີພັນດອນ

ພຣະຄຣູຫລັກຄຳທັມມະທະໂຣ(ທອງ ແກ້ວວິຈິດ) ເຈົ້າຄະນະ ເມືອງງ ໂຂງ ແຂວງສີພັນດອນ

ພຣະອາຈາຣຍ໌ຄຣູເພັງ ຊາພັກດີ ເຈົ້າຄະນະຕາແສງບ້ານຫ້ວຍ ເມືອງໂຂງ ພ້ອມດ້ວຍອາດຍາເຈົ້ານາຍ

ໂດຍມີ: ພຣະຍາເພັງ ສຸວັນຣາສີ

ພຣະຍາກິແກ້ວ ກິດຕິຄຸນ ເຈົ້າແຂວງສີພັນດອນ

ພຣະຍາຫລວງແຫວນ ອະໄພ ເຈົ້າເມືອງງໂຂງ

ພຣະຍາເຄືອບ ສີສຸຣາດ ອະດີດເຈົ້າເມືອງງໂຂງ

ທັງຫມົດນີ້ໄດ້ໄປອາຣາດທະນານິມົນ ພຣະອາຈາຣຍ໌ບຸນທອງ ວິປະໄຊຍ໌ ມາສ້າງວັດພຸດທະນິມິດເຈດີສີມະຫາໂພເຄືອບສີສຸຣາດ ທີ່ ຕັ້ງຢູ່ ສາລາຫານເດີ່ນຍິນ ເມືອງໂຂງ ໄດ້ນຳພາພຣະສົງສາມະເນນ ແລະຍາດໂຍມຊາວເມືອງໂຂງສ້າງດັ່ງມີລາຍລະອຽດດັ່ງນີ້:

(໑). ສ້າງກຸຕິຫນຶ່ງຫລັງ

(໔). ສາລາແຄມທາງຫນຶ່ງຫລັງ

(໓). ສາລາຕ້ອນຮັບພຣະສົງທີ່ມາຈາກທິດທັງສີ່ຫນຶ່ງຫລັງ

(໔). ທ່າຣະຄັງຫນຶ່ງຫລັງ ໂດຍສ້າງກັບທ່ານທອງເຫຼື່ອມ ນາງພູນສະຫວັດ ສວັນຣາສີ.

(໕). ຂຸດນ້ຳສ້າງສອງຂຸມ ຫ້ອງອະນາໄມສອງຫລັງ.

ລວມມູນຄ່າໃນການສ້າງວັດດັ່ງກ່າວນີ້ຫມົດທຶນ ໔໓.໗໘໓.໕໕໐ ກີບ ( ສີ່ສິບສາມລ້ານເຈັດແສນແປດສິບສາມພັນຫ້າຮ້ອຍຫ້າສິບກີບ).

## ດ້ານຜົນງານສ້າງສາວັດວາພຸດທະສາສນາ
## ໃນທົ່ວເຂດເມືອງໂຂງ ແຂວງຈຳປາສັກ

(໑).ວັດສ້າງແກ້ວກຳແພງເພັດ ຫມົດເງິນ: ໑໙ ລ້ານປາຍ

(໒).ວັດພຸດທະນິມິດເຈດີສີມະຫາໂພ ສາລາທານເດີ່ນຍິນ ເມືອງໂຂງ ໔໓ ລ້ານປາຍ.

(໓).ວັດພອງແກ້ວອະຣຸໂນໄທບ້ານກາງໂຂງ ໑໐໐ກວ່າລ້ານ.

(໔).ວັດພູກິ່ງແກ້ວກອງມະນີຫາດຊາຍຄູນ໑໐໐ລ້ານກວ່າກີບ.

(໕).ນຳພາພຣະສົງສາມະເນນ ແລະຍາດໂຍມສ້າງສາລາໂຮງທັມ ທີ່ວັດໂພນການ ຫມົດທຶນນະຊັບເກົ້າລ້ານກວ່າກີບ.

(໖).ນຳພາພຣະສົງສາມະເນນ ແລະສັດທາຍາດໂຍມວັດໂພນສີແກ້ວລົບປະດິຈິກ ສ້າງສາລາໂຮງທັມຫມົດເງິນ (ຊາວລ້ານກີບ)

(໗).ນຳພາພຣະສົງສາມະເນນ ແລະສັດທາຍາດໂຍມ ວັດສີມຸງຄຸນບຸ່ງແກ້ວ ບ້ານເວີນຂາວ ສ້າງພັດທະສີມາໝົດທຶນ ໘.໐໐໐.໐໐໐ (ແປດລ້ານກວ່າກີບ)

(໘).ນຳພາພຣະສົງສາມະເນນ ແລະອອກຍາດໂຍມສ້າງວັດມະຫິນທະຣາຣາມ ບ້ານຄອນໃຕ້ ເຂດບ້ານຄອນ ເມືອງໂຂງ ແຂວງຈຳປາສັກ ສ້າງສາລາໂຮງທັມໝົດເງິນ ໒໐.໐໐໐.໐໐໐ (ຊາວລ້ານກວ່າກີບ)ໂດຍແມ່ນສັດທາຂອງຊາວບ້ານຄອນ ທີ່ໄດ້ທຳມາຫາກິນຢູ່ຕ່າງປະເທດສົມທົບກັບສັດທາຊາວເມືອງໂຂງ ບ້ານຄອນ ດອນເດດ.

(໙).ປຸກສ້າງໂຮງຮຽນສິລະທັມຂຶ້ນໜຶ່ງຫລັງ ມູນຄ່າ ໕ ລ້ານກວ່າກີບ ໂຕະຕັ່ງຄົບຊຸດ ໒໐ ຊຸດ. ປີ ໑໙໙໗ ປຸກສ້າງເຮືອນຜະລິດຢາພື້ນເມືອງສົງ ປກກຸຕິຮັບຕ້ອນພຣະສົງທີ່ມາຈາກທິດທັງສີ່ ແລະກໍ່ສ້າງອ່າງເກັບນ້ຳຂະໜາດໃຫຍ່ໜຶ່ງໜ່ວຍ ເຮັດສວນປູກຢາພື້ນເມືອງລາວ ປູກຕົ້ນໄມ້ອຸດສາຫະກັມ ຂຸດສະເອົານ້ຳ ໑໐ ຄູນ ໑໕ ເພື່ອທົດຕົ້ນໄມ້ທີ່ເປັນຢາພື້ນເມືອງ(ສະໝຸນໄພ)ເພື່ອຮັບໃຊ້ປິ່ນປົວພຣະສົງສາມະເນນ ແລະພຸດທະສາສະນິກກະຊົນລາວບັນດາເຜົ່າ ຜົນງານແລະໄຊຊະນະທີ່ມີໜ້າທີ່ຕໍ່ຊາດ ແລະພຸດທະສາສນາ

ນີ້ແມ່ນຜົນງານການຊຸກຊູອນສັດທາຍາດໂຍມ ທັງພາຍໃນແລະຕ່າງປະເທດປະກອບສ່ວນເຂົ້າໃນການ ສ້າງສາວັດວາພຸດທະສາສນາ ຍ້ອນຄຸນງາມຄວາມດີ ສັດທາຍາດໂຍມຈິ່ງໄດ້ຈັດພິທີ ເຖຣາພິເສກ ທົດສົງແຖມສົມພານ ໑໑ ເທື່ອ ອຸປະສົມບົດບວດກຸນລະບຸດ

ໃຫ້ເປັນພຣະສົງໄດ້ ໑໓໔໐ອົງ ບັນພະຊາເປັນສາມະເນນ ໑໗໓໘ ອົງ ຊ່ວຍເຫລືອປິ່ນປົວພຣະສົງສາມະເນນ ແລະອອກຕົນຍາດໂຍມ ທາງດ້ານຄຸນນະທັມ ສົມທົບກັນກັບຢາພື້ນເມືອງ ພຣະສົງ ແລະອອກ ຕົນຍາດໂຍມ ທີ່ເຂົ້າຮັບການປິ່ນປົວ ແລະຫາຍດີຈາກ ພະຍາດແທ້ມີ ໔໓໕໘ ອົງ/ຄົນ ຫລຸດຜ່ອນ ໔໑໓໐ ອົງ/ຄົນ ເອົາຄົນອອກຈາກ ການເຊື່ອຖືຜີສາງໄດ້ ໓໘ ຄອບຄົວ ເອົາຄົນອອກຈາກການກິນເຫລົ້າ ໄດ້ ໔໓໐ ຄົນ.

## ດ້ານການປົກຄອງ

ປີ ຄ.ສ ໑໙໗໓ ທາງຄະນະສົງເມືອງໂຂງ ແຂວງສີພັນດອນ ໄດ້ມີມະຕິແຕ່ງຕັ້ງໃຫ້ທ່ານພຣະອາຈາຣຍ໌ເຜີຍແຜ່ສິລທັມປະຈໍາແຂວງ.

ຫລັງຈາກປ່ຽນລະບອບການປົກຄອງແລ້ວ ພຣະອາຈາຣຍ໌ກໍ ໄດ້ຮັບໜ້າທີ່ດັ່ງຕໍ່ໄປນີ້:

ປີ ຄ.ສ ໑໙໗໕ ກອງປະຊຸມໃຫຍ່ຜູ້ແທນພຣະສົງແຂວງ ຈໍາປາສັກ ທ່ານພຣະອາຈາຣຍ໌ໄດ້ ຮັບແຕ່ງຕັ້ງໃຫ້ເປັນຄະນະ ອ.ພ.ສ ເມືອງໂຂງ ມີໜ້າທີ່ຮັບຜິດຊອບເຜີຍແຜ່ສິລະທັມໃນທົ່ວເມືອງ

ປີ ຄ.ສ ໑໙໗໗ ທາງຄະນະສຶກສາສົງແຂວງ ນິມົນໃຫ້ພຣະ ອາຈາຣຍ໌ໄປບໍາລຸງວິຊາເລກຄະນິດສາດ ພາສາອັງກິດ ເປັນເວລາ ๖ ເດືອນເຕັມ.

ປີ ຄ.ສ ໑໙໗໘ ຖືກແຕ່ງຕັ້ງໃຫ້ເປັນອາຈາຣຍ໌ ສອນປະຈໍາ ໂຮງຮຽນມັດທະຍົມສົງ ເມືອງໂຂງ ໓ ປີ.

ປີ ຄ.ສ ໑໙໗໙ ຄະນະກັມມະການແນວລາວສ້າງຊາດແຂວງຈຳປາສັກ ໄດ້ອາຣາດທະນານິມົນທ່ານພຣະອາຈາຣຍ໌ເຂົ້າຮ່ວມກອງປະຊຸມ ກອງປະຊຸມເຫັນດີແຕ່ງຕັ້ງໃຫ້ເປັນຄະນະກັມມະການແນວລາວສ້າງຊາດແຂວງຈຳປາສັກ ຮັບຜິດຊອບສອງຕົວເມືອງຄື: ເມືອງໂຂງແລະເມືອງມຸນລະປະໂມກ ເພື່ອເຜີຍແຜ່ວຽກງານພຣະພຸດທະສາສນາແລະວຽກງານແນວລາວສ້າງຊາດ.

ປີ ຄ.ສ ໑໙໗໙ ປີດຽວກັນນີ້ ຄະນະສຶກສາສິງແຂວງຈຳປາສັກ ໄດ້ແຕ່ງຕັ້ງໃຫ້ທ່ານພຣະອາຈາຣຍ໌ ເປັນກັມມະການຕ້ານໄພລົບລ້າງການກືກຫນັງສື ໃຫ້ແກ່ປະຊາຊົນໃນທົ່ວເຂດເມືອງໂຂງສີບສາມຕາແສງ.

ໄດ້ລົງຈັດຕັ້ງຄຣູສອນປະຊາສຶກສາ ພ້ອມທັງເປີດໂຮງຮຽນປະຊາສຶກສາ ເປັນເວລາ ໔ ເດືອນຈຶ່ງສຳເລັດ ແລະໄດ້ເຜີຍແຜ່ກົດລະບຽບການປົກຄອງ ໂຄງການດຳເນີນງານຂອງອົງການພຸດທະສາສະນາສັມພັນລາວທັງສອງຕົວເມືອງຄື:ເມືອງໂຂງແລະເມືອງມຸນລະປະໂມກ.

ປີ ຄ.ສ ໑໙໘໐ ກອງປະຊຸມໃຫຍ່ຜູ້ແທນສົງທົ່ວປະເທດໄດ້ເລືອກຕັ້ງໃຫ້ທ່ານພຣະອາຈາຣຍ໌ເປັນ ຄະນະກັມມະການສູນກາງອົງການພຸດທະສາສະນາສັມພັນລາວ ຮັບຜິດຊອບເຜີຍແຜ່ວຽກງານສິລະທັມທາງພຸດທະສາສະນາ ປະຈຳແຂວງຈຳປາສັກ.

ປີ ຄ.ສ ໑໙໙໙ ກອງປະຊຸມໃຫຍ່ຄະນະສົງຄັ້ງທີ ໔ ໄດ້ເລືອກຕັ້ງໃຫ້ທ່ານພຣະອາຈາຣຍ໌ເປັນຄະນະປະຈໍາ ອ.ພ.ສ ແຂວງ ແຂວງຈໍາປາສັກ ແລະເປັນປະທານ ອ.ພ.ສ ເມືອງໂຂງ.

ພຣະຄຣູອະນາວິໂຮ (ບຸນທອງ ວິປະໄຊຍ໌) ຫລືອາຈາຣຍ໌ພໍ່ຂອງບັນດາສິດສານຸສິດທັງຫລາຍ ວ່າໂດຍນໍ້າໃຈ ແລະອັດທະຍາໄສອັນແທ້ຈິງແລ້ວ ພຣະອາຈາຣຍ໌ເປັນຜູ້ມີເມດຕາທັມສູງ ມີຄວາມຮັກ ມີຄວາມຫ່ວງໃຍໃນເຫລົ່າສິດທຸກໆຖ້ວນຫນ້າ ທັງພຣະພິກຂຸສາມະເນນ ແລະສິດຄະຣາວາດທີ່ໄດ້ເພິ່ງພາອາໄສປາຣະມີຂອງທ່ານ ທ່ານເປັນຜູ້ທີ່ບໍ່ຮັກບັງຊັງບໍ່ງຽງ ສິດທັງຫລາຍເຫັນແລ້ວວ່າທ່ານພຣະອາຈາຣຍ໌ມີ ຄວາມເມດຕາ ມີຄວາມຮັກແພງຫ່ວງໃຍໃນສິດຂອງຕົນສະເຫມີຕົ້ນສະເຫມີປາຍ ໃນການປົກຄອງສິດນັ້ນ ທ່ານພຣະອາຈາຣຍ໌ຈະໃຊ້ຢູ່ສອງວິທີການໃຫຍ່ຄື: ວິທີທີຫນຶ່ງຄືປາບປາມ ສ່ວນວິທີທີສອງຄືອ່ອນໂຍນ (ໃຊ້ທັງພຣະເດດແລະພຣະຄຸນ) ຄວບຄູ່ກັນໄປ.

ຖ້າສິດຄົນໃດຢູ່ໃຕ້ການປົກຄອງມີຄວາມດື້ດ້ານ ບໍ່ເຊື່ອຟັງວ່າຍາກສອນຍາກ ຫລືຂັດຕໍ່ຄໍາສັ່ງສອນບໍ່ໂຄຣົບລະບຽບວິໄນກົດຫມາຍບ້ານເມືອງ ຫລືນການພະນັນ ຕິດອະບາຍຍະມຸກຕ່າງໆ ທ່ານກໍຈະເອົາບິດຄະຣາວາດສະຫັມມາເທດສອນ ຖ້າທ່ານສອນແລ້ວບໍ່ປະຕິບັດຕາມທ່ານ ທ່ານພຣະອາຈາຣຍ໌ກໍຈະໃຊ້ວິທີການປາບປາມເພື່ອໃຫ້ຄົນນັ້ນສໍານຶກໄດ້ ຖ້າພຣະເນນ ຫລືຄະຣາວາດຜູ້ໃດຢູ່ໃຕ້ການປົກຄອງຂອງທ່ານປະພຶດປະຕິບັດຖືກຕ້ອງຮູ້ ແລະເຂົ້າໃຈໃນ

ໜ້າທີ່ ທີ່ທ່ານໄດ້ມອບໝາຍໃຫ້ນັ້ນ ແລ້ວປະຕິບັດໜ້າທີ່ນັ້ນໃຫ້ສຳເລັດລຸລ່ວງຮຽບຮ້ອຍດ້ວຍດີ ທ່ານພຣະອາຈາຣຍ໌ ກໍ່ຈະຍົກຍ້ອງສັນລະເສີນ ແລະເມດຕາເອັນດູ ສົງເຄາະອະນຸເຄາະດ້ວຍດີ.

## ເປັນຫ່ວງໃນເຂດປົກຄອງ

ພຣະຄຣູອະນາວິໂຣ ໄດ້ໃຫ້ຄວາມສຳຄັນກັບວຽກງານທາງຣັດຖະການສົງທີ່ສຸດ ຫລັງຈາກທ່ານໄດ້ເຜີຍແຜ່ເອກະສານຄຳສັ່ງຂອງແຂວງ ແລະຂອງສູນກາງອົງການພຸດທະສາສະນາສັມພັນລາວ ແລ້ວທ່ານພຣະອາຈາຣຍ໌ກໍ່ບໍ່ໄດ້ນິ້ງເສີຍກັບວຽກງານດັ່ງກ່າວ ພະຍາຍາມຕິດຕາມສອດສ່ອງເບິ່ງແຍງຢູ່ຕະຫລອດເວລາ ບອກເຕືອນເຈົ້າອະທິການວັດແຕ່ລະວັດໃນເຂດປົກຄອງຂອງທ່ານໃຫ້ປະຕິບັດວຽກງານຕາມນະໂຍບາຍຂອງພັກ-ຣັດ ແລະອົງການພຸດທະສາສະນາເພື່ອໃຫ້ມີປະສິດທິພາບດີຂຶ້ນກວ່າແຕ່ເກົ່າ.

ທ່ານພຣະອາຈາຣຍ໌ ເປັນຜູ້ມີນະໂຍບາຍທີ່ດີໃນການບໍຣິຫານຄະນະສົງ ໃນການປະຊຸມແຕ່ລະຄັ້ງນັ້ນ ທ່ານພຣະອາຈາຣຍ໌ຈະເນັ້ນໜັກ ແລະໃຫ້ຄວາມສຳຄັນກັບເລື່ອງເຫລົ່ານີ້ຄື:

໑). ເລື່ອງພຣະທັມວິໄນ ແລະກົດລະບຽບຂອງອົງການພຸດທະສາສະນາສັມພັນລາວ.

໔. ເພື່ອຄວາມສາມັກຄີ ແລະຄວາມເປັນປຶກແຜ່ນໜັ້ນຄົງຂອງຄະນະສົງ.

ຈ. ເພື່ອໃຫ້ຄະນະສົງໃນເຂດປົກຄອງຂອງທ່ານໄດ້ຮູ້ ຈັກຄຸ້ນເຄີຍກັນ ໄດ້ຮ່ວມແລກປ່ຽນ ຄວາມຄິດຄວາມເຫັນເຊິ່ງກັນແລະກັນ.

ໃນໂອກາດທີ່ທ່ານພຣະອາຈາຣຍ໌ໃຫຍ່ເປີດ ແລະປິດກອງປະຊຸມແຕ່ລະຄັ້ງນັ້ນ ທ່ານພຣະອາຈາຣຍ໌ຈະເນັ້ນຫນັກໃຫ້ມີການເຂັ້ມງວດກວດຂັນ ສອດສ່ອງເບິ່ງແຍງພຣະພິກຂຸສາມະເນນໃນເຂດປົກຄອງຂອງທ່ານໃຫ້ເຄັ່ງຄັດໃນພຣະທັມວິໄນ ຮັກສາກົດລະບຽບຂອງຫມູ່ຄະນະ ແລະເນັ້ນເລື່ອງຄວາມສະຫມັກສະຫມານສາມັກຄີຮັກກັນເຫມືອນລູກພໍ່ແມ່ດຽວກັນ ທ່ານພຣະອາຈາຣຍ໌ຈະສອນທຸກຢ່າງແກ່ສິດ

ເຊັ່ນວ່າ ສອນໃຫ້ເຂົ້າໃຈວິທີການດຳເນີນຊີວິດໃນທາງທີ່ດີ ບາງຄົນອາດເຂົ້າໃຈຜິດໄດ້ ແຕ່ຖ້າເຮົາຫລຽວໄປອີກມູມຫນຶ່ງ ຄືທ່ານພຣະອາຈາຣຍ໌ມີແນວຄວາມຄິດດັ່ງນີ້:

- ເພື່ອຊ່ວຍໃຫ້ມະນຸດທີ່ເປັນເພື່ອນຮ່ວມເກີດ ແກ່ ເຈັບຕາຍ ດ້ວຍກັນເປັນຄົນດີ ຂອງສັງຄົມ ເລື່ອງທີ່ຜ່ານໄປ ແລ້ວກໍໃຫ້ຜ່ານໄປ ສິ່ງທີ່ຈະມາເຖິງໃນເບື້ອງຫນ້າກໍຈະໃຫ້ເຂົາລະມັດລະວັງແລະໄດ້ຕັ້ງໃຈສ້າງຄຸນງາມຄວາມດີ ບໍ່ໃຫ້ໄປມົ້ວສຸມໃນສິ່ງທີ່ບໍ່ດີບໍ່ງາມ

-ນັບເປັນການຊ່ວຍເຫລືອຄົນທີ່ຈະໃກ້ເສັຍຄົນ ໃຫ້ໄດ້ສຳນຶກຕົນ ແລະຮູ້ເປົ້າຫມາຍຂອງການທີ່ໄດ້ເກີດມາເປັນມະນຸດ.

-ເປັນການຊ່ວຍເຫລືອຄົນທີ່ດີຢູ່ແລ້ວ ໃຫ້ເປັນຄົນຫນັກແຫນ້ນຫມັ້ນຄົງໃນຄວາມດີທີ່ຕົນໄດ້ເຮັດມາ ນີ້ຄືປະນິທານຂອງທ່ານ.

ທ່ານພຣະຄຣູອະນາວິໂຣ (ບຸນທອງ ວິປະໄຊຍ໌) ເປັນພຣະມະຫາເຖຣະອົງໜຶ່ງ ໃນປະເທດລາວທີ່ຫນ້າຍົກຍ້ອງສັນລະເສີນ ທ່ານເປັນພຣະນັກພັດທະນາທີ່ມີຄວາມຄິດສ້າງສັນ ທັງພັດທະນາວັດ ໆ ແລະພັດທະນາຈິດໃຈໄປພ້ອມໆກັນ ທ່ານເປັນຜູ້ທີ່ເອົາປະໂຫຍດສ່ວນລວມເປັນຫລັກໃຫຍ່ ມີຈິດໃຈເອື້ອເຟື້ອເພື່ອແຜ່ ມີເມດຕາທັມ ມີຄວາມປາຖະນາໃຫ້ຜູ້ອື່ນເປັນສຸກ ທ່ານເປັນຜູ້ທີ່ມີບຸນຍາທິການສູງສົ່ງ ເປັນທີ່ເພິ່ງທາງດ້ານຈິດໃຈຂອງສາທຸຊົນ ແລະເປັນຮົ່ມເງົາອັນເຍືອກເຢັນໃຫ້ແກ່ລູກຫລານຕະຫລອດມາ ຂໍໃຫ້ທ່ານຈົ່ງມີອາຍຸຍືນຍາວນຳລູກສິດຕະຫລອດໄປເຖີດ.

ຜູ້ຂຽນປະຫວັດ

ພຣະມະຫາບຸນທະວີ ວິໂລຈັກຣ໌

# ປະເພນີລາວ

( ຊຸດຣິດ ໑໔ )

ຮວບຮວມໂດຍ: ພຣະມະຫາບຸນທະວີ ວິໄລຈັກຣ໌

ໂທຣ. (໐໒໑) ໔໕໑໓໐໗

ກວດກາອັກສອນໂດຍ: ພຣະມະຫາພູສະຫວັນ ພັນທະບົວລີ

ປະສານງານໂດຍ: ພຣະຊາຍຄຳ ຈຳປາອຸທຸມ

ພິມຄອມພິວເຕີໂດຍ: ມະໂນຈິດ ຄຳໄຊຄ້າຍ

ວາດພາບປະກອບໂດຍ: ພຣະບຸນຈັນ ສິດທິວັນ

ອະຣຸນເດດ ແກ້ວມີໄຊ

ອອກແບບປົກໂດຍ: ບົວຫລວງ ດວງບຸດທາ

ຈັດໜ້າໂດຍ: ວິໄລສັກ ບຸນມາດາ

ຈັດໜ້າທີ່ສຳນັກງານສູນກາງອົງການພຸດທະສາສະນາສຳພັນລາວ

ພິມຄັ້ງທີ ໑ ຈຳນວນ ໑.໐໐໐ ຫົວ

ພິມທີ່ລັດວິສາຫະກິດ ໂຮງພິມກະຊວງສຶກສາທິການ

ໂທຣ: ( ໐໒໑) ໒໑໕໓໕໗

ພ.ສ ໒໕໔໓ ຄ.ສ ໒໐໐໐

໑໕



# ປະເພນີລາວ

## (ຊຸດຮີດສິບສອງ)

ໂດຍ : ພຣະມະຫາບຸນທະວີ ວິໄລຈັກຣ໌

ພະນັກງານປະຈຳຫ້ອງການສູນກາງອົງການພຸດທະສາສນາສຳພັນລາວ

ພ.ສ ໒໕໔໓ ຄ.ສ ໒໐໐໐

# ຄຳປາລົບ

ຫນັງສືປະເພນີລາວເຫລັ້ມນີ້ ຂ້າພະເຈົ້າໄດ້ຄິດຄົ້ນຂຽນຂຶ້ນມາກໍເພື່ອຢາກໃຫ້ເຍົາວະຊົນລາວຂອງຊາດ ໄດ້ມີໂອກາດນຳເອົາໄປສຶກສາຄົ້ນຄວ້າທາງປະເພນີຂອງລາວເຮົາ ຫນັງສືເຫລັ້ມນີ້ ຂ້າພະເຈົ້າຕັ້ງໃຈຈະເຮັດໃຫ້ເປັນຫນັງສືມີເນື້ອຫາ ພ້ອມມີປະຫວັດນິທານປະກອບ ແລະມີຮູບພາບປະກອບນຳດ້ວຍ.

ເຫດຜົນທີ່ເຮັດແບບນີ້ກໍເພາະວ່າ ຂ້າພະເຈົ້າມີຄວາມປະສົງຢາກໃຫ້ເຍົາວະຊົນໄດ້ຈົດຈຳ ເອົາເນື້ອຫາທັງຫມົດໃຫ້ໄດ້ລະອຽດຖ້າຫາກຂຽນນິທານປະກອບເນື້ອຫານັ້ນ ສ່ວນຫລາຍແລ້ວ ບໍ່ຄ່ອຍມີໃຜໃຫ້ຄວາມສົນໃຈເທົ່າທີ່ຄວນ ເວົ້າເຖິງປະເພນີລາວເຮົານີ້ ຖືໄດ້ວ່າເປັນຫລັກໃຫຍ່ຂອງຊາດລາວເຮົາ ຈະຂາດໄປບໍ່ໄດ້ເລີຍ ຖ້າຫາກຜູ້ໃດເປັນຄົນຊາດລາວຕ້ອງຮູ້ຈັກເລື່ອງປະເພນີລາວດີ ແຕ່ດຽວນີ້ປະເພນີດັ່ງກ່າວນັ້ນໃກ້ຈະສາບສູນໄປຫມົດແລ້ວ ເພາະຄົນລາວຂອງເຮົາເອງບໍ່ເອົາໃຈໃສ່ສຶກສາຄົ້ນຄວ້າ ຍິ່ງເຍົາວະຊົນລາວຂອງຊາດກໍແຫ່ງຫ່າງເຫີນໄປໄກ ຄວາມຮູ້ທີ່ບໍ່ມີຄຸນນະທັມ ຍ່ອມນຳມາເຊິ່ງຄວາມຫາຍຍະນະ ບັນຫາດັ່ງກ່າວມານັ້ນ ເປັນສິ່ງທີ່ທຸກທ່ານຕ້ອງຄິດໃຫ້ຫນັກຢູ່ແລ້ວ ນັ້ນຄືຄວາມຈະເຣີນ ໃນຍຸກໂລກາພິວັດ ເຊິ່ງມີການປ່ຽນແປງຢ່າງວ່ອງໄວ ຈຶ່ງເຮັດໃຫ້ເກີດກະແສການປ່ຽນແປງໃນດ້ານຕ່າງໆ ຄົນລາວກັບຂາດການປູກຝັງຫລັກທັມອັນເປັນແກ່ນສຳຄັນທີ່ກໍໃຫ້ເກີດຄວາມມີນ້ຳໃຈທີ່ດີງາມ ຄວາມເອື້ອອາທອນ ແລະຄວາມ

ມີມະນຸດສະຍະທັມໃນສັງຄົມ ຄົນລາວຍັງຂາດໂອກາດທີ່ຈະໄດ້ສຶກສາ ຄົ້ນຄວ້າວັດທະນະທັມ ແລະປະເພນີຂອງຊາດ ເຊິ່ງສອນການດຳເນີນຊີວິດຢ່າງສົມດູນ ມີຄຸນນະພາບ ແລະມີຄຸນນະພາບຊີວິດທີ່ດີ ທັງດ້ານຮ່າງກາຍ ແລະຈິດໃຈ ເປັນກຳລັງສຳຄັນທີ່ຈະພັດທະນາຊາດຕໍ່ໄປ.

ຂ້າພະເຈົ້າ ຕ້ອງຂໍອະນຸໂມທະນາບຸນກັບທ່ານທີ່ມີສ່ວນຮ່ວມ ໃຫ້ເກີດຫນັງສືເຫລັ້ມນ້ອຍໆ ນີ້ຂຶ້ນມາຈົນໄດ້ ນັບວ່າທ່ານທັງຫລາຍ ໄດ້ມີໂອກາດສ້າງມະຫາກຸສົນອັນຍິ່ງໃຫຍ່ ໃຫ້ຊີວິດຂອງຕົນຢ່າງມະຫາສານ ຖ້າຫາກວ່າຫນັງສືຫົວນີ້ມີບ່ອນຂາດຕົກບົກຜ່ອງຂໍໃຫ້ທ່ານຜູ້ຮູ້ທັງຫລາຍຈົ່ງສົ່ງຂ່າວຫລືຕຳນິຕິຊົມມາຍັງຂ້າພະເຈົ້າເພື່ອຈະໄດ້ດັດແປງແກ້ໄຂໃຫ້ເຫມາະສົມໃນການຈັດພິມຄັ້ງຕໍ່ໄປ ຂ້າພະເຈົ້າຂໍຕັ້ງຈິດອະທິດຖານ ອາຣາດທະນາປາຣະມີທັມຂອງອົງສົມເດັດພຣະສັມມາສັມພຸດທະເຈົ້າທຸກໆ ພຣະອົງ ພຣະປັດເຈກກະພຸດທະເຈົ້າ ແລະພຣະອະຣະຫັນຕະເຈົ້າທັງປວງ ບຸນປາຣະມີທີ່ເກີດຂຶ້ນຈາກການຂຽນຫນັງສືເຫລັ້ມນີ້ ຂ້າພະເຈົ້າຂໍອຸທິດສ່ວນບຸນກຸສົນໄປໃຫ້ແກ່ພໍ່ແມ່ຍາດພີ່ນ້ອງຄູອຸປັດຊາອາຈານຍ໌ຜູ້ທີ່ອົບຮົມສັ່ງສອນຂ້າພະເຈົ້າມາຕະຫລອດ ແລະທ່ານທີ່ມີບຸນຄຸນທັງຫລາຍ ຂໍໃຫ້ທ່ານເຫລົ່ານັ້ນມີແຕ່ຄວາມສຸກຄວາມຈະເຣີນ ຕະຫລອດໄປທຸກພົບ ທຸກຊາດເທີ້ນ.

ທີ່ ວັດພຣະທາດຫລວງເຫນືອ ນະຄອນຫລວງວຽງຈັນ

ວັນທີ ໑໐ ທັນວາ ພ.ສ ໒໕໔໖

ພຣະມະຫາບຸນທະວີ ວິໄລຈັກຣ໌

# ສາລະບານ

ຊີວະປະຫວັດຫຍໍ້......................................................................໐໑
ຄໍາປາລິບຂອງຜູ້ຂຽນ................................................................໑໕
ທີ່ມາຂອງຮີດສິບສອງ...............................................................໑໙
ເດືອນຈຽງເຮັດບຸນເຂົ້າປະລິວາດສະກັມ..................................໔໔
ເດືອນຍີ່ ເຮັດບຸນຄູນລານ (ຄູນເຂົ້າ) ......................................໔໕
ເດືອນສາມເຮັດບຸນເຂົ້າຈີ່ແລະບຸນມາຄະບູຊາ .........................໔໗
ເດືອນສີ່ເຮັດບຸນພຣະເວດສັນຕະຣະຊາດົກ ............................໓໔
ເດືອນຫ້າເຮັດບຸນຕຸດສົງການ(ປີໃຫມ່ລາວ) ..........................໓໕
ເດືອນຫົກເຮັດບຸນບັ້ງໄຟແລະບຸນວິສາຂະບູຊາ .......................໔໑
ເດືອນເຈັດເຮັດບຸນບູຊາເທວະດາ(ບຸນຊໍາຮະບ້ານເຮືອນ).............໔໗
ເດືອນແປດ ເຮັດບຸນອະທິດຖານເຂົ້າພັນສາ .........................໕໐
ເດືອນເກົ້າ ເຮັດບຸນເຂົ້າປະດັບດິນ .......................................໕໑
ເດືອນສິບ ເຮັດບຸນເຂົ້າສາກ (ເຂົ້າສະຫລາກ) .......................໕໔
ເດືອນສິບເອັດ ເຮັດບຸນມະຫາປະວາຣະນາອອກພັນສາ .............໕໗
ເດືອນສິບສອງ ເຮັດບຸນກະຖິນ ..........................................໕໙

# ຮີດສິບສອງ

ຮີດສິບສອງຂອງລາວນີ້ຫລາຍໆ ຄົນທີ່ເປັນເຊື້ອຊາດສາຍເລືອດລາວຄົງຈະເຄີຍໄດ້ຍິນ ກັນມາຕັ້ງແຕ່ເຫິງນານແລ້ວ ເພາະເປັນຫລັກໃນການດຳເນີນຊີວິດ ຂອງຄົນລາວເຮົາມາຕັ້ງແຕ່ດົນນານແລ້ວ ແລະຍັງເປັນທີ່ຮູ້ຈັກກັນດີໃນປະເທດທີ່ໃກ້ຄຽງ ບັດນີ້ຈະໄດ້ທວນກັບຄືນຫລັງໄປເປີດ ເອົາຮີດສິບສອງຂອງລາວເຮົາມາໃຫ້ພີ່ນ້ອງໄດ້ອ່ານໃຫ້ກະຈ່າງແຈ້ງອອກໄປ ໂດຍບັນທຶກໄວ້ໃນຫນັງສືຫົວນີ້.

ຄຳວ່າ: ຮີດ ອອກມາຈາກພາສາປາລີ ຄື: ຈາຣີຕະ ແປວ່າ: ລະບຽບ ທຳນຽມ ແບບແຜນ ໃນການປະພຶດປະຕິບັດຕາມວິຖີຊີວິດຂອງຄົນຊາດລາວເຮົາ ສ່ວນ

ຄຳວ່າ: ສິບສອງ ນັ້ນກໍຫມາຍຄວາມວ່າ: ເດືອນທັງສິບສອງເດືອນ ຫລືວັນເວລາທີ່ຜ່ານພົ້ນກິນກິນຊີວິດຄວາມເປັນຢູ່ຂອງເຮົາໄປແຕ່ລະວັນລະເດືອນຈົນເປັນປີຄື ໓໖໕ ວັນ ເລີ່ມນັບຕັ້ງແຕ່ເດືອນຈຽງຫລືເດືອນອ້າຍເປັນຕົ້ນໄປ ຈົນເຖິງເດືອນສິບສອງຕາມແບບບູຮານລາວຂອງເຮົາ ຈຶ່ງເອີ້ນວ່າ ສິບສອງ.

ສະນັ້ນ ເມື່ອຫາກເອົາຄຳລະຫວ່າງຮີດກັບສິບສອງ ມາຕໍ່ເຂົ້າກັນໃຫ້ໄດ້ຄວາມຫມາຍແລ້ວ ຈຶ່ງເອີ້ນວ່າ ຮີດສິບສອງ ຫມາຍຄວາມວ່າລະບຽບທຳນຽມ ວິຖີຊີວິດແຫ່ງຄວາມເປັນຢູ່ ທີ່ມີແບບແຜນໃນການປະພຶດປະຕິບັດຄຸນງາມຄວາມດີໃນສັງຄົມນັ້ນ ຮີດສິບສອງນີ້ຖ້າຫາກເຮົາ ອ່ານຈົບແລ້ວຈຶ່ງເອົາມາພິຈາຣະນາໃຫ້ເລິກໆ ກໍຄືພິທີ

ກັນທາງພຣະພຸດທະສາສະນາ ເຊິ່ງຊາວພຸດໄດ້ນິຍົມ ແລະຢຶດຖືກັນມາຈົນເປັນຫລັກປະພຶດປະຕິບັດຕັ້ງແຕ່ບູຮານນະການຕາບເທົ້າຈົນຮອດປັດຈຸບັນນີ້ ເພາະຢຶດໝັ້ນໃນການເຮັດບຸນສ້າງມະຫາກຸສົນຈຶ່ງເປັນເຫດນຳຄວາມສຸກມາໃຫ້ ດັ່ງນີ້ເອງຈຶ່ງໄດ້ເກີດມີການເຮັດບຸນຂຶ້ນມາຈົນກາຍເປັນປະເພນີ ເປັນມໍຣະດົກຕົກທອດຕໍ່ໆ ກັນມາ ເຖິງແມ່ນວ່າປະເທດລາວຂອງເຮົາຈະເປັນປະເທດທີ່ນ້ອຍຍາກຈົນ ໂຮງຈັກໂຮງງານເຄື່ອງທັນສະໄໝກໍບໍ່ມີຫລາຍ ແຕ່ວ່າຈິດໃຈກໍບໍ່ເຄີຍວ່າຈົນແມ່ນແຕ່ນ້ອຍ ແຕ່ລະໝູ່ບ້ານ ເມືອງ ແລະແຂວງນັ້ນ ເຖິງຈະມີການປະພຶດປະຕິບັດທີ່ແຕກຕ່າງກັນອອກໄປແນ່ກໍຕາມ ແຕ່ກໍມີຄວາມມຸ້ງໝາຍອັນດຽວກັນຄື ຫວັງໃນຄວາມສຸກກາຍສະບາຍໃຈ ເພາະແຕ່ລະທ້ອງຖິ່ນກໍຍັງແຕກຕ່າງກັນ ການປະຕິບັດພາຣະກິດທຸກຢ່າງ ຖ້າຫາກເຮົາເຮັດໃຫ້ເປັນລະບຽບຮຽບຮ້ອຍດີ ກໍຍ່ອມເປັນທີ່ໜ້າສັນລະເສີນຫລາຍສຳຫລັບຜູ້ທີ່ພົບເຫັນແລະກໍເປັນເຄື່ອງທີ່ປຸກໃຈໃຫ້ເຮົາໄດ້ຮັບຄວາມຊຸ່ມເຢັນເບີກບານໃນສັງຄົມທີ່ຈະເຣີນດ້ວຍອາຣະຍະທັມຈຶ່ງນິຍົມໃນເລື່ອງແບບແຜນ ແລະຢຶດເປັນຫລັກປະຕິບັດກັນມາເປັນທັມນຽມປະເພນີ.

ເມື່ອວ່າໂດຍທົ່ວໆໄປແລ້ວ ປະເພນີຫລືທັມນຽມຕ່າງໆ ຂອງແຕ່ລະຊາດແຕ່ລະພາສານັ້ນກໍຍ່ອມເປັນເອກະລັກຢ່າງໜຶ່ງ ທີ່ສະແດງອອກໃຫ້ເຫັນເຖິງຄວາມສະໜັກສະໜານສາມັກຄີກົມກຽວກັນ ອັນຄວນແກ່ການສັນລະເສີນ ນັບເປັນເຄື່ອງໝາຍຂອງກຸ່ມຊົນທີ່ຢູ່ຮ່ວມ

ກັນເປັນໝູ່ເຫລົ່າ ອັນເປັນເຫດໃຫ້ມີຄວາມຜູກພັນ ໃຫ້ເກີດຄວາມສະໜັກສະໜານສາມັກຄີກັນລະຫວ່າງຊາດດຽວກັນ ເພື່ອໃຫ້ປະຊາຊົນໃນສັງຄົມ ໄດ້ມີໂອກາດຮ່ວມແຮງຮ່ວມໃຈກັນເຮັດບຸນທຸກເດືອນເອີ້ນວ່າ ຮີດສິບສອງ ໃນຮີດສິບສອງບູຮານລາວເຮົານັ້ນມີຫຍັງແດ່ຈະໄດ້ຂໍກ່າວໄປຕາມລຳດັບ ຂອງແຕ່ລະເດືອນໂດຍຫຍໍ້ດັ່ງນີ້:



## ເດືອນຈຽງ ຫລື ເດືອນອ້າຍ (ເຮັດບຸນເຂົ້າປະຣິວາດສະກັມ)

ການເຂົ້າສູ່ປະຣິວາດສະກັມ ເປັນກິດທີ່ພຣະສົງຄວນເຮັດ ເພາະຈັດຢູ່ໃນກິດຈະວັດ ເປັນກິດລະບຽບວິນັຍໂດຍກົງ ເມື່ອພຣະພິກຂຸອົງໃດຕ້ອງອາບັດສັງຄາທິເສດແລ້ວ ກ່ອນພຣະພິກຂຸອົງນັ້ນຈະພົ້ນຈາກອາບັດໄປໄດ້ ກໍຕ້ອງມີການປະພຶດວຸດການະວິທີ ຄືການໃຫ້ພົ້ນຈາກອາບັດທີ່ຕົນຕ້ອງນັ້ນ.

ຄໍາວ່າ: ວຸດການະວິທີ ແປວ່າ: ວິທີອອກຈາກຄະຣຸກາບັດ (ສັງຄາທິເສດ) ການເປື້ອງຕົນອອກຈາກອາບັດນັ້ນ ມີຫລາຍວິທີເຊັ່ນ: ການລາສິກຂາບົດກໍເປັນການອອກຈາກອາບັດປາຣາຊິກ ການຢູ່ປະຣິວາດສະກັມກໍເປັນການອອກຈາກອາບັດສັງຄາທິເສດ ການເສັຍສະລະວັດຖຸສິ່ງຂອງອອກໄປ ກໍເປັນການອອກຈາກອາບັດນິດສັກຄີ ປາຈິດຕີ ສ່ວນອາບັດທີ່ເຫລືອນອກຈາກນັ້ນ ບໍຣິສຸດດ້ວຍການສະແດງອາບັດ.

ດັ່ງນັ້ນ ວຸດການະວິທີ ໂດຍໃຈຄວາມແລ້ວ ກໍຄືວິທີອອກຈາກອາບັດສັງຄາທິເສດ ໂດຍມີການຢູ່ປະຣິວາດ ມານັດ ແລະອັບພານ.

ຄໍາວ່າ: ປະຣິວາດ ຫມາຍເຖິງ ການຢູ່ຊົດໃຊ້ອາບັດທີ່ຕ້ອງນັ້ນ ເຮົາປົກປິດມາຫລາຍຣາຕຣີເທົ່າໃດ ເຮົາກໍຢູ່ຊົດໃຊ້ເທົ່ານັ້ນ.

ຄໍາວ່າ: ມານັດ ຫມາຍເຖິງການນັບຣາຕຣີຄືປະພຶດມານັດໃຫ້ຄົບ ໖ ຣາຕຣີຕາມພຣະວິໄນບັນຍັດ.

ຄໍາວ່າ: ອັບພານ ຫມາຍເຖິງການເອີ້ນເຂົ້າຫມູ່ ຫລັງຈາກເຮົາປະພຶດ ປະຣິວາດ ມານັດ

ຕາມພຣະວິນັຍບັນຍັດແລ້ວ ຄື ປະກອບດ້ວຍຄະນະສົງ ໑໐ ອົງຂຶ້ນໄປ ປະກາດໃຫ້ເປັນຜູ້ບໍຣິສຸດເຫມືອນຫມູ່ສົງຈຶ່ງເອີ້ນວ່າ ເຂົ້າປະຣິວາສະກັມ.

*ເຮັດຈິດໃຈໃຫ້ຜ່ອງໃສ ເປັນກໍາໄຣຊີວິດ ປະຕິບັດທັມເປັນນິດ ຊີວິດກໍຈະເຣີນ*

## ມູນເຫດແຫ່ງການເຮັດບຸນເຂົ້າກັມ

ສະໄຫມຫນຶ່ງ ພຣະສັມມາສັມພຸດທະເຈົ້າປະທັບຢູ່ວັດພຣະເຊຕະວັນ ໃກ້ເມືອງສາວັດຖີ ຍັງມີພຣະພິກຂຸອົງຫນຶ່ງ ຊື່ວ່າພຣະໄສຍະສະກະເກີດຄວາມກະສັນຢາກສິກ ຈົນມີຮ່າງກາຍຈ່ອຍຜອມລົງແຮງ ແລະມີພຣະພິກຂຸອີກອົງຫນຶ່ງ ຊື່ວ່າອຸທາຍີ ມາພົບເຫັນກໍຈຶ່ງໄດ້ທັກທາຍຖາມ ພໍຮູ້ລາຍລະອຽດເລື່ອງແລ້ວ ຈຶ່ງແນະນໍາໃຫ້ພຣະໄສຍະສະກະສັນອາຫານນອນພັກຜ່ອນ ແລະສົງນໍ້າ(ອາບນໍ້າ) ໃຫ້ສະບາຍ ຖ້າຫາກເກີດຄວາມໄຄ່ຂຶ້ນມາເມື່ອໃດກໍໃຫ້ໄຊ້ມືປ່ອຍສຸກະ (ອະສຸຈິ) ອອກມາໂລດເດີ ເພາະວ່າພິທີການນີ້ ພຣະອຸທາຍີເອງກໍໄດ້ປະຕິບັດມາເປັນປະຈໍາຢູ່ແລ້ວ.

ພຣະໄສຍະສະກະກໍປະຕິບັດຕາມທຸກຢ່າງທີ່ພຣະອຸທາຍີແນະນໍາ ປາກົດວ່າສະບາຍຂຶ້ນ ມີຜິວພັນຜຸດຜ່ອງຂຶ້ນ ເມື່ອພິກຂຸທັງຫລາຍເຫັນຄວາມປ່ຽນແປງກໍຈຶ່ງຖາມຫາສາຍເຫດ ພຣະໄສຍະສະກະກໍເລົ່າເລື່ອງໃຫ້ຟັງຢ່າງລະອຽດຕາມຄວາມເປັນຈິງ ພິກຂຸທັງຫລາຍໄດ້ຟັງແລ້ວກໍຕໍານິກັນໄປຕ່າງໆນາໆ ແລ້ວຈຶ່ງເຂົ້າໄປຂາບທູນເລື່ອງນັ້ນແດ່ພຣະຜູ້ມີພຣະພາກເຈົ້າພຣະອົງ ຈຶ່ງໄດ້ປະຊຸມສົງຊັກຖາມໄລ່ລຽງໄດ້ຄວາມ

ເປັນຈິງ ແລ້ວພຣະອົງກໍ່ຊົງຕໍານິພຣະໄສຍະສະກະໂດຍປະການຕ່າງໆ ຊົງສະແດງຄຸນຂອງຄຸນນະທັມທັງຫລາຍ ມີຄວາມເປັນຜູ້ລ້ຽງງ່າຍເປັນຕົ້ນ ແລ້ວກໍ່ຊົງບັນຍັດສິກຂາບົດດ້ວຍ ນັບຕັ້ງແຕ່ນັ້ນມາຈຶ່ງມີການໃຫ້ພຣະພິກຂຸທີ່ຕ້ອງອາບັດສັງຄາທິເສດໄດ້ເຂົ້າປະຣິວາດສະກັມ ການເຂົ້າປະຣິວາດສະກັມໃນປັດຈຸບັນນີ້ບໍ່ແມ່ນພຣະເປັນອາບັດສັງຄາທິເສດເຂົ້າເພື່ອປະຕິບັດທັມ ແລະຮັກສາປະເພນີອັນດີງາມຂອງພຣະພຸດທະສາສະນາ ແລະຂອງປະເທດຊາດໃຫ້ຢູ່ຄູ່ບ້ານເມືອງຕລອດໄປ.



## ເດືອນຍີ່ ( ເຮັດບຸນຄູນລານ ຫລື ບຸນຄູນເຂົ້າ )

ການເຮັດບຸນຄູນລານຫລືບຸນຄູນເຂົ້າມີທຳນຽມປະເພນີມາແຕ່ດົນນານແລ້ວ ໃນເມື່ອພວກເຮົາກ່ຽວເຂົ້າແລ້ວກໍນຳມາຟາດ ນາດີຫລືຍີ່ພໍເສັດຮຽບຮ້ອຍແລ້ວໃນຄອບຄົວຂອງເຮົາກໍພ້ອມກັນ ຈັດແຈ່ງສະຖານທີ່ຫາອາຫານການກິນ ຕຽມໃຫ້ພ້ອມແລ້ວຈຶ່ງໄປອາຣາດທະນານິມົນພຣະສົງຄະເຈົ້າໃນວັດມາສູດພຣະປະຣິດຕະມຸງຄຸນລານເຂົ້າໃນຕອນແລງ ພໍຕື່ນເຊົ້າຂຶ້ນມາກໍມີການຖວາຍສັງຄະທານ ທີ່ລານເຂົ້າແລະສົນເຂົ້າເຊົ້າໃນບ່ອນນັ້ນ ເພື່ອໃຫ້ເປັນສີຣິມຸງຄຸນແກ່ເຂົ້າເປືອກນີການຟັງເທດເລື່ອງ ອານິສົງການເຮັດບຸນຄູນເຂົ້າ (ຄູນລານ) ພໍສະແດງທັມຈົບລົງແລ້ວ ກໍໃຫ້ເຈົ້າພາບເຈົ້າສັດທານຳເອົາຈະຕຸປັດໄຈໄທຍະທານເຂົ້າໄປຖວາຍພຣະສົງທີ່ຖືກນິມົນມາ ຈາກນັ້ນກໍໃຫ້ເຈົ້າພາບກະກຽມຫານ້ຳຢາດເພື່ອອຸທິດໃຫ້ແກ່ເຈົ້າຖິ່ນເຈົ້າຖານທີ່ຮັກສາໄຮ່ນາຮົ້ວສວນໃຫ້ມາຮັບເອົາສ່ວນບຸນກຸສົນນີ້ ພໍພິທີສົງຈົບລົງແລ້ວກໍເພີ່ມພິທີພຣາມເຂົ້າຕາມຄືພິທີທຳຂວັນ ຫລືສູດຂວັນເຂົ້າຈາກນັ້ນຈຶ່ງຈັດຫາອາຫານລ້ຽງແຂກຄົນຕາມປະເພນີ.

*ຈົ່ງນຶກໄວ້ສະເໝີວ່າ ຮັກກັນຫລາຍກໍອາດຊັງກັນຫລາຍ ຫວັງກັນຫລາຍກໍອາດຜິດຫວັງຫລາຍ ເອົາໃຈກັນຫລາຍກໍອາດລຳຄານຫລາຍ*

## ມູນເຫດແຫ່ງການເຮັດບຸນຄູນລານ

ໃນສະໄຫມຫນຶ່ງ ພຣະສັມມາສັມພຸດທະເຈົ້າຊົງພຣະນາມວ່າ ກັດສະປະ ມີຊາວນາສອງພີ່ນ້ອງເຮັດນາຮ່ວມກັນ ເມື່ອເຂົ້າເປັນນ້ຳນົມ ນ້ອງຊາຍຢາກຈະເຮັດເຂົ້າມະທຸປາຍາດຖວາຍໃຫ້ພຣະພິກຂຸສົງ ມີພຣະກັດສະປະພຸດທະເຈົ້າເປັນປະທານ ນ້ອງຊາຍຊວນອ້າຍ ແຕ່ອ້າຍບໍ່ມີສັດທາຮ່ວມນຳດ້ວຍ ອ້າຍກັບນ້ອງຊາຍຈຶ່ງໄດ້ແບ່ງນາກັນ ພໍແບ່ງນາກັນແລ້ວ ນ້ອງຊາຍໄດ້ກັມມະສິດດິນທີ່ນາ ແລະໄດ້ເຂົ້າໃນນາດ້ວຍ ແລ້ວນ້ອງຊາຍກໍ່ເຮັດບຸນໃຫ້ທານເຖິງ ໕ ຄັ້ງ ຄືເຂົ້າເປັນນ້ຳນົມຄັ້ງຫນຶ່ງ ເຂົ້າເປັນເຫມົ້າຄັ້ງຫນຶ່ງ ການຖວາຍທານທຸກຄັ້ງ ນ້ອງຊາຍປາຖະນາເປັນພຣະອໍຣະຫັນ ຄັນມາເຖິງສາສະນາຂອງພຣະໂຄດົມນ້ອງຊາຍໄດ້ມາເກີດເປັນພຣາມມີນາມວ່າອັນຍາໂກນທັນຍະ ສະລະສົມບັດອອກບວດເປັນພຣະພິກຂຸອົງທຳອິດໃນໂລກ ໄດ້ເປັນພຣະອໍຣະຫັນ ແລະໄດ້ຮັບສະມະນະຖານັນດອນສັກ ເອຕະທັກຄະ ຄືຜູ້ຮູ້ຣັດຕິການ ສ່ວນຜູ້ເປັນອ້າຍໄດ້ຖວາຍເຂົ້າໃນນາພຽງຄັ້ງດຽວ ເວລາຖວາຍເຂົ້າແລ້ວໄດ້ຕັ້ງປະນິທານຂໍໃຫ້ສຳເລັດເປັນພຣະອະຣິຍະບຸກຄົນ ຄັນມາເຖິງສາສະນາຂອງພຣະໂຄດົມ ໄດ້ມາເກີດເປັນສຸພັດທະປະຣິພາຊົກ ແລະໄດ້ບວດໃນພຣະພຸດທະສາສະນາ ແຕ່ບໍ່ມີໂອກາດໄດ້ເຂົ້າເຝົ້າພຣະພຸດທະເຈົ້າ ເມື່ອພຣະອົງຈະສະເດັດດັບຂັນທະປະຣິນິບພານ ໄດ້ເຂົ້າໄປທູນຖາມຄວາມສົງໄສກັບພຣະອົງພາຍໃນຜ້າມ່ານ ເວລາຈົບເທສະນາແລ້ວກໍ່ໄດ້ສຳເລັດເປັນພຣະອະນາຄາມີ ເປັນອະຣິຍະບຸກຄົນ

ອີງສຸດທ້າຍ ການຖວາຍເຂົ້າໃຫ້ເປັນທານມີອານິສົງຫລາຍ ດັ່ງນັ້ນ ນັກບວດບູຮານລາວເຮົາຈິ່ງຖືເປັນປະເພນີມາຈົນຮອດທຸກວັນນີ້.



## ເດືອນ ໓ (ເຮັດບຸນເຂົ້າຈີ່ ແລະ ບຸນມາຄະບູຊາ)

ບຸນເຂົ້າຈີ່ກັບບຸນມາຄະບູຊານັ້ນ ເຮັດມື້ດຽວກັນ ຕ່າງກັນແຕ່ເວລາເທົ່ານັ້ນ ຄືບຸນເຂົ້າຈີ່ເຮັດຕອນເຊົ້າ ສ່ວນບຸນມາຄະບູຊາເຮັດຕອນແລງ ບຸນນີ້ກົງກັບວັນຂຶ້ນ ໑໕ ຄ່ຳ ວັນເພັງກາງເດືອນ ໓ ດວງຈັນສະເຫວີຍມາຄະຣິກ ດວງຈັນເຕັມດວງ ວັນນີ້ເປັນວັນທີ່ຊາວພຸດທະສາສະນິກກະຊົນລາວເຮົາທົ່ວປະເທດ ພາກັນສະແດງຄວາມໂຄຣົບຕໍ່ພຣະທັມຄຳສັ່ງສອນຂອງອົງສົມເດັດພຣະບໍຣົມມະສາສະດາສັມມາສັມພຸດທະເຈົ້າ.

ມາຄະ ເປັນຊື່ຂອງເດືອນ ໓ ມາຄະບູຊາ ເພິ່ນຫຍໍ້ມາຈາກຄຳວ່າ: ມາຄະປຸນນະມີ ແປວ່າ: ການບູຊາພຣະໃນວັນເພັງເດືອນ ໓ ຖ້າປີໃດມີເດືອນອະທິກະມາດ ຄືເດືອນແປດສອງຫົນ (ສອງຄັ້ງ) ວັນມາຄະບູຊາກໍຈະປ່ຽນໄປເປັນວັນຂຶ້ນ ໑໕ ຄ່ຳເດືອນ ໔ ວັນມາຄະບູຊານີ້ ເປັນວັນຄ້າຍວັນທີ່ພຣະພຸດທະອົງຊົງວາງຮາກຖານຂອງພຣະພຸດທະສາສະນາໃຫ້ໝັ້ນຄົງ ເພາະເປັນວັນທີ່ ພຣະພຸດທະອົງຊົງປະທານໂອວາທະປາຕິໂມກ ໓ ຢ່າງໃນທີ່ປະຊຸມສົງເຊິ່ງການປະຊຸມຄັ້ງນີ້ປະກອບດ້ວຍອົງ ໔ ເອີ້ນວ່າ: ຈະຕຸຣົງຄະສັນນິບາດ ເຊິ່ງໄດ້ມີຂຶ້ນທີ່ວັດເວຣຸວັນມະຫາວິຫານໃກ້ກຸງຣາຊະຄື ແຄວັນມະຄົດ.

ດັ່ງນັ້ນ ເມື່ອເຖິງວັນມາຄະບູຊາໄດ້ວຽນມາບັນຈົບຄົບຮອບແລ້ວຄົນລາວບູຮານເຮົາ ຫລາຍເຊັ່ນຄົນມັກເຮັດບຸນເຂົ້າຈີ່ໃນຕອນເຊົ້າ ແລ້ວນຳເອົາໄປຖວາຍໃຫ້ພຣະສົງຢູ່ໃນວັດ ພ້ອມກັນເຮັດ

ບຸນຕັກບາດ ຮັບອຸໂປສົດສິນ ແລະຟັງພຣະທັມມະເທສະນາ ສ່ວນພິທີພາກຄ່ຳຈະມີສາທຸຊົນຍິງຊາຍນ້ອຍໃຫຍ່ ພ້ອມໃຈກັນນຳເອົາດອກໄມ້ທູບທຽນໄປປະກອບພິທີວຽນທຽນຮ່ວມກັບພຣະພິກຂຸສົງ ວຽນຮອບພຣະອຸໂປສົດ (ສິມ) ເພື່ອລະລຶກນຶກເຖິງພຣະມະຫາກະຣຸນາທິຄຸນຂອງພຣະພຸດທະອົງທີ່ມີຕໍ່ສັບພະສັດທັງຫລາຍ ສຳຫລັບໃນວັນນີ້ເຮົາວາງໃຈໃຫ້ບໍຣິສຸດ ຕັ້ງໃຈປະຕິບັດຕົນໃຫ້ດີ ຄືໃຫ້ເວັ້ນຈາກການ ເຮັດສິ່ງທີ່ບໍ່ດີບໍ່ງາມ ປະຕິບັດແຕ່ຄວາມດີ ແລະງົດເວັ້ນອະບາຍຍະມຸກທັງຫລາຍທັງປວງດ້ວຍ.

*ຄວາມເກັ່ງໃຈ ເປັນວິໄນຂອງຄົນດີ ເກັ່ງໃຈບໍ່ເລືອກການ ເປັນວິໄສຂອງຄົນໂງ່*

## ມູນເຫດຂອງການເຮັດບຸນເຂົ້າຈີ່

ມີເລື່ອງເລົ່າໄວ້ໃນຫນັງສືພຣະທັມມະບົດຂຸດທະກະນິກາຍວ່າ: ໃນສະໄຫມຫນຶ່ງ ມີຜູ້ຍິງຄົນຫນຶ່ງຊື່ວ່າ: ນາງປຸນນະທາສີ ນາງເປັນທາດຮັບໃຊ້ຂອງທ່ານມະຫາເສດຖີຄົນຫນຶ່ງ ເປັນເວລາຫລາຍປີແລ້ວ ໃນເຊົ້າວັນນັ້ນ ນາງໄດ້ຕື່ນຈາກທີ່ນອນແຕ່ເຊົ້າ ລຸກຕຳເຂົ້າ ໃຫ້ທ່ານມະຫາເສດຖີພໍຕຳເຂົ້າເສັດແລ້ວນາງໄດ້ຮ່ອນເອົາຮຳອ່ອນມາປະສົມກັບເຂົ້າປາຍ ແລ້ວເອົາໄປຫນຶ້ງໃຫ້ສຸກ ຈາກນັ້ນນາງກໍເອົາມາປັ້ນເປັນກ້ອນ ແລ້ວເອົາມາຈີ່ຈົນມີກິ່ນຫອມເປັນຕາຫນ້າຮັບປະທານ ໃນເວລາຫິວ ພຣະສັມມາສັມພຸດທະເຈົ້າຊົງເຫັນອຸປະນິໄສຂອງນາງ ຖ້ານາງໄດ້ຖວາຍເຂົ້າຈີ່ກ້ອນນີ້ ໃຫ້ກັບເຮົາຕະຖາຄົດແລ້ວ ນາງຕ້ອງໄດ້ເປັນ

ພຣະໂສດາບັນແນ່ນອນ ຖ້າຫາກພຣະອົງບໍ່ໄປຊ່ວຍນາງໃນຄັ້ງນີ້ ນາງກໍຈະພາດໂອກາດນີ້ໄປ.

ຫລັງຈາກນາງເຮັດເຂົ້າຈີ່ເສັດຮຽບຮ້ອຍແລ້ວນາງກໍເອົາເຂົ້າຈີ່ນັ້ນມາຂອດໃສ່ສົ້ນຜ້າຂອງນາງ ເພື່ອເອົາໄວ້ຮັບປະທານເມື່ອເວລາຫິວ ພໍນາງເດີນທາງໄປຮອດເຄິ່ງທາງ ນາງໄດ້ຫລຽວໄປເຫັນພຣະສັມມາສັມພຸດທະເຈົ້າ ຢືນຮັບບິນທະບາດຢູ່ຂ້າງໜ້າຂອງນາງ ນາງໄດ້ເກີດສັດທາຂຶ້ນທັນທີ ນາງຈຶ່ງຄິດໃນໃຈວ່າ ຈະເອົາອັນໃດບໍ່ໄປຖວາຍທານໃຫ້ທ່ານ ດ້ວຍເຫດທີ່ເຮົາບໍ່ເຄີຍໄດ້ໃຫ້ທານໃນຊາດປາງກ່ອນນັ້ນ ຕົກມາໃນຊາດນີ້ເຮົາຈຶ່ງທຸກຍາກ ພໍຄິດໄດ້ແນວນັ້ນແລ້ວ ນາງກໍນຶກເຖິງແຕ່ເຂົ້າຈີ່ທີ່ຂອດຢູ່ໃນສົ້ນຜ້ານັ້ນ ແລ້ວນໍາເອົາໄປຖວາຍໃຫ້ພຣະພຸດທະອົງ ພຣະອົງກໍຊົງຮັບ ແລະພຣະອົງກໍຊົງສັນເຂົ້າຈີ່ນັ້ນໃຫ້ນາງເຫັນທັນທີ ນາງຫລຽວເບິ່ງພຣະພັກຂອງພຣະພຸດທະອົງກໍາລັງສັນເຂົ້າຈີ່ຂອງນາງຢູ່ ນາງກໍເກີດຄວາມດີໃຈຂຶ້ນມາທັນທີຄວາມດີໃຈຂອງນາງນັ້ນປະມານບໍ່ໄດ້ເລີຍ ເພາະນາງເກີດມາແຕ່ນ້ອຍຈົນໃຫຍ່ບໍ່ເຄີຍໄດ້ໃຫ້ທານຈັກເທື່ອ ເພິ່ງໄດ້ໃຫ້ທານເຂົ້າຈີ່ພຽງກ້ອນດຽວເທົ່ານັ້ນ ຫລັງຈາກສັນເສັດຮຽບຮ້ອຍແລ້ວ ພຣະອົງກໍຊົງສະແດງພຣະທັມມະເທສະນາສອນນາງ ພໍນາງໄດ້ຟັງພຣະທັມມະເທສະນາຈົບລົງແລ້ວ ນາງກໍໄດ້ບັນລຸເປັນພຣະໂສດາບັນ.

ໃນວັນນັ້ນ ນາງກໍໄດ້ຍ່າງແບກຝົ້ນກັບບ້ານດ້ວຍຄວາມເບີກບານມ່ວນຊື່ນໃນຜົນບຸນຂອງນາງຕະຫລອດທາງ.

ວັນຕໍ່ມາ ນາງກໍໄດ້ໄປຫາຟືນເຫມືອນທີ່ຕົນໄດ້ປະຕິບັດມາເປັນປະຈໍາ ໃນຂະນະທີ່ນາງເອົາຟືນຢູ່ນັ້ນ ມີອໍສໍຣະພິດຕົວຫນຶ່ງບັງເອີນກັດນາງຕາຍ ພໍ່ນາງຕາຍຈາກໂລກມະນຸດແລ້ວ ໄດ້ໄປເກີດເປັນເທວະດາຢູ່ສວງສະຫວັນຊັ້ນດາວະດຶງ ດ້ວຍຜົນບຸນທີ່ນາງໄດ້ຖວາຍເຂົ້າຈີ່ພຽງປັ້ນດຽວເທົ່ານັ້ນ ແລະຜົນບຸນສ່ວນນັ້ນໄດ້ສົ່ງຜົນໃຫ້ນາງໄດ້ໄປເກີດໃນສະຫວັນຊັ້ນດາວະດຶງ ມີຄວາມເປັນຢູ່ສະດວກສະບາຍກວ່າຢູ່ໂລກມະນຸດ ນັບແຕ່ນັ້ນເປັນຕົ້ນມາ ຊາວພຸດລາວເຮົາຈຶ່ງນໍາເລື່ອງດັ່ງກ່າວນີ້ມາເປັນອຸທາຫອນຄະຕິ ໃນການເຮັດບຸນເຂົ້າຈີ່ຈົນຮອດທຸກວັນນີ້.



ນາງປຸນນະທາສີຖວາຍເຂົ້າຈີ່ແກ່
ພຣະສັມມາສັມພຸດທະເຈົ້າ

## ເດືອນສີ່ (ເຮັດບຸນພະເວດສັນດອນຊາດົກ)

ບຸນພະເວດສັນດອນເປັນບຸນທີ່ໃຫຍ່ ພີ່ນ້ອງຊາວພຸດເຮົາຖືວ່າເປັນບຸນປະເພນີປະຈຳປີອັນຍິ່ງໃຫຍ່ ມີການຟັງເທດເລື່ອງພະເວດສັນດອນຊາດົກ ເຊິ່ງປະກອບໄປດ້ວຍຄາຖາພັນຫນຶ່ງ ຖ້າລວມຫນັງສືເທດແລ້ວມີຈຳນວນ ໑໓ ຜູກ ຊາດົກນີ້ເປັນຊາດົກທີ່ໃຫຍ່ ແລະຍືດຍາວທີ່ສຸດສ່ວນໃຫຍ່ມັກນິຍົມເຮັດໃນລະຫວ່າງເດືອນ ໔ ເປັນຕົ້ນໄປຈະເປັນຂ້າງຂຶ້ນຫລືຂ້າງແຮມແລ້ວແຕ່ຄວາມສະດວກ ເພາະບໍ່ມີການກຳນົດຢ່າງແນ່ນອນເຫມືອນບຸນອື່ນໆບາງບ້ານມັກເອີ້ນວ່າບຸນເດືອນ ໔

ນິທານຊາດົກເລື່ອງພຣະເວດສັນດອນນີ້ ນັບຖືກັນວ່າສຳຄັນກວ່າຊາດົກອື່ນໆ ຕົ້ນສະບັບເດີມນັ້ນເປັນພາສາປາລີ ເຫັນປາກົດຢູ່ໃນພຣະໄຕຣປີດົກເຫລັ້ມທີ ໒໗ ພຣະສັມມາສັມພຸດທະເຈົ້າພຣະອົງໄດ້ຊົງສະແດງໄວ້ເປັນຄາຖາພາສາປາລີນັບໄດ້ ໑.໐໐໐ ພຣະຄາຖາຕໍ່ມາໄດ້ມີນັກປຣາດຜູ້ສະຫລາດ ແປເປັນພາສາລາວ ແລະຮ້ອຍກອງເປັນຄຳກອນໃຫ້ມ່ວນຊ້ອຍ ການເທດນັ້ນສາມາດເທດໄດ້ ຫລາຍສຳນວນເພື່ອໃຫ້ຄົນເຮົາເຂົ້າໃຈ ແລະໄດ້ລະລຶກນຶກເຖິງການພ່ຳເພັງຄຸນງາມຄວາມດີຂອງພຣະເວດສັນດອນ ນັບເປັນຊາດສຸດທ້າຍແຫ່ງການເປັນພຣະໂພທິສັດຂອງພຣະພຸດທະເຈົ້າ.

ດ້ວຍເຫດທີ່ນິຍົມຟັງນັ້ນ ກໍເພາະອິດທິພົນຂອງຫນັງສືມະໄລຫມື່ນມະໄລແສນ ທີ່ກ່າວເຖິງພຣະມະໄລເຖຣະເຈົ້າ ຜູ້ນຳຂ່າວສານມາຈາກພຣະສີອະຣິຍະເມດໄຕມາແຈ້ງແກ່ຊາວໂລກ ການຟັງເລື່ອງພຣະ

ເວດສັນດອນນີ້ ເພິ່ນນິຍົມຟັງເລື່ອງພຣະເວດສັນດອນໃຫ້ແລ້ວໃນມື້ໜຶ່ງວັນດຽວບໍ່ແມ່ນເປັນເລື່ອງທີ່ເຮັດໄດ້ງ່າຍໆ ເພາະຕ້ອງອາໄສສັດທາອັນແຮງກ້າ ແລະຄວາມຮູ້ຄວາມເຂົ້າ ໃຈໃນເນື້ອຫາສາຣະຂອງມະຫາເວດສັນດອນຊາດົກໄດ້ເປັນຢ່າງດີ ນັບວ່າເປັນຄ່າພິທີ່ເຮັດໃຫ້ຊາວພຸດເຮົາໄດ້ພ່າເພັງບຸນ ແລະເສີມສ້າງປາຣະມີພິເສດ ຄືທານະປາຣະມີເປັນຕົ້ນ..

*ຜູ້ຕັ້ນໃຈຄິບຄື: ຍິ້ມແຍ້ມແຈ່ມໃສ ຕັ້ງໃຈຟັງສິນທະນາ ເຈຣະຈາໜ້າຟັງ*
*ສິ່ງເຄາະເອື້ອເຟື້ອ ຂາດເຫລືອຄອຍດູແລ ຖ້າໄດ້ແບບນີ້ຈະເຣີນ*

## ມູນເຫດແຫ່ງການເຮັດບຸນພະເວດ

ດັ່ງໄດ້ປາກົດເຫັນໃນໜັງສືໃບລານ ເປັນອັກສອນທັມເລື່ອງມະໄລໝື່ນມະໄລແສນ ວ່າມີພຣະເຖຣະເຈົ້າຮູບໜຶ່ງ ມີພຣະນາມວ່າພຣະມະໄລເຖຣະເຈົ້າ ພຣະມະໄລໄດ້ສະເດັດຂຶ້ນໄປໄຫວ້ພຣະທາດເກດແກ້ວຈຸລະມະນີ ຢູ່ສະຫວັນຊັ້ນດາວະດຶງ ພຣະມະໄລໄດ້ພົບກັບພຣະສີອະຣິຍະເມດໄຕ ແລ້ວພຣະສີອະຣິຍະເມດໄຕ ຈຶ່ງອະນຸຍາດຂໍຖາມເຖິງເລື່ອງຕ່າງໆໃນໂລກມະນຸດວ່າ ການເປັນຢູ່ຂອງມະນຸດນັ້ນປະກອບດ້ວຍສິນທັມ ຫລືວ່າຂ້າຟັນກັນຢູ່ ? ພຣະມະໄລເຖຣະເຈົ້າກໍເຫລົ່າໃຫ້ພຣະໂພທິສັດຟັງທຸກປະການ ພຣະໂພທິສັດສີອະຣິຍະເມດໄຕຈຶ່ງຖາມຕໍ່ໄປວ່າຊາວມະນຸດສະໂລກປາຖະນາຢາກຈະເຫັນໜ້າຂອງພຣະສີອະຣິຍະເມດໄຕຢູ່ບໍ່ ? ພຣະມະໄລເຖຣະເຈົ້າຈຶ່ງໄດ້ຕອບວ່າຊາວມະນຸດປາຖະນາຢາກເຫັນໜ້າ ແລະຢາກພົບສະຣະນະອັນປະເສີດ

ຊົ່ວ/ພາ
ຫ້າມຈຳໜ່າຍ

ຂອງພຣະສີອະຣິຍະເມດໄຕຢູ່ ຈາກນັ້ນພຣະສີອະຣິຍະເມດໄຕຈິ່ງໄດ້ຕອບໄປວ່າ ເຮົາຄືພຣະໂພທິສັດສີອະຣິຍະເມດໄຕຜູ້ຈະລົງໄປຈຸດຕິໃນພັດທະກັບນີ້ ສົມຄວນຈຸດຕິຢູ່ບໍ່? ພຣະມະໄລເຖຣະເຈົ້າໄດ້ຕອບໄປວ່າ ມະນຸດເຫລົ່ານັ້ນຍັງປາຖະນາຢາກພົບພຣະອົງຢູ່ ພຣະໂພທິສັດສີອະຣິຍະເມດໄຕຈິ່ງກ່າວຕໍ່ໄປວ່າ ຖ້າປາຖະນາຢາກເຫັນຫນ້າຂອງຂ້າພະເຈົ້າຄວນເຮັດຢ່າງນີ້ຄື:

(໑).ຈົ່ງຢ່າໄດ້ບຽດບຽນກັນ ມີການຂ້າພໍ່ຕີແມ່ ເປັນຕົ້ນ.

(໒).ຈົ່ງຢ່າທຳລາຍພຣະພຸດທະຮູບ ສະຖູບ ແລະເຈດີ ກັບທັງພຣະສະມະນະຊີພຣາມຜູ້ຊົງສີນ.

(໓).ຈົ່ງຢ່າຍຸ້ແຍ່ໃຫ້ພຣະສັງຄະເຈົ້າແຕກແຍກຈາກກັນ.

(໔).ຈົ່ງຟັງເລື່ອງມະຫາເວດສັນຕະຣະຊາດົກໃຫ້ແລ້ວໃນມື້ຫນຶ່ງວັນດຽວ.

(໕).ຟັງແລ້ວຢ່າໄດ້ປະຫມາດ ຈົ່ງເອົາເລື່ອງທີ່ຟັງແລ້ວນັ້ນມາປະພຶດປະຕິບັດຕາມ ຄວາມເຫມາະສົມຈິ່ງຈະໄດ້ພົບສາສະນາຂອງພຣະສີອະຣິຍະເມດໄຕ ໂດຍແທ້ບໍ່ຕ້ອງສົງໄສ ເມື່ອພຣະມະໄລເຖຣະເຈົ້າກັບຈາກສວງສະຫວັນຊັ້ນດາວະດຶງແລ້ວ ກໍໄດ້ໄປແຈ້ງຂ່າວໃຫ້ແກ່ມະນຸດທັງຫລາຍຮູ້ເລື່ອງນັ້ນທຸກປະການ ພີ່ນ້ອງຊາວພຸດລາວຂອງເຮົາ ຈິ່ງເຮັດບຸນພຣະເວດ ສືບຕອນແຕ່ນັ້ນມາຈົນຮອດປັດຈຸບັນ.

## ເດືອນຫ້າ (ເຮັດຕຸດສົງການ ຫລື ບຸນຂຶ້ນປີໃຫມ່ລາວ)

ຕຸດສົງການ ເປັນພາສາສັນສະກິດ ແປວ່າ: ຜ່ານ ຫລືເຄື່ອນຍ້າຍເຂົ້າໄປ ເຊິ່ງກໍຫມາຍເຖິງດວງອາທິດຜ່ານ ຫລືເຄື່ອນຍ້າຍເຂົ້າໄປໃນຈັກຣາສີໃດຣາສີຫນຶ່ງໃນສິບສອງຣາສີ ເປັນໄລຍະເວລາຫນຶ່ງເດືອນເຕັມ.

ສົງການຕາມປົກກະຕິມີສາມວັນຄື ເລີ່ມແຕ່ວັນທີ ໑໓ ເດືອນເມສາ ຫລືເດືອນ ໕ ລາວເປັນວັນມະຫາສົງການ ເປັນວັນເຮັດຄວາມສະອາດບ້ານເຮືອນ ແລະອາບນ້ຳຫົດສົງຜູ້ເຖົ້າຜູ້ແກ່ ເພື່ອກຳຈັດສິ່ງສົກກະປົກຕ່າງໆຂອງປີເກົ່າໃຫ້ຫມົດໄປ ວັນທີ ໑໔ ເດືອນເມສາ ເປັນວັນກາງ ຄືວັນເນົາຫລືວັນເນົ່າ ວັນນີ້ຈະເປັນວັນພັກຜ່ອນຫລືກະກຽມຫາອາຫານສິ່ງຂອງຕ່າງໆໄວ້ໄປເຮັດບຸນຕັກບາດ ເພື່ອອຸທິດໃຫ້ແກ່ບັນພະບູຣຸດທີ່ລ່ວງລັບໄປແລ້ວ ວັນທີ ໑໕ ເດືອນເມສາ ເປັນວັນສຸດທ້າຍ ຄືວັນຖະເຫລີງສົກ ຫລືພະຍາວັນ ເປັນວັນຂຶ້ນສັກກະຣາດໃຫມ່ ຄືເປັນວັນຂຶ້ນປີໃຫມ່ລາວ ໃນວັນນີ້ຍັງມີການເຮັດບຸນຟັງພຣະທັມມະເທສະນາ ກໍ່ພຣະເຈດີຊາຍຖວາຍວັດ ມີການປ່ອຍນົກປ່ອຍປາ ແລ້ວກໍຍັງມີການຫລິ້ນສະຫນຸກສະຫນານຕ່າງໆ ເຊັ່ນ:ການຫົດນ້ຳຂອງຊາຍຫນຸ່ມຍິງສາວເປັນຕົ້ນ.

*ຮັກຍາວໃຫ້ຕັດ ຮັກສັ້ນໃຫ້ຕໍ່ ຮັກຄວາຍໃຫ້ຜູກ ຮັກລູກໃຫ້ຕີ*

*ຮັກມີໃຫ້ຄ້າ ຮັກຫນ້າໃຫ້ຄິດ ຮັກມິດໃຫ້ເຕືອນ*

# ມູນເຫດແຫ່ງການເຮັດບຸນປີໃໝ່

ໃນຕົ້ນແຫ່ງພັດທະກັບນີ້ ມີເສດຖີຄົນໜຶ່ງຮັ່ງມີທີ່ສຸດແຕ່ຈົນຢູ່ຢ່າງດຽວຄື ຈົນບໍ່ມີລູກສືບສະກຸນ ມີມື້ໜຶ່ງໄດ້ມີນັກເລງຄົນໜຶ່ງມີລູກສອງຄົນ ມີຜິວງາມເໝືອນດັ່ງທອງຄຳໄດ້ເຂົ້າໄປໃນບ້ານເຮືອນຂອງທ່ານເສດຖີຄົນນັ້ນ ແລ້ວກໍເວົ້າດູໝິ່ນທ່ານເສດຖີນັ້ນດ້ວຍປະການຕ່າງໆນາໆວ່າ ທ່ານເສດຖີເອີຍ! ເຖິງແມ່ນວ່າເຈົ້າຈະຮັ່ງມີລ່ຳລວຍປານໃດກໍຕາມ ຂ້າພະເຈົ້າກໍບໍ່ໄດ້ຄຶດຄ້ຳດອກເພາະເຈົ້າບໍ່ມີບຸດເມື່ອຕາຍແລ້ວກໍບໍ່ມີຄົນມາຮັບມໍຣະດົກສືບທອດ ເຈົ້າຈະມີສົມບັດຫລາຍກໍບໍ່ມີປະໂຫຍດອັນໃດເລີຍ ເສດຖີຄົນນັ້ນເມື່ອໄດ້ຍິນຈຶ່ງເອົາມາພິຈາຣະນາແລ້ວ ກໍເກີດມີຄວາມອັບອາຍຂາຍໜ້າ ຄັນມາເຖິງເດືອນຫ້າເສດຖີຄົນນັ້ນພ້ອມດ້ວຍພັນຣະຍາຂອງຕົນ ແລະບໍຣິວານ ຈຶ່ງໄດ້ກະກຽມເຄື່ອງໄປບວງສວງສັງເວີຍເຈົ້າແຫ່ງຕົ້ນໄຊ (ກົກຮັງ) ເພື່ອທຳພິທີຂໍບຸດ ເຈົ້າຕົ້ນໄຊ ຫລືກົກຮັງມີຄວາມກະຣຸນາຈຶ່ງໄດ້ໄປຂໍບຸດກັບພຣະຍາອິນ ພຣະຍາອິນຈຶ່ງແຕ່ງໃຫ້ທັມມະບານກຸມມານລົງໄປເກີດໃນທ້ອງພັນຣະຍາຂອງທ່ານເສດຖີ ທ່ານເສດຖີມີຄວາມຍິນດີ ພໍເມື່ອຄອດບຸດແລ້ວ ພໍ່ແມ່ກໍໄດ້ຕັ້ງຊື່ໃຫ້ວ່າ ທັມມະບານກຸມມານ ແລະກໍໄດ້ສ້າງຜາສາດໃຫ້ຢູ່ ໃກ້ໆກັບຕົ້ນໄຊ.

ຕາມຕຳນານໄດ້ກ່າວໄວ້ວ່າ ທັມມະບານກຸມມານນັ້ນເປັນເດັກນ້ອຍທີ່ສະຫລຽວສະຫລາດ ຈົນສາມາດຮຽນຈົບສິລະປະສາດຕ່າງໆຄືຮຽນຈົບໄຕຣເພດຕັ້ງແຕ່ອາຍຸ ໗ ປີ ທັງຍັງຮູ້ພາສາສັດຕ່າງໆ ອີກ

ດ້ວຍ ເປັນທີ່ປຶກສາດ້ານການມຸງຄຸນ ແລະບັນຫາຕ່າງໆ ຂອງຊາວຊຸມພູທະວີບ ຈິນກະບິນລະພຣົມເກີດຄວາມອິດສາອິດສະຫຍາ ໂດຍຄິດໄປວ່າມະນຸດຊາວຊຸມພູທະວີບຈະໝົດຄວາມໂຄຣົບນັບຖືຕົນ ຈຶ່ງຄິດຈະກຳຈັດໃຫ້ທັມມະບານກຸມມານໄດ້ຫາຍໄປຈາກໂລກນີ້ໄວໆ.

ມື້ນີ້ໜຶ່ງ ກະບິນລະພຣົມໄດ້ສະເດັດລົງມາພົບທັມມະບານກຸມມານ ເພື່ອມາຜູກປິດສະນາຖາມບັນຫາໃຫ້ທັມມະບານກຸມມານແກ້ ໂດຍມີຂໍ້ເດີມພັນກັນວ່າ ຖ້າທັມມະບານກຸມມານແກ້ບັນຫາບໍ່ໄດ້ຈະຕັດຫົວຂອງທັມມະບານກຸມມານ ຖ້າທັມມະບານກຸມມານແກ້ປິດສະນາໄດ້ ກະບິນລະພຣົມຈະຕັດຫົວບູຊາທັມມະບານກຸມມາ ທັມມະບານກຸມມານແກ້ບໍ່ໄດ້ຈຶ່ງຂໍຜັດໄປອີກ ໗ ວັນທັມມະບານກຸມມານຄິດແກ້ບັນຫານັ້ນ ໕ ວັນເຕັມກໍຍັງຄິດບໍ່ອອກບໍ່ເຂົ້າ ຄິດວ່າຄົງຈະຖືກຕັດຫົວແນ່ນອນ ຈຶ່ງໜີຈາກຜາສາດຂອງຕົນໄປນັ່ງຫລົບຊ້ອນຕົວຢູ່ໃຕ້ຕົ້ນຕານໃຫຍ່ ດ້ວຍຄິດວ່າຖ້າຈະຕາຍກໍຂໍໃຫ້ໄປຕາຍດ້ວຍເຫດອື່ນດີກວ່າຖືກຕັດຫົວເພາະແກ້ບັນຫາບໍ່ໄດ້.

ບັງເອີນໄດ້ຍິນນົກອິນຊີສອງຜົວເມັຍໄດ້ເວົ້າກັນ ຕົວເມັຍຖາມຜົວວ່າ ໃນມື້ອື່ນນີ້ຈະໄດ້ອາຫານຢູ່ບ່ອນໃດມາກິນ? ຕົວຜົວບອກວ່າຈະໄດ້ກິນຊາກສົບຂອງທັມມະບານກຸມມານ ຜູ້ເປັນເມັຍກໍຖາມຕໍ່ໄປວ່າ ເປັນຫຍັງຈຶ່ງຈະໄດ້ກິນຊາກສົບຂອງທັມມະບານກຸມມານ? ຕົວຜົວກໍເລົ່າເລື່ອງການທ້າພະນັນ ລະຫວ່າງທ້າວກະບິນລະພຣົມກັບທັມມະບານກຸມມານໃຫ້ເມັຍຟັງ ຄັນຖືກຕົວເມັຍ ຖາມເຖິງປິດສະນາ

ຕົວຜົວກໍເວົ້າໃຫ້ຟັງຕາມທີ່ກະບິນລະພຣົມຕັ້ງໃຫ້ ໆ ຂໍ້ ຄື: ພຣົມ ໔ ຣາສີ ໖ ນົກອິນຊີຕົວເມັຍກໍຖາມໄປອີກວ່າພຣົມ ໔ ຫນ້າແມ່ນຫຍັງ? ຣາສີ ໖ ແມ່ນຫຍັງ ? ນົກອິນຊີຕົວຜົວກໍຕອບດັ່ງນີ້:

ພຣົມ ໔ ຫນ້ານັ້ນຫມາຍເຖິງບຸກຄົນທີ່ຈະເປັນຜູ້ປົກຄອງຄົນຕ້ອງເປັນຜູ້ຮູ້ຈັກໃນທັມພຣົມມະວິຫານ ໔ ຢ່າງດັ່ງນີ້:

(໑).ເມຕຕາ ຄືເປັນຜູ້ທີ່ມີຄວາມສົງສານຕໍ່ເພື່ອນບໍຣິວານຂອງຕົນບໍ່ອິດສາບັງບຽດຕໍ່ເພື່ອນດ້ວຍກັນ ຫລືຄົນທົ່ວໄປບໍ່ທຳລາຍປະຫັດປະຫານຊີວິດມະນຸດ ຫລືສັດເດັຍຣະສານດ້ວຍຄວາມບໍ່ເປັນທັມ.

(໒). ກະຣຸນາ ຄືເປັນຜູ້ມີຄວາມສົງສານມີຄວາມເຫັນໃຈຄິດຊ່ວຍເຫລືອເກື້ອກູນອຸດຫນູນຕໍ່ຜູ້ທີ່ເຂົາໄດ້ຮັບຄວາມເດືອດຮ້ອນ ທຸກຍາກລຳບາກ ດ້ວຍການສະລະວັດຖຸສິ່ງຂອງຂອງຕົນ ເທົ່າທີ່ມີທຸກຢ່າງບໍ່ເຫັນແກ່ປະໂຫຍດສ່ວນຕົວໃຫ້ຫລາຍເກີນໄປ.

(໓). ມຸທິຕາ ຄືເປັນຜູ້ທີ່ມີຄວາມຍິນດີ ພາກພູມໃຈໃນເພື່ອນບໍຣິວານທີ່ເຂົາໄດ້ຮັບຄວາມຜາສຸກ ຄວາມຈະເຣີນ ທາງດ້ານຍົດຖາບັນດາສັກ ຫລືຮັ່ງມີສີສຸກດ້ວຍວັດຖຸເຂົ້າຂອງຕ່າງໆ ຕ້ອງເປັນຜູ້ຕັ້ງຢູ່ໃນ ຄວາມຍິນດີ ຄືບໍ່ມີຄວາມອິດສາຕາຮ້ອນເພາະເຫັນເຂົາໄດ້ດີ.

(໔). ອຸເປກຂາ ຄືເປັນຜູ້ຕັ້ງຢູ່ໃນຄວາມວາງເສີຍ ຕັ້ງຢູ່ໃນຄວາມເປັນກາງ ເມື່ອເຂົາໄດ້ຮັບຄວາມກ້າວຫນ້າທາງດ້ານການເລື່ອນຕຳແຫນ່ງຍົດຖາບັນດາສັກຕ່າງໆ ກໍບໍ່ດີໃຈແລະບໍ່ເສັຍໃຈຈົນເກີນໄປໃຫ້ກຳລັງໃຈສະເຫມີຕົ້ນສະເຫມີປາຍ ເມື່ອເຂົາຜິດພາດກໍວາງຕົວ

ເປັນກາງ ບໍ່ເຂົ້າຂ້າງບຸກຄົນທີ່ຜິດ ບໍ່ເຫັນແກ່ຄວາມຮັກ ຄວາມຊີງຊັງ ຄວາມຢ້ານກົວຕໍ່ອິດທິພົນ ບໍ່ຫວັ່ນໄຫວງ່າຍໆຕໍ່ບັນຫາທີ່ເກີດຂຶ້ນແລ້ວ ຫລືຈະເກີດຂຶ້ນໃນອະນາຄົດ ພ້ອມທີ່ຈະແກ້ໄຂໃຫ້ຢ່າງຖືກຕ້ອງ ແລະ ເປັນທັມ ແລະບໍ່ຢຽບຢ່ຳຊ້ຳເຕີມບຸກຄົນທີ່ອ່ອນແອກວ່າ ດັ່ງນີ້ເປັນຕົ້ນ.

ສ່ວນຣາສີ ໓ ນັ້ນແມ່ນມີຢູ່ໃນຕົວຂອງຄົນເຮົາທຸກຄົນ ເໝືອນກັນຕັ້ງແຕ່ເມື່ອເກີດຂຶ້ນມາແລ້ວນັບແຕ່ໄວເດັກນ້ອຍຈົນຮອດຜູ້ໃຫຍ່ ຈຳເປັນຕ້ອງມີປະຈຳແກ່ຄົນເຮົາຕະຫລອດໄປ ທັງເປັນການເຮັດໃຫ້ສຸກຂະພາບຮ່າງກາຍທຸກສ່ວນ ແລະສຸກຂະພາບຈິດໄດ້ຮັບຄວາມເບີກບານມ່ວນຊື່ນຊຸ່ມເຢັນຢູ່ຕະຫລອດເວລາຄື:
ໃນຍາມຕອນເຊົ້າຣາສີຂອງຄົນເຮົາຢູ່ບ່ອນໃດ ? ໃນຍາມຕອນທ່ຽງຣາສີຂອງຄົນເຮົາຢູ່ບ່ອນໃດ ? ໃນຍາມຕອນແລງຣາສີຂອງຄົນເຮົາຢູ່ບ່ອນໃດ ? ມີຣາສີລະອຽດດັ່ງນີ້:

(໑).ຣາສີໃນຍາມຕອນເຊົ້າ ຢູ່ທີ່ໃບໜ້າຄືເມື່ອຕື່ນຂຶ້ນມາຈາກທີ່ຫລັບທີ່ນອນເຮົາຕ້ອງຖູແຂ້ວ ແລະສ້ວຍໜ້າ ເພື່ອເຮັດໃຫ້ໃບໜ້າຂອງຕົນສະອາດຜ່ອງໃສບໍ່ເສົ້າໝອງ.

(໒). ຣາສີໃນຍາມຕອນທ່ຽງ ຢູ່ທີ່ໜ້າເອິກຄືຕ້ອງອາບນ້ຳຊຳລະຮ່າງກາຍທຸກສ່ວນໃຫ້ສະອາດ ນອກຈາກນີ້ແລ້ວກໍຍັງໄດ້ໃຊ້ນ້ຳອົບນ້ຳຫອມທາລູບໄລ້ໜ້າເອິກ ເພື່ອເຮັດໃຫ້ຈິດໃຈ ໃນຕອນທ່ຽງຊຸ່ມເຢັນຂຶ້ນ.

(໓). ຣາສີໃນຍາມຕອນແລງ ຢູ່ທີ່ຕີນຄືເມື່ອເຮົາຈະເຂົ້ານອນ

ຕ້ອງທຳຄວາມສະອາດຕີນສາກ່ອນ ຄືໃຊ້ນ້ຳລ້າງສິ່ງສົກກະປົກທີ່ເຮົາໄດ້ຢຽບສິ່ງອື່ນໆຕາມໜ້າດິນ ຫລືທີ່ອື່ນໃດກໍແລ້ວແຕ່.

ທ້າວມະບານກຸມມານນັ່ງໃຊ້ແນວຄິດຢູ່ໃຕ້ຕົ້ນຕານໄດ້ຮູ້ບັນຫາຈາກນິກອິນຊີເຊັ່ນນັ້ນກໍມີຄວາມດີໃຈ ຟ້າວລຸກກັບໄປຍັງຜາສາດຂອງຕົນ ເມື່ອທ້າວກະບິນລະພົມລົງມາຂໍຄຳຕອບຈາກຄຳ ຖາມທັງ ໓ ຂໍ້ທີ່ໃຫ້ໄວ້ກັບທ້າວມະບານກຸມມານ ທ້າວມະບານກຸມມານກໍແກ້ບັນຫານັ້ນໄດ້ຢ່າງຖືກ ຕ້ອງສົມບູນທັງ ໓ ຂໍ້ ເມື່ອເປັນເຊັ່ນນັ້ນແລ້ວ ກະບິນລະພົມຈຶ່ງຍອມຮັບວ່າຖືກຕ້ອງຄົບຖ້ວນ ກະບິນລະພົມເປັນຜູ້ຜ່າຍແພ້ແລະຍອມໃຫ້ຕັດຫົວຂອງຕົນບູຊາປັນຍາຂອງທ້າວມະບານກຸມມານ ກ່ອນທີ່ກະບິນລະພົມຈະຕັດຫົວຂອງຕົນນັ້ນ ກະບິນລະພົມໄດ້ບອກແກ່ທ້າວມະບານກຸມມານວ່າ ຫົວຂອງເຮົານີ້ ຖ້າຫາກປົງໄວ້ເທິງແຜ່ນດິນໄຟຈະໄໝ້ ຖ້າຫາກໂຍນຂຶ້ນໄປໃນອາກາດຝົນຈະບໍ່ຕົກ ຖ້າຖິ້ມລົງໃນມະຫາສະມຸດນ້ຳກໍຈະແຫ້ງ.

ກ່ອນຈະຕັດຫົວຂອງກະບິນລະພົມນັ້ນ ກະບິນລະພົມໄດ້ເອີ້ນເອົາທິດາທັງ ໗ ນາງ ເຊິ່ງເປັນບາດບໍລິກາ (ລູກສາວຂອງກະບິນລະພົມ) ໃຫ້ເອົາຂັນມາຮັບໄວ້ ແລ້ວຈຶ່ງໄດ້ຕັດຫົວ ຂອງຕົນບູຊາປັນຍາຂອງທ້າວມະບານກຸມມານ ທິດາທັງ ໗ ນາງກໍປະຕິບັດຕາມທີ່ພໍ່ສັ່ງ ແລະໄດ້ຈັດວາລະຂອງແຕ່ລະນາງໄວ້ປະຕິບັດທຸກໆ ປີເມື່ອເຖິງຣາສີທີ່ປ່ຽນວຽນມາຄົບປີ ທິດາທັງ ໗ ກໍເອົານ້ຳອົບ ນ້ຳຫອມມາຫົດສົງຫົວບິດາຂອງຕົນຕາມຄົບວຽນວາລະຂອງຕົນພວກເຮົາຊາວ

ລາວຈຶ່ງໄດ້ນໍາເອົານິທານເລື່ອງນີ້ມາເປັນອຸທາຫອນໃນການເຮັດບຸນປີໃຫມ່ຈົນເທົ່າທຸກວັນນີ້.

## ເດືອນຫົກ ( ເຮັດບຸນບັ້ງໄຟ ແລະບຸນວິສາຂະບູຊາ )

ບຸນບັ້ງໄຟ ເປັນບຸນທີ່ເຮັດໃຫ້ປະຊາຊົນໄດ້ມາຮ່ວມກັນສະຫນຸກສະຫນານເພີດເພີນຢ່າງມີຄວາມສຸກ ມີການເຮັດບັ້ງໄຟຈູດແຂ່ງຂັນກັນ ຖ້າຫາກບັ້ງໄຟຂອງຝ່າຍໃດ ຫລືຂອງຜູ້ໃດບໍ່ຂຶ້ນກໍຫາມກັນລົງຕົມ ບອກ ຫນອງ ຫລືບໍ່ດັ່ງນັ້ນກໍເອົາເຫລົ້າໃຫ້ກິນເປັນຕົ້ນ ເພາະວ່າໃນຍາມເດືອນຫົກນີ້ ຝົນກໍກໍາລັງຕົກລົມພັດ ແຕ່ລະຄົນກໍນິຍົມເຮັດບັ້ງໄຟມາຈູດໃນງານພິທີນີ້ ຫລັງຈາກຈູດບັ້ງໄຟຫມົດໄປແລ້ວ ກໍພາກັນມາຕີກອງເສັງກັນ ຖ້າສຽງກອງຂອງບ້ານໃດດັງແຮງກວ່າກໍຖືວ່າກອງຂອງບ້ານນັ້ນໄດ້ໄຊຊະນະ ບຸນນີ້ເຮັດຂຶ້ນເພື່ອເປັນພຸດທະບູຊາ ແລະຂໍຝົນທາງອ້ອມ ຫລືຈະເອີ້ນວ່າ ບຸນສົດຈະກໍໄດ້.

ໃນເດືອນຫົກນີ້ ກໍມີອີກບຸນຫນຶ່ງທາງພຣະພຸດທະສາສະນານັ້ນກໍຄືບຸນວິສາຂະບູຊາ ມີກໍາຫນົດການແນ່ນອນ ຄືວັນເພັງເດືອນຫົກຂອງທຸກໆປີ ຖ້າຫາກປີໃດມີເດືອນອະທິກະມາດ ຄືແປດສອງຫົນວັນວິສາຂະບູຊາກໍຈະຍ້າຍໄປເປັນວັນເພັງເດືອນເຈັດ ໃນວັນນີ້ພວກເຮົາຊາວພຸດໄດ້ຖືວ່າເປັນວັນທີ່ສໍາຄັນທີ່ສຸດ ເພາະເປັນວັນຄ້າຍວັນທີ່ພຣະພຸດທະອົງດັບຂັນເຂົ້າສູ່ປະຣິນິບພານ (ຕາຍ) ເຊິ່ງສາມການສາມສະໄຫມຂອງພຣະພຸດທະອົງ ກົງກັບໃນວັນເພັງເດືອນວິສາຂະທັງຫມົດພໍດີ ດ້ວຍເຫດນີ້ພຸດທະສາສະນິກກະຊົນຊາວພຸດທັງຫລາຍ

ຈຶ່ງນິຍົມເຮັດບຸນວິສາຂະບູຊາເປັນພິເສດ ໃນເມື່ອວັນເຊັ່ນນີ້ໄດ້ວຽນມາເຖິງທຸກໆປີ ແລະເອີ້ນວັນນີ້ວ່າ: ວັນວິສາຂະມາດ.

*ຊີວິດເຫມືອນກັບການເດີນທາງ ເຮືອນຮ່າງເຫມືອນສາລາທີ່ອາໄສ ບຸຄຄົລທີ່ບໍ່ມີທັມ ປຽບເຫມືອນສັດຮ້າຍທີ່ອາໄສໃນປ່າ*

*ການຫລອກລວງໂລກບໍ່ແມ່ນຂອງຫງ່າຍ ຫງ່າຍກໍ່ແຕ່ຄົນຫູເບົາ ໃຈເບົາ ສະຫມອງເບົາ*

## ຕຳນານບຸນບັ້ງໄຟ

ຈາກຕຳນານບຸນບັ້ງໄຟ ນິທານໄດ້ເລົ່າຂານສືບຕໍ່ກັນມາວ່າມີເທບພະເຈົ້າອົງຫນຶ່ງຢູ່ເທິງສວງສະຫວັນມີຊື່ວ່າ:ພຣະຍາແຖນພຣະຍາແຖນນີ້ເປັນເທບພຣະເຈົ້າທີ່ມີອິດທິພົນຕໍ່ໂລກມະນຸດ ເພາະເປັນເທບພະເຈົ້າທີ່ສາມາດສັ່ງໃຫ້ຝົນຕົກ ຫລືບໍ່ຕົກລົງທີ່ໂລກມະນຸດເຮົາກໍ່ໄດ້.

ໃນສະໄຫມນັ້ນ ພຣະໂພທິສັດໄດ້ຖືກຳເນີດເປັນພຣະຍາຄັນຄາກອາສັຍຢູ່ທີ່ຕົ້ນໂພໃຫຍ່ໃນເມືອງພັນທຸມາວະດີ ແຫ່ງໂລກມະນຸດເມື່ອນັ້ນ ພຣະຍາແຖນໄດ້ເກີດຄຽດແຄ້ນໃຫ້ໂລກມະນຸດເຮົາຢ່າງຮຸນແຮງ ເພາະວ່າພວກມະນຸດເຮົາໃນສະໄຫມນັ້ນບໍ່ຢູ່ໃນສິນທັມ ຝົນຕົກກໍ່ດ່າ ແດດອອກກໍ່ດ່າ ພຣະຍາແຖນໄດ້ຍິນດັ່ງນັ້ນຈຶ່ງເກີດຄວາມຄຽດແຄ້ນຊີງຊັງພວກມະນຸດ ພຣະອົງຈຶ່ງລົງໂທດພວກມະນຸດ ໂດຍສັ່ງບໍ່ໃຫ້ຝົນຕົກຕິດຕໍ່ກັນເຖິງ ໗ ປີ ໗ ເດືອນ ໗ ວັນ ເປັນເຫດໃຫ້ໂລກມະນຸດເຮົາເກີດໄພແຫ້ງແລ້ງ ແລະພົບກັບໄພອຶດຢາກທຸກຍາກແຄ້ນແສນສາຫັດ ພວກມະນຸດແລະສັບພະສັດທັງຫລາຍໄດ້ພາກັນ

ລົ້ມຫາຍຕາຍເສັຍຈາກກັນເປັນຈໍານວນຫລວງຫລາຍ ພຣະຍາຄັນຄາກ ແລະສັບພະສັດທັງຫລາຍຈິ່ງໄດ້ປະຊຸມແລະຕົກລົງກັນວ່າ ພວກເຮົາທັງຫລາຍຈະຕ້ອງເປີດເສິກກັບພຣະຍາແຖນ ໃຫ້ຮູ້ແພ້ຮູ້ຊະນະກັນໄປເລີຍ ຖ້າບໍ່ດັ່ງນັ້ນພຣະຍາແຖນຈະບໍ່ຢຸດ ກັ່ນແກ້ງໂລກມະນຸດຂອງພວກເຮົາ.

## ກອງທັບທໍາອິດ

ພຣະຍາຄັນຄາກ ໄດ້ແຕ່ງຕັ້ງໃຫ້ພຣະຍານາກເປັນແມ່ທັບທໍາອິດໃຫ້ຍົກເອົາທະຫານຂຶ້ນສູ້ຮົບກັບພຣະຍາແຖນ ຢູ່ເທິງສວງສະຫວັນ ຜົນການສູ້ຮົບຂອງພຣະຍານາກໃນຄັ້ງນີ້ ໄດ້ຜ່າຍແພ້ແກ່ກອງທັບຂອງພຣະນາແຖນ ຈໍາເປັນຕ້ອງຖອຍທັບລົງມາຈາກສວງສະຫວັນ ເພາະພຣະຍານາກ ແລະເຫລົ່າກອງທັບທະຫານທັງຫມົດ ໄດ້ຖືກທະຫານຂອງພຣະຍາແຖນຟັນຮ່າງກາຍຈົນຫມຸ່ນ ເປັນຫມື່ນເປັນແສນຮອຍເຮົາຈິ່ງເອີ້ນກັນວ່າ ເກັດພຣະຍານາກ ດັ່ງເຊັ່ນທີ່ເຮົາໄດ້ພົບເຫັນຕົນຕົວຂອງພຣະຍານາກໃນບັນໄດພັດທະສີມາ ຫລືຫໍແຈກໃນປັດຈຸບັນນີ້.

## ກອງທັບທີສອງ

ເມື່ອພຣະຍານາກ ໄດ້ກັບມາດ້ວຍຄວາມເສັຍໄຊດັ່ງນັ້ນແລ້ວພຣະຍາຄັນຄາກຈິ່ງໄດ້ແຕ່ງຕັ້ງໃຫ້ພຣະຍາຕໍ່ ພຣະຍາແຕນ ແລະພຣະຍາເຜິ້ງເປັນແມ່ທັບໃຫຍ່ ຍົກເອົາທະຫານຂຶ້ນໄປສູ້ຮົບກັບພຣະຍາແຖນຢູ່ເທິງສວງສະຫວັນ ຜົນການສູ້ຮົບຄັ້ງນີ້ ພຣະຍາສັດທັງ ໓ ໄດ້ສູ້ຮົບກັບທະຫານ ຂອງພະຍາແຖນຢ່າງດຸເດືອດ ໃນທີ່ສຸດພຣະຍາ

ສັດທັງ ໖ ກໍຖືກທະຫານຂອງພຣະຍາແຖນເອົາດາບຟັນກາງແອວ ຈົນແອວຂອງພຣະຍາສັດທັງ ໖ ເກືອບຂາດ ດັ່ງທີ່ພວກເຮົາເຫັນຕໍ່ແຕນ ແລະເຜິ້ງມີແອວກິ່ວໆໃນປັດຈຸບັນນີ້ ຜົນການຕໍ່ສູ້ຂອງພຣະຍາສັດທັງ ໖ ໄດ້ຜ່າຍແພ້ອີກຕາມເຄີຍ ຈຶ່ງໄດ້ແຕກທັບກັບລົງມາຍັງໂລກມະນຸດດ້ວຍຄວາມປະຣາໄຊ.

ເຫຼົ່າສັບພະສັດທັງຫລາຍ ເຫັນເຫດການດັ່ງນັ້ນຈຶ່ງມາປະຊຸມກັນໃຫມ່ອີກ ການປະຊຸມຄັ້ງນີ້ເປັນຄັ້ງທີ ໖ ກອງປະຊຸມໃນຄັ້ງນີ້ໄດ້ເຫັນດີໃຫ້ພຣະຍາຄັນຄາກເປັນຈອມທັບ ແລະບັງຄັບບັນຊາກອງທັບທັງຫມົດ ແລ້ວນໍາທັບຂຶ້ນໄປສູ້ຣົບກັບພຣະຍາແຖນເປັນຄັ້ງທີ ໖ ພຣະຍາຄັນຄາກ ໄດ້ແຕ່ງຕັ້ງກອງທັບມອດຂຶ້ນໄປກ່ອນ ແລະໃຫ້ໄປທໍາຫນ້າທີ່ເຈາະຄັນທະນູຫລາວແຫລນ ແລະອາວຸດຕ່າງໆຂອງກອງທັບພຣະຍາແຖນ ຈົນເປັນເຫດໃຫ້ພວກມອດໄດ້ເຈາະທຸກສິ່ງທຸກຢ່າງຢູ່ໃນປັດຈຸບັນນີ້ ແລະແລ້ວກໍແຕ່ງຕັ້ງໃຫ້ກອງທັບແມງງອດຂຶ້ນໄປຊ້ອນຢູ່ໃນເສື້ອຜ້າຂອງທະຫານພຣະຍາແຖນ ແລະກອງທັບຂີ້ເຂັບຂຶ້ນໄປຊ້ອນໂຕຢູ່ໃນກອງຟືນ ແລະເຮືອນຄົວຂອງກອງທັບທະຫານພຣະຍາແຖນ ຈົນເປັນເຫດໃຫ້ແມງງອດຂີ້ເຂັບ ໄດ້ຊ້ອນໂຕຢູ່ໃນກາບໄມ້ຈົນຕາບເທົ່າທຸກວັນນີ້.

## ພຣະຍາຄັນຄາກຍົກກອງທັບຂຶ້ນຕີ

ເມື່ອພຣະຍາຄັນຄາກ ໄດ້ແຕ່ງຕັ້ງໃຫ້ທະຫານແຕ່ລະກອງທັບໄປປະຈໍາການຮຽບຮ້ອຍແລ້ວ ຄິດວ່າການເຮັດສົງຄາມໃນຄັ້ງນີ້ຕ້ອງ

ເອົາຊະນະໃຫ້ໄດ້ແນ່ນອນ ພໍພຣະຍາຄັນຄາກຍົກກອງທັບ ຂຶ້ນໄປເຖິງສວງສະຫວັນແລ້ວ ທະຫານຂອງພຣະຍາແຖນເຫັນດັ່ງນັ້ນຈຶ່ງກະກຽມກັນຫົ່ມເສື້ອຜ້າ ພໍສວມໃສ່ກໍ່ຖືກແມງງອດຕອດ ສ່ວນອາວຸດຕ່າງໆ ເຊັ່ນ: ຄັນທະນູ ຫລາວ ແຫລນ ແລະອາວຸດຕ່າງໆ ກໍໄດ້ຖືກມອດເຈາະທຳລາຍຈົນໃຊ້ການບໍ່ໄດ້ ພໍທະຫານພຣະຍາແຖນແລ່ນໄປຈັບເອົາດັ້ນຟືນແທນອາວຸດ ກໍຖືກຂີ້ເຂັບຕອດ.

ເມື່ອກອງທັບພຣະຍາແຖນກຳລັງສັບສົນວຸ້ນວາຍຢູ່ນັ້ນ ກອງທັບຂອງພຣະຍາຄັນຄາກ ກໍ່ໄດ້ເຂົ້າໂຈມຕີກອງທັບຂອງພຣະຍາແຖນແຕກທັບ ແລະຝ່າຍແພ້ເສັຍໄຊໃຫ້ແກ່ກອງທັບຂອງພຣະຍາຄັນຄາກ ພຣະຍາແຖນຂໍຍອມຈຳນົນທຸກຢ່າງ ພຣະຍາຄັນຄາກຕ້ອງການອັນໃດກໍ່ຈະເຮັດໃຫ້ຕາມຄວາມປະສົງຂອງພຣະຍາຄັນຄາກ ພຣະຍາຄັນຄາກແລະພຣະຍາແຖນຈຶ່ງໄດ້ເຮັດສັນຍາສະຫງົບເສິກຈາກນັ້ນຈຶ່ງໄດ້ສະເໜີເງື່ອນໄຂໃນສັນຍານັ້ນໃຫ້ພຣະຍາແຖນປະຕິບັດ ໓ ຂໍ້ໃຫຍ່ໆ ດັ່ງນີ້:

(໑). ຖ້າພຣະຍາແຖນເຫັນບັ້ງໄຟຈູດຈາກໂລກມະນຸດເມື່ອໃດພຣະຍາແຖນຕ້ອງສັ່ງໃຫ້ ຝົນຕົກລົງມາໃນໂລກມະນຸດທັນທີ.

(໒). ຖ້າພຣະຍາແຖນໄດ້ຍິນສຽງຮ້ອງຂອງພວກກົບຂຽດອຶ່ງອ່າງ ຮ້ອງ ສະແດງວ່າຝົນຕົກລົງມາເຖິງໂລກມະນຸດແລ້ວ

(໓). ຖ້າພຣະຍາແຖນໄດ້ຍິນສຽງ ວ່າວ ໂບດ ຫລືສຽງຄຸ່ຍພຣະຍາແຖນຕ້ອງສັ່ງໃຫ້ຝົນຢຸດຕົກໃນທັນທີ.

ພຣະຍາຄັນຄາກສະເຫນີດັ່ງນັ້ນແລ້ວ ພຣະຍາແຖນຍອມຮັບປະຕິບັດຕາມສັນຍາຂອງພຣະຍາຄັນຄາກທຸກຢ່າງ ດັ່ງນັ້ນພຣະຍາຄັນຄາກຈຶ່ງໄດ້ປ່ອຍໃຫ້ພຣະຍາແຖນເປັນອິດສະຣະພາບໄປໄດ້.

ປະເພນີບຸນບັ້ງໄຟ ຈຶ່ງໄດ້ກຳເນີດມາຕັ້ງແຕ່ບັດນັ້ນເປັນຕົ້ນມາ ຄືເມື່ອຈະເລີ່ມລົງມືເຮັດນາຕ້ອງເຮັດບັ້ງໄຟຈູດຂຶ້ນໄປໃຫ້ພຣະຍາແຖນໄດ້ເຫັນ ແລະຮັບຮູ້ເສັຍກ່ອນ ພຣະຍາແຖນຈຶ່ງຈະສັ່ງໃຫ້ຝົນຕົກລົງມາທັນທີ ປະເພນີບຸນບັ້ງໄຟຈຶ່ງໄດ້ເຮັດສືບມາຈົນຕາບເທົ່າທຸກວັນນີ້.



## ເດືອນເຈັດ(ເຮັດບຸນບູຊາເທວະດາ ຫລືບຸນຊ່ຳຣະບ້ານເຮືອນ )

ການເຮັດບຸນບູຊາເທວະດາ ແລະທ້າວມະເຫສັກຫລັກເມືອງ ເປັນພິທີບຸນ ທີ່ບັນພະບູຣຸດຂອງພວກເຮົາໃນອະດີດ ມີປູ່ທວດຍ່າທວດ ປູ່ຍ່າ ຕາຍາຍ ເພິ່ນເຄີຍເຮັດພິທີນີ້ມາດົນນານແລ້ວ ແລະໄດ້ປະຕິບັດສືບທອດກັນມາຮອດປັດຈຸບັນນີ້ ໃນສະໄຫມກ່ອນນັ້ນບັນພະບູຣຸດຂອງເຮົາກໍມີການເອົາຣຶກເອົາໄຊຂຶ້ນທຸກໆປີ ເພື່ອເປັນສີຣິມຸງຄຸນໃຫ້ແກ່ພວກເຂົາເຈົ້າ.

ໃນປັດຈຸບັນນີ້ ຊາວລາວເຮົາກໍຍັງຖືຕາມບັນພະບູຣຸດສືບມາຈົນຮອດມື້ນີ້ ຄືວ່າ ກ່ອນຈະລົງມືເຮັດໄຮ່ ເຮັດນາ ເຮັດສວນ ຊາວໄຮ່ ຊາວນາ ຊາວສວນ ທຸກໆຄອບຄົວ ຫລືທຸກໆຄົນ ຈະມີການລວມກຸ່ມຄົນພາຍໃນຫມູ່ບ້ານ ຈັດພິທີບຸນຊ່ຳຣະບ້ານຂຶ້ນເພື່ອເອົາຣຶກເອົາໄຊ ແລະເປັນສີຣິມຸງຄຸນແກ່ຕົນ ກ່ອນຈະລົງມືເຮັດໄຮ່ເຮັດສວນ ການເຮັດບຸນຊ່ຳຣະບ້ານນີ້ຈະຈັດຂຶ້ນຢູ່ໃນກາງຫມູ່ບ້ານ ບໍ່ແມ່ນຈັດຂຶ້ນໃນວັດ ຊາວບ້ານກໍຈັດຕຽມດອກໄມ້ທູບທຽນ ນ້ຳຣົດ ນ້ຳອົບນ້ຳຫອມ ພານມຸງຄຸນ ພາຂວັນ ຝ້າຍຜູກແຂນ ຫີນແຫ່ຫີນຊາຍກະໂທງສາມຫລ່ຽມແລະກະໂທງສາມແຈ ເມື່ອທາງບ້ານຈັດພິທີພຽບພ້ອມແລ້ວ ກໍໄປອາຣາດທະນາພຣະສົງຄະເຈົ້າມາສູດປະຣິດຕະມຸງຄຸນແລະເທດຫນັງສືອຸບາດຫລວງ ຫນັງສືປັນຍາປາຣະມີ ຫນັງສືສັບໄຊ ຫນັງສືທີບພະມົນ ຫນັງສືອຸນຫັດສະວິໄຊ ຫນັງສືຍັນທູນ ສູດປະຣິດຕະມຸງຄຸນ ໖ ຄືນ ພໍ່ເສັດ ໖ ຄືນແລ້ວ ກໍທຳບຸນຕັກບາດ ຖວາຍສັງ

ຄະຫານແກ່ພຣະສົງ ແລະອຸທິດສ່ວນບຸນສ່ວນກຸສົນໄປໃຫ້ສັບພະສັດ ແລະຜູ້ມີບຸນຄຸນທັງຫລາຍ ຖືໄດ້ວ່າເປັນການຈົບພິທີເຮັດບຸນຊຳຣະບ້ານໃນວັນນັ້ນ.

ຫລັງຈາກເຮັດບຸນຊຳຣະບ້ານແລ້ວ ຊາວບ້ານກໍມີການຈັດພິທີບວງສວງເທວະດາ ແລະບວງສວງທ້າວມະເຫສັກຫລັກບ້ານ ຫລັກເມືອງຂຶ້ນຄືບູຊາບວງສວງຜີບ້ານຜີເມືອງນັ້ນເອງໂດຍມີການ ຈັດຕຽມເຄື່ອງບູຊາເທວະດາ ແລະທ້າວມະເຫສັກຫລັກບ້ານຫລັກເມືອງຂຶ້ນພາຍໃນຫມູ່ບ້ານຂອງພວກຕົນ ໃນເບື້ອງຕົ້ນນັ້ນຈະເຮັດລວມກັນເມື່ອສຳເລັດພິທີລວມແລ້ວກໍເຮັດຂອງໃຜຂອງລາວ ເຄື່ອງກິຍາບູຊາບວງສວງເທວະດາໄດ້ແກ່ອາຫານຫວານຄາວແລະຫມາກພ້າວ ກ້ວຍຫອມເປັນເຄື່ອງບວງສວງ ສ່ວນເຄື່ອງກິຍາບູຊາບວງສວງທ້າວມະເຫສັກຫລັກເມືອງນັ້ນ ມີເຫລົ້າແກ້ວໄກ່ໂຕ ເຊິ່ງທຸກໆຄອບຄົວ ຫລືທຸກໆຄົນຕ້ອງໃຫ້ມີເຫລົ້າແກ້ວໄກ່ໂຕໄປຮ່ວມໃນພິທີນີ້ດ້ວຍ ສ່ວນໃຫຍ່ແລ້ວມັກໄປເຮັດພິທີຢູ່ທີ່ທ່ານອກບ້ານ ຕາມທົ່ງໄຮ່ ທົ່ງນາຂອງຕົນທຳການບູຊາບວງສວງ ຫລັກບ້ານຫລັກເມືອງ ຜີພໍ່ ຜີແມ່ ຜີປູ່ຍ່າຜີຕາຍາຍ ພວກອາຣັກຂາເທວະດາ ແລະບັນພະບຸຣຸດທີ່ຮັກສາໄຮ່ນາຮົ້ວສວນ ແລະອື່ນໆ.

## ມູນເຫດແຫ່ງການເຮັດບຸນນຊຳຣະ

ມີເລື່ອງເລົ່າໄວ້ໃນພຣະທັມມະບົດວ່າ: ຄັ້ງຫນຶ່ງທີ່ເມືອງໄພສາລີ ເກີດທຸບພິກຂະໄພ (ໄພແຫ້ງແລ້ງ) ຊາວເມືອງເກີດຄວາມທຸກຍາກແສນສາຫັດ ເຂົ້າຍາກໝາກແພງ ເພາະເກີດຝົນແລ້ງ ຜູ້ຄົນແລະຫມູ່ສັດ ຊ້າງ ມ້າ ງົວ ຄວາຍ ລົ້ມຕາຍລົງໄປຈຳນວນຫລວງຫລາຍ ເປັນໂລກອະຫິວາລະບາດທົ່ວເມືອງ ເມືອງໄພສາລີເຕັມໄປດ້ວຍຊາກສົບເມື່ອເຫດການເປັນເຊັ່ນນີ້ ຈຶ່ງໄປອາຣາດທະນາເອົາພຣະພຸດທະເຈົ້າມາຂະຈັດປັດເປົ່າ ພຣະອົງພ້ອມດ້ວຍພຣະສົງ ໕໐໐ ອົງສະເດັດຈາກກຸງຣາຊະຄຶມາສູ່ເມືອງໄພສາລີ ໂດຍທາງເຮືອ ໗ ວັນຈຶ່ງເຖິງ ເມື່ອພຣະອົງສະເດັດມາເຖິງແລ້ວ ຝົນຫ່າໃຫຍ່ກໍໄດ້ຕົກລົງມາ ແລະນ້ຳກໍໄຫລຫລາກທົ່ວພື້ນດິນ ນ້ຳສູງພຽງຫົວເຂົ່າຊາກສົບຄົນແລະສັດຖືກນ້ຳພັດລອຍໄປຕາມລຳນ້ຳ ຄັ້ງນັ້ນພຣະພຸດທະອົງຈຶ່ງເຮັດນ້ຳມົນໃສ່ບາດ ໃຫ້ພຣະອານົນໄປຫົດທົ່ວພຣະນະຄອນໂລກໄພໄຂ້ເຈັບກໍສູນສິ້ນໄປ ດ້ວຍອະນຸພາບຂອງພຣະພຸດທະເຈົ້າ ດ້ວຍເຫດນີ້ຄົນບູຮານລາວເຮົາຈຶ່ງຍຶດຖືເປັນປະເພນີ ເມື່ອເຖິງເດືອນ ໗ ຂອງທຸກໆ ປີ ຈະພາກັນເຮັດບຸນຊຳຣະບ້ານເຮືອນເປັນປະຈຳ.

## ເດືອນແປດ (ເຮັດບຸນອະທິດຖານເຂົ້າພັນສາ)

ບຸນອະທິດຖານເຂົ້າພັນສາ ຄົນລາວເຮົານິຍົມເອີ້ນສັ້ນໆ ວ່າ ບຸນເຂົ້າພັນສາ ບຸນເຂົ້າພັນສານັ້ນ ເປັນວັນທີ່ພຣະພິກຂຸສາມະເນນທັງຫມົດທົ່ວປະເທດ ພ້ອມໃຈກັນເຂົ້າພັນສາເມື່ອຣະດູນີ້ມາເຖິງພຣະສົງສາມະເນນທຸກໆອົງ ຕ້ອງພັກອາໄສຢູ່ປະຈໍາໃນວັດນັ້ນໆໃຫ້ຄົບຕາມກໍານົດພຣະພຸດທະອົງ ຊົງວາງໄວ້ໃນພຣະວິໄນບັນຍັດວ່າໃຫ້ພຣະສົງສາມະເນນຢູ່ຈໍາພັນສາ ໓ ເດືອນເຕັມ ຄືນັບແຕ່ວັນແຮມຄໍ່າຫນຶ່ງເດືອນແປດ ຈົນຮອດວັນຂຶ້ນ ໑໕ ຄໍ່າ ເດືອນ ໑໑ ຈະອອກໄປຄ້າງຄືນຢູ່ວັດອື່ນ ຫລືບ້ານເຮືອນນອກຈາກບ່ອນທີ່ຕົນອະທິດຖານແມ່ນບໍ່ໄດ້ໂດຍເດັດຂາດ ຖ້າຫາກວ່າມີເຫດຂັດຂ້ອງຈໍາເປັນທີ່ສຸດແລະຈໍາເປັນຕ້ອງໄປ ກ່ອນຈະໄປກໍຕ້ອງມີການສັດຕາຫະຫລືບອກລາເພື່ອນສະຫະທັມມິກກ່ອນຈຶ່ງໄປໄດ້ ຕາມທີ່ພຣະວິໄນບັນຍັດໄວ້ຢ່າງນັ້ນ ຖ້າພຣະພິກຂຸອົງນັ້ນບໍ່ ເຮັດຕາມພຣະວິໄນ ກໍຖືວ່າພຣະພິກຂຸຮູບນັ້ນຂາດພັນສາໄປໂດຍບໍ່ມີເຫດຜົນຄືບໍ່ໄດ້ຮັບອານິສົງຂອງພັນສານັ້ນ.

*ບັນໄດທີ່ກ້າວຂຶ້ນສູ່ຄວາມເປັນມະຫາເສດຖີຄື:*

*ອົດທົນ ອົດກັ້ນ ອົດອອມ ຫາພໍໃຊ້ ຈ່າຍໃຫ້ມີເຫລືອ ລວຍແນ່ນອນ*

## ມູນເຫດແຫ່ງການເຂົ້າພັນສາ

ມີເລື່ອງເລົ່າໄວ້ໃນວັດສູປະນາຍົກະຂັນທະກະວ່າ ພຣະພິກຂຸທັງຫລາຍໄດ້ຈາຣິກທ່ຽວໄປ ສະແຫວງຫາໂມກຂະທັມ ອັນເປັນທັມທີ່ອອກຈາກທຸກ ພຣະພິກຂຸທັງຫລາຍເຫລົ່ານັ້ນ ໄດ້ມຸ້ງໜ້າໄປສູ່ຊຸມນະບົດນ້ອຍໃຫຍ່ ໄປຕາມທົ່ງໄຮ່ທົ່ງນາ ຫ້ວຍໜອງຄອງບຶງພູຜາປ່າໄມ້ ບໍ່ມີເວລາພັກຜ່ອນທັງຣະດູຮ້ອນຣະດູຝົນ ແລະຣະດູໜາວໂດຍສະເພາະຣະດູຝົນ ພຣະພິກຂຸເຫລົ່ານັ້ນ ກໍຈາຣິກໄປຢຽບພືດຜົນແລະເຄື່ອງປູກຂອງຝັງໃນໄຮ່ນາຮົ້ວສວນຂອງປະຊາຊົນ ຈົນໄດ້ຮັບຄວາມເສັຍຫາຍ ສັດນ້ອຍສັດໃຫຍ່ກໍພອຍລຳບາກໄປດ້ວຍ ຊາວບ້ານເຫັນດັ່ງນັ້ນແລ້ວຈຶ່ງຮ້າຍດ່າໃຫ້ ພຣະພິກຂຸສົງທັງຫລາຍ ເລື່ອງນີ້ໄດ້ໄປເຖິງພຣະກັນ (ຫູ) ຂອງພຣະສັມມາສັມພຸດທະເຈົ້າ ພຣະອົງຈຶ່ງຊົງບັນຍັດພຣະວິໄນຫ້າມພິກຂຸທັງຫລາຍສັນຈອນໃນຣະດູຝົນ ແລະໃຫ້ພິກຂຸໃນພຣະພຸດທະສາສະນາເຂົ້າຢູ່ຈຳພັນສາຕະຫລອດ ໓ ເດືອນໃນລະດູຝົນ ໂດຍບໍ່ໃຫ້ພຣະພິກຂຸອົງໃດໄປນອນຄ້າງຄືນຢູ່ບ່ອນອື່ນ ຖ້າອອກໄປແມ່ນຂາດພັນສາ ແລະຕ້ອງອາບັດທຸກກົດ ເວັ້ນໄວ້ແຕ່ກໍຣະນີຈຳເປັນ ເຊັ່ນ: ບິດາມານດາປ່ວຍ ພຣະອຸປັຊຊາ ອາຈາຣຍ໌ອາພາດສາມາດສັດຕາຫະໄປໄດ້ ແຕ່ຕ້ອງໃຫ້ກັບມາພາຍໃນ ໗ ວັນ ພັນສາຈຶ່ງຈະບໍ່ຂາດ ນັກປຣາດບູຮານລາວເຮົາຈຶ່ງໄດ້ນຳພາເຮັດບຸນເຂົ້າພັນສາ ນັບແຕ່ນັ້ນເປັນຕົ້ນມາ.

## ເດືອນເກົ້າ (ເຮັດບຸນເຂົ້າປະດັບດິນ)

ຕົກຮອດເດືອນເກົ້າ ຊາວພຸດລາວເຮົາກໍພາກັນເຮັດບຸນອີກຄັ້ງໜຶ່ງຄື: ເຮັດບຸນເຂົ້າປະດັບດິນ ຄໍາວ່າ: ເຂົ້າປະດັບດິນນັ້ນກໍຄືເຮົາເອົາເຂົ້າຕົ້ມ ເຂົ້າໜົມ ອາຫານຫວານຄາວ ໝາກພູ ແລະຢາສູບຫໍ່ດ້ວຍໃບຕອງກ້ວຍ ແລ້ວນໍາໄປປັງໄວ້ຕາມດິນ ຫລືຫ້ອຍໄວ້ຕາມຕົ້ນໂພຕົ້ນໄຮ ຕາມຫລັກຕ້າຍວັດເປັນຕົ້ນ ໂດຍມີຄວາມເຊື່ອຖືວ່າຍົມພິບານຈະເປີດປະຕູນະຣົກໃຫ້ສັບພະສັດທັງຫລາຍ ໄດ້ອອກມາຫາກິນຍັງເຂົ້າປະດັບດິນຂອງຍາດພີ່ນ້ອງທີ່ໄດ້ຢາຍໄວ້ ຕາມໜັງສືສະຫລອງເຂົ້າປະດັບດິນເພິ່ນກ່າວໄວ້ຢ່າງນີ້ ອັນແທ້ຈິງນັ້ນຖ້າຫາກເຮົາເອົາເຂົ້າຈໍານວນນັ້ນມາຖວາຍເປັນ ສັງຄະທານໃຫ້ແກ່ພຣະພິກຂຸສົງສາມະເນນໃນວັດຜູ້ຊົງສິນ ແລ້ວຈຶ່ງຢາດນໍ້າອຸທິດສ່ວນບຸນໄປຫາຜູ້ຕາຍ ຜູ້ຕາຍຈຶ່ງຈະໄດ້ຮັບສ່ວນບຸນກຸສົນ ດີກວ່າເຮົາຈະເອົາເຂົ້າປາອາຫານອັນມີຄຸນຄ່າໄປຢາຍໄວ້ຕາມດິນໃຫ້ມົດແມງໄມ້ກິນ ໂດຍບໍ່ມີຄຸນປະໂຫຍດອັນໃດເລີຍ ຫລືເຊື່ອຖືແບບບໍ່ມີເຫດຜົນໃດໆເລີຍ ບຸນເຂົ້າປະດັບດິນນັ້ນມີກໍານົດແນ່ນອນ ຄືໃນວັນແຮມ ໑໔ ຄໍ່າ ເດືອນ ໙ ຂອງທຸກໆປີ.

### ມູນເຫດແຫ່ງການເຮັດບຸນເຂົ້າປະດັບດິນ

ມີເລື່ອງເລົ່າໄວ້ໃນພຣະທັມມະບົດວ່າຍາດພີ່ນ້ອງຂອງພຣະເຈົ້າພິມພິສານກິນຂອງສົງ ເມື່ອຕາຍໄປແລ້ວພີ່ນ້ອງຂອງເພິ່ນກໍໄປຕົກນະຣົກ ເກີດເປັນເຜດໃນນະຣົກຫລາຍຮ້ອຍຊາດ

ພຣະເຈົ້າພິມພິສານຖວາຍທານແດ່ ພຣະພຸດທະເຈົ້າ ແຕ່ບໍ່ໄດ້ຢາດນ້ຳອຸທິດສ່ວນບຸນສ່ວນກຸສົນໄປໃຫ້ຍາດທີ່ຕາຍໄປພໍຮອດກາງຄືນມາພວກຍາດພີ່ນ້ອງທີ່ຕາຍຈາກໄປໄດ້ມາປະກົດກາຍເຮັດເປັນເງົາເປັນຕາຢ້ານໃຫ້ປາກົດໄກ້ກັບພຣະຣາຊະນິເວດພຣະເຈົ້າພິມພິສານພໍຮຸ່ງເຊົ້າກໍ່ ໄດ້ສະເດັດໄປທູນຖາມພຣະສັມມາ ສັມພຸດທະເຈົ້າພຣະອົງໄດ້ທູນເຫດການທີ່ເກີດຂຶ້ນ ໃຫ້ພຣະເຈົ້າພິມ ພິສານຊົງຊາບຈຶ່ງໄດ້ຖວາຍທານອີກ ແລ້ວຢາດນ້ຳອຸທິດສ່ວນ ບຸນສ່ວນກຸສົນໄປໃຫ້ຍາດຕິພີ່ນ້ອງຜູ້ທີ່ຕາຍໄປແລ້ວ ແລະກໍ່ຖືເປັນປະເພນີທີ່ຕ້ອງເຮັດເປັນປະຈຳທຸກໆປີ ບໍ່ໄດ້ຂາດຕັ້ງແຕ່ນັ້ນເປັນຕົ້ນມາຈົນເຖິງປັດຈຸບັນ.



## ເດືອນສິບ (ເຮັດບຸນເຂົ້າສາກ ຫລື ເຂົ້າສະຫລາກ)

ພໍເຖິງເດືອນສິບມາຮອດແລ້ວ ຊາວພຸດເຮົາກໍພ້ອມໃຈກັນເຮັດບຸນເຂົ້າສາກ ຫລືບຸນເຂົ້າສະຫລາກກະພັດ ໂດຍເຮັດເປັນຕົ້ນກາລະພິກ ແລະນໍາເຂົ້າປາອາຫານຫວານຄາວເຂົ້າໄປຖວາຍນໍາດ້ວຍ ຕອນແລງຂອງມື້ເພັງ ໑໔ ຄໍ່ານັ້ນນິມົນພຣະສົງຄະເຈົ້າເຂົ້າໄປສູດປະຣິດຕະມຸງຄຸນເຮືອນ ເພື່ອໃຫ້ເກີດຄວາມສະຫວັດດີ ມື້ເພັງ ໑໕ ຄໍ່າ ເດືອນ ໑໐ ຈຶ່ງນໍາຈະຕຸປັດໄຈໄທຍະທານຕ່າງໆ ເຂົ້າໄປໃນວັດ ຈາກນັ້ນກໍໃຫ້ຜູ້ທີ່ເປັນຫົວໜ້າຝ່າຍຄະຣາວາດຂຽນຊື່ ນາມສະກຸນຂອງຕົນໃສ່ເຈັ້ຽໃຫ້ຊັດເຈນຄັກແນ່ ແລ້ວຈຶ່ງນໍາລົງໄປໃສ່ໃນບາດ ເມື່ອພຣະພິກຂຸສາມະເນນອົງໃດ ຈັບຖືກສະຫລາກຂອງຕົນກໍໃຫ້ເອົາໄປຖວາຍໃຫ້ອົງນັ້ນໂດຍບໍ່ໄດ້ຈໍາເພາະເຈາະຈົງ ແກ່ອົງໃດອົງໜຶ່ງ ພ້ອມທັງນໍາອາຫານຫວານຄາວເຂົ້າໄປນໍາດ້ວຍ ພໍພຣະສົງສາມະເນນສັນເສັດແລ້ວ ກໍພ້ອມກັນຟັງເທດເລື່ອງ ອານິສົງສະຫລາກກະພັດ ແລະຟັງເທດເລື່ອງຊາດົກຕ່າງໆ ຕາມທາງວັດນັ້ນໆຈະຈັດໃຫ້ມີຂຶ້ນ.

ບຸນນີ້ເຮັດເພື່ອເປັນການອຸທິດສ່ວນບຸນສ່ວນກຸສົນໃຫ້ຜູ້ທີ່ລ່ວງລັບໄປແລ້ວ ເຊັ່ນດຽວກັນກັບບຸນເຂົ້າປະດັບດິນ ໂດຍມີເວລາຫ່າງກັນ ໑໕ ວັນ ມີຄວາມເຊື່ອກັນວ່າ ເປັນມື້ພວກເຜດຜີປີສາດຈະພາກັນກັບໄປທີ່ເມືອງນະຣົກຄືນ ຕາມເຖົ້າແກ່ຜູ້ຮູ້ເຫລົ່າໃຫ້ຟັງວ່າ

ຜົດບາງໂຕກໍອາດຖືໂອກາດ ລັກມາເກີດນໍາຄົນເຮົາ ຖ້າຫາກເຮົາບໍ່ເຮັດໃຫ້ໃຈສະບາຍ ເອົາແຕ່ຄວາມໂມໂຫ ໂທໂສ ເຂົ້າງອບງໍາຈິດໃຈ ໂດຍໃຫ້ອາຣົມຢູ່ເຫນືອສະຕິ ບໍ່ຍອມໃຫ້ສະຕິຢູ່ເຫນືອ ອາຣົມຜົດກໍຈະຕ້ອງມາເກີດ ກັບເຮົາແທ້

ສິ່ງທີ່ເຈັບທີ່ສຸດໃນໂລກຄື: ຫນາມແທງເລັບ ເຫັບເຂົ້າຫູ ເມັຍມີຊູ້

## ມູນເຫດແຫ່ງການເຮັດບຸນເຂົ້າສາກ

ມີເລື່ອງເລົ່າໄວ້ໃນພຣະທັມມະບົດວ່າ ບຸດຊາຍຂອງກະດຸມພີຄົນຫນຶ່ງພໍ່ຕາຍຍັງເຫລືອແຕ່ແມ່ ແມ່ຫາຍິງສາວມີຕະກຸນ ແລະມີອາຍຸຮຸ່ນຮາວຄາວດຽວກັນມາໃຫ້ເປັນພັນຣະຍາ ແຕ່ນາງບໍ່ມີບຸດແມ່ຈຶ່ງຫາຍິງສາວຄົນໃຫມ່ມາໃຫ້ເປັນພັນຣະຍາອີກ ນາງຄົນນີ້ມີບຸດເມັຍໃຫຍ່ເຫັນດັ່ງນັ້ນກໍຄິດອິດສາເມັຍນ້ອຍ ແລ້ວຈຶ່ງຫາວິທີບອກກັບເມັຍນ້ອຍວ່າຖ້າເຈົ້າຕັ້ງທ້ອງເຈົ້າຈົ່ງບອກແກ່ຂ້ອຍ ນາງເມັຍນ້ອຍພໍຕັ້ງທ້ອງໄດ້ຫນຶ່ງເດືອນແລ້ວກໍໄດ້ບອກເມັຍໃຫຍ່ ເມັຍໃຫຍ່ກໍເອົາຢາໃຫ້ກິນເພື່ອໃຫ້ລູກອອກພໍກິນຢາລົງໄປແລ້ວລູກກໍອອກ ຄັ້ງທີ່ສອງພໍຕັ້ງທ້ອງກໍເຮັດເຫມືອນເດີມ ພໍມີທ້ອງຄັ້ງທີສາມນາງບໍ່ຍອມບອກນາງຫລົບຫນີໄປອາໄສຢູ່ບ້ານພີ່ນ້ອງຈົນທ້ອງແກ່ ເມັຍໃຫຍ່ນໍາໄປເຫັນຈຶ່ງໄດ້ບັງຄັບໃຫ້ກິນຢາ ກິນຢາເທື່ອນີ້ລູກບໍ່ອອກເພາະວ່າທ້ອງແກ່ແລ້ວ ລູກໃນທ້ອງຈຶ່ງນອນຂວາງອັດຫົວໃຈຕາຍ ກ່ອນຈະຕາຍນາງເມັຍນ້ອຍໄດ້ຜູກເວນເມັຍໃຫຍ່ວ່າດັ່ງນີ້ ຂໍໃຫ້ຂ້ອຍເກີດເປັນນາງຍັກຂີນີໃຫ້ໄດ້

ກິນຕົວມັນແລະລູກຂອງມັນ ແລ້ວເມັຍນ້ອຍ ກໍ່ຕາຍໄປເກີດເປັນແມວ ເມັຍໃຫຍ່ຖືກຜົວຂ້າຕາຍໄປເກີດເປັນໄກ່ໃນເຮືອນດຽວກັນ.

ພໍໄກ່ໄຂ່ອອກມາ ແມວກໍ່ກິນໄຂ່ ຄັ້ງທີສອງກໍ່ກິນອີກ ຄັ້ງທີສາມແມວກິນທັງໄຂ່ທັງແມ່ໄກ່ ແມ່ໄກ່ກ່ອນຈະຕາຍໄດ້ຜູກເວນ ຕໍ່ໄປແມ່ໄກ່ເກີດເປັນນາງເສືອເຫລືອງ ແມວເກີດເປັນນາງງົວພໍນາງງົວມີທ້ອງເສືອກໍ່ມາລັກກິນລູກງົວ ຄັ້ງທີສອງກໍ່ກິນ ຄັ້ງທີສາມກິນທັງແມ່ກິນທັງລູກ ກ່ອນແມ່ງົວຈະຕາຍໄດ້ຜູກເວນຕໍ່ແມ່ເສືອໄວ້ ແມ່ງົວເກີດເປັນນາງຍັກຂີນີ ເສືອເຫລືອງເກີດເປັນນາງກຸນທິດາຢູ່ໃນເມືອງສາວັດຖີ ເມື່ອເຕີບໂຕໄດ້ແຕ່ງງານກັບຊາຍຄົນຫນຶ່ງ ພໍເກີດລູກຄົນທໍາອິດນາງຍັກຂີນີປອມຕົວເປັນຍິງສະຫາຍໄປຢ້ຽມຢາມ ໄດ້ໂອກາດກໍ່ຈັບເດັກນ້ອຍກິນເລີຍ ຄັ້ງທີສອງກໍ່ເຫມືອນກັນ ຄັ້ງທີສາມນາງຫນີໄປຢູ່ບ້ານຜົວ ພໍໄປເຖິງສະໂບກຂາຣະນີ ນາງຢາກຈະອາບນໍ້າຈິ່ງສົ່ງລູກໃຫ້ຜົວອຸ້ມ ອາບແລ້ວຮັບເອົາລູກມາອຸ້ມກິນນົມ ຜົວກໍາລັງລົງອາບນໍ້າແລະເຫັນນາງຍັກຂີນີຕາມມາ ຈິ່ງເອີ້ນໃສ່ເມັຍ ໃຫ້ຂຶ້ນຈາກສະນໍ້າແລ້ວພາກັນອຸ້ມລູກແລ່ນໄປຍັງວັດພຣະເຊຕະວັນມະຫາວິຫານ.

ຂະນະນັ້ນພຣະພຸດທະອົງກໍາລັງເທດສອນປະຊາຊົນຢູ່ ຜົວເມັຍນໍາລູກນ້ອຍຂອງຕົນເຂົ້າໄປມອບກາຍຖວາຍຕົວຕໍ່ພຣະພຸດທະເຈົ້າສ່ວນນາງຍັກຂີນີແລ່ນນໍາໄປຢຸດຢືນຢູ່ຂ້າງນອກ ເພາະມີເທວະດາຢືນກັ້ນກາງໄວ້ ພຣະອົງຕັດເອີ້ນພຣະອານົນໃຫ້ໄປຕາມຍັກຂີນີເຂົ້າມາແລ້ວສັ່ງສອນບໍ່ໃຫ້ພະຍາບາດອາຄາດກັນ ຖ້າຈອງເວນກັນກໍ່ຈະເປັນເວນຕໍ່

ກັນຫລາຍກັບຫລາຍກັນ ເຫມືອນແມວເປັນເວນກັບຫນູ ງູເປັນເວນກັບຈອນຟອນ (ພັງພອນ) ກາເປັນເວນກັບນົກເຄົ້າ ຫມີເປັນເວນກັບໄມ້ຄໍ້ ແລ້ວຕັດສັ່ງໃຫ້ນາງກຸນທິດານໍານາງ ຍັກຂິນີໄປລ້ຽງໄວ້ ນາງໄດ້ນໍານາງຍັກຂິນີໄປໄວ້ທີ່ ຫົວຄົກມອງ ແອ່ງນໍ້າ ຄີໄຟ ຊາຍຄາ ກອງຂີ້ຟອຍປະຕູບ້ານ ສະຖານທີ່ເຫລົ່ານີ້ແມ່ນບ່ອນນາງຍັກຂິນີຢູ່ ແຕ່ນາງບໍ່ພໍໃຈ ຈິ່ງຂໍໄປຢູ່ທີ່ແຈ້ງ(ເຂົ້າໃຈວ່າເປັນຫົວນາຄືຜີຕາແຮກ) ແລ້ວລ້ຽງຮັກສາດ້ວຍດີ.

ນາງຍັກຂິນີຮູ້ເກນຟ້າຝົນດີ ປີໃດຈະແລ້ງ ຫລືຖ້ວມບອກຍິງສະຫາຍໃຫ້ຊາບ ຍິງສະຫາຍເຮັດນາໄດ້ຜົນດີ ຊາວບ້ານໄດ້ຮູ້ຄວາມຈິງ ພາກັນນັບຖືນາງຍັກຂິນີ ແລະນໍາເອົາເຂົ້າປາອາຫານມາລ້ຽງຢ່າງອຸດົມສົມບູນ ຈົນນາງຍັກຂິນີໄດ້ເອົາຂອງເຫລົ່ານັ້ນຖວາຍເປັນສະຫລາກກະພັດ ໃຫ້ພຣະວັນລະແປດອົງ ອາໄສເຫດນີ້ຄົນຈິ່ງພາກັນເຮັດບຸນເຂົ້າສະຫລາກ ກໍເປັນປະເພນີສືບມາ ຈົນເຖິງທຸກວັນນີ້.



## ເດືອນສິບເອັດ (ເຮັດບຸນມະຫາປະວະຣະນາອອກພັນສາ)

ບຸນມະຫາປະວາຣະນາອອກພັນສານີ້ ກົງກັບວັນເພັງຂຶ້ນ ໑໕ ຄໍ່າ ເດືອນ ໑໑ ເປັນວັນທີ່ສິ້ນສຸດການຈໍາພັນສາຂອງພຣະພິກຂຸສົງໃນລະຫວ່າງລະດູຝົນ ຣະດູຝົນເປັນຣະດູການຈໍາພັນສາຂອງພຣະພິກຂຸສາມະເນນ ພຣະພຸດທະອົງຊົງບັນຍັດໃຫ້ພຣະພິກຂຸສົງຢູ່ຈໍາພັນສາ ເມື່ອ ເຖິງວັນອອກພັນສາແລ້ວ ພຣະພິກຂຸສາມະເນນກໍ່ສາມາດອອກຈາຣິກສະແຫວງບຸນໄດ້ຕາມຄວາມປະສົງ ໃນສະໄຫມຄັ້ງພຸດທະການນັ້ນ ວັນມະຫາປະວາຣະນາອອກພັນສາ ຖືວ່າເປັນວັນທີ່ພຣະສັມມາສັມພຸດທະເຈົ້າສະເດັດລົງມາຈາກສະຫວັນເທວະໂລກ ລົງມາສູ່ມະນຸດສະໂລກທີ່ເມືອງສັງກັດສະນະຄອນ ຫລັງຈາກສະແດງທັມໂຜດພຣະມານດາ ຢູ່ເທິງສະຫວັນຊັ້ນດາວະດຶງຕະຫລອດໄຕຣມາດ (໓ ເດືອນ) ໃນຕອນເຊົ້າ ວັນມະຫາປະວາຣະນາ ຈະມີການປະຊຸມສົງໃນພັດທະສີມາເພື່ອທໍາພິທີໄຫວ້ພຣະສູດມົນ ແລະທໍາສັງຄະກັມ ຫລືທໍາປະວາຣະນາກັມເພື່ອອອກຈາກພັນສາ ໂດຍສະເພາະພິກຂຸສົງຈະທໍາພິທີຂໍຂະມາເຊິ່ງກັນແລະກັນທີ່ໄດ້ລ່ວງເກີນມາແລ້ວ ດ້ວຍກາຍ ວາຈາ ໃຈ ໂດຍຕັ້ງໃຈກໍ່ດີ ບໍ່ຕັ້ງໃຈກໍ່ດີ ໃນລະຫວ່າງທີ່ຈໍາພັນສາ ເຊິ່ງອະນຸຍາດ ໃຫ້ວ່າກ່າວຕັກເຕືອນກັນໄດ້ໂດຍບໍ່ມີຄວາມຄຽດແຄ້ນໃຫ້ແກ່ກັນແລະ ກັນບໍ່ວ່າພຣະອາວຸໂສ ຫລືພັນຕໍ່າສາມາດບອກເຕືອນກັນ ໄດ້ທັງນັ້ນ.

ຄວາມເກງໃຈເປັນສົມບັດຂອງຜູ້ດີ ແຕ່ຖ້າຫາກທໍາຄວາມດີບໍ່ຕ້ອງໄປເກງໃຈຜູ້ໃດ

## ເດືອນສິບສອງ (ເຮັດບຸນກະຖິນ)

ຄຳວ່າ: ກະຖິນ ກໍຄືໄມ້ທີ່ຕີຂອບສຳລັບຂຶງຜ້າໃຫ້ເຄັ່ງຕຶງເພື່ອຫຍິບຈີວອນພຣະພິກຂຸ ເມື່ອເຮັດສຳເລັດແລ້ວຈຶ່ງເອີ້ນວ່າ ຜ້າກະຖິນ ຂອບໄມ້ທີ່ຂ້າພະເຈົ້າກ່າວມານີ້ ຄົນບູຮານລາວເຮົານິຍົມເອີ້ນວ່າ ສະດຶງຂຶງຜ້າ ເພາະສະນັ້ນພວກເຮົາຊາວພຸດຈຶ່ງພາກັນເອີ້ນວ່າຜ້າກະຖິນ ການທີ່ເອີ້ນວ່າຜ້າກະຖິນນີ້ ກໍເພາະເອີ້ນຕາມໄມ້ນັ້ນເອງເມື່ອເຮົາຈະຫຍິບຜ້າເຮົາຕ້ອງເຄັ່ງໃຫ້ຕຶງກ່ອນແລ້ວຈຶ່ງຫຍິບ ໃນສະໄຫມກ່ອນຍັງບໍ່ທັນມີຄວາມຈະເຣີນ ການພັດທະນາດ້ານວັດຖຸນິຍົມ ຈັກຫຍິບຜ້າກໍຍັງບໍ່ມີໃຊ້ເຫມືອນປັດຈຸບັນນີ້ ຈຶ່ງຕ້ອງອາໄສໄມ້ສະດຶງຊ່ອຍຂຶງເປັນຫລັກກ່ອນແລ້ວຈຶ່ງຫຍິບ.

ຄຳວ່າ: ທອດ ມີຜູ້ໃຫ້ຄວາມຫມາຍໄວ້ຫລາຍຢ່າງ ບາງອາຈາຣຍ໌ກ່າວໄວ້ວ່າ ຄຳວ່າ ທອດ ໄດ້ແກ່ການທອດອາໄລ ຄືບໍ່ມີຄວາມຫ່ວງແຫນໃນຜ້ານັ້ນ ບໍ່ໄດ້ຈຳເພາະເຈາະຈົງແກ່ພຣະພິກຂຸຮູບໃດຮູບຫນຶ່ງ ອີກອາຈາຣຍ໌ຫນຶ່ງກ່າວໄວ້ວ່າ ຄຳວ່າ ທອດ ຄືປົງໄວ້ ສະນັ້ນທອດກະຖິນ ຄືນຳຜ້າໄຕຣຈີວອນປົງໄວ້ຕໍ່ຫນ້າຄະນະສົງ ບໍ່ໃຫ້ເຄີຍປົງໄວ້ຊື່ໆ ແລ້ວເຈົ້າພາບກໍກ່າວຄຳຖວາຍ ພຣະພິກຂຸທີ່ຈະຮັບກະຖິນນັ້ນຢ່າງນ້ອຍບໍ່ໃຫ້ຕ່ຳກວ່າ ໕ ອົງຂຶ້ນໄປທີ່ຈຳພັນສາຢູ່ໃນວັດນັ້ນໂດຍທີ່ເຈົ້າພາບບໍ່ໄດ້ຕັ້ງໃຈຈະຖວາຍຈຳເພາະເຈາະຈົງໃຫ້ແກ່ພຣະພິກຂຸອົງໃດອົງຫນຶ່ງແລ້ວແຕ່ທາງພຣະສົງທ່ານຈະຕັ້ງຍັດຕິສົມມຸດກັນເອງຫລືບາງວັດກໍມີການຈົກສະຫລາກເອົາແລ້ວແຕ່ຄວາມເຫມາະສົມຂອງວັດ.

ການທອດກະຖິນນີ້ມີກຳນົດໄລຍະເວລາຢ່າງແນ່ນອນຄື ເລີ່ມຕັ້ງແຕ່ແຮມ ໑ ຄ່ຳ ເດືອນ ໑໑ ເພັງ ໄປຈົນເຖິງເດືອນ ໑໔ ເພັງ ຈຶ່ງຫມົດເຂດການທອດກະຖິນ ຫລັງຈາກນີ້ໄປກໍທອດ ເປັນຜ້າກະຖິນບໍ່ໄດ້ ຖ້າເຮັດເປັນກອງອັດຖະ ຫລືຜ້າປ່ານັ້ນແມ່ນໄດ້.

## ມູນເຫດແຫ່ງການເຮັດບຸນກະຖິນ

ມູນເຫດທີ່ພາໃຫ້ມີພຣະພຸດທານຸຍາດໃຫ້ພຣະພິກຂຸຮັບຜ້າກະຖິນນັ້ນ ມີເລື່ອງເລົ່າໄວ້ໃນ ພຣະວິໄນປີດົກມະຫາວັກເຫລັ້ມທີ ໕ ໂດຍຫຍໍ້ວ່າ ພຣະຜູ້ມີພຣະພາກເຈົ້າ ພຣະອົງຊົງປາຣົບ ພຣະພິກຂຸຊາວເມືອງປາໄຖຍະ ໓໐ ອົງ ລ້ວນເປັນຜູ້ຊົງທຸດົງຄະຄຸນ ຄືການຖືຢູ່ປ່າເປັນວັດ ບິນທະບາດເປັນວັດ ຖືຜ້າບັງສະກຸນ ໓ ຜືນເປັນວັດພຣະພິກຂຸເຫລົ່ານັ້ນເດີນທາງມາວັດພຣະເຊຕະວັນ ມີຄວາມປະສົງຈະເຂົ້າເຝົ້າພຣະພຸດທະອົງ ທີ່ປະທັບຢູ່ວັດເຊຕະວັນມະຫາວິຫານນະຄອນສາວັດຖີ ແຕ່ເດີນທາງໄປບໍ່ເຖິງ ຕ້ອງຢຸດຈຳພັນສາຢູ່ທີ່ເມືອງສາເກດໃນລະຫວ່າງທາງຫ່າງຈາກເມືອງສາວັດຖີພຽງ ៦ ໂຍດທ່ານເຫລົ່ານັ້ນຕ້ອງຢຸດພັກຈຳພັນສາຕະຫລອດໄຕຣມາດ (໓ ເດືອນ) ຄັນອອກພັນສາມະຫາປະວາຣະນາແລ້ວ ຈຶ່ງພາກັນເດີນທາງເຂົ້າ ເຝົ້າສົມເດັດພຣະບໍຣົມມະສາສະດາສັມມາສັມພຸດທະເຈົ້າທີ່ວັດເຊຕະວັນ ມະຫາວິຫານນະຄອນສາວັດຖີ ໃນໄລຍະທີ່ເດີນທາງໄປນັ້ນ ຝົນກໍາລັງຕົກຢູ່ພື້ນແຜ່ນດິນຍັງປຽກ ແຕ່ກໍຈຳເປັນຕ້ອງເດີນທາງໄປເຝົ້າພຣະບໍຣົມມະສາສະດາສັມມາສັມພຸດທະເຈົ້າ ພຣະພິກຂຸເຫລົ່ານັ້ນ ໄດ້ຮັບຄວາມລຳບາກ

ໃນການເດີນທາງຄັ້ງນີ້ຕະຫລອດໄລຍະທາງ ເພາະຜ້າຄຸມປຽກຊຸ່ມໄປດ້ວຍນ້ຳແລະຂີ້ຕົມ ພຣະພຸດທະອົງຊົງປາຣົບ ເລື່ອງນີ້ເປັນປະກົມມະເຫດຈຶ່ງປະທານພຣະພຸດທານຸຍາດ ໃຫ້ພຣະພິກຂຸຮັບກະກິນໃນເມື່ອອອກພັນສາແລ້ວ ຊົງກຳນົດເວລາວັນເປັນເຂດຂອງກະຖິນໄວ້ຕາມທີ່ໄດ້ກ່າວມາແລ້ວນັ້ນ.

ປະເພນີຮີດສິບສອງຂອງລາວເຫລັ້ມນີ້

ໄດ້ຂຽນໂດຍ: ພຣະມະຫາບຸນທະວີ ວິໄລຈັກຣ໌

ໃນປີຄ.ສ ໑໙໙໗ ຕອນເປັນນັກເຜີຍແຜ່ທັມທີ່ເມືອງປະທຸມພອນ

ກໍ່ຈົບລົງພຽງເທົ່ານີ້



## ກ່ຽວກັບຜູ້ຂຽນ

ພຣະມະຫາບຸນທະວີ ວິໄລຈັກຣ໌ ເກີດເມື່ອວັນທີ 02 ພຶດສະພາ ພ.ສ 2516 ຄ.ສ 1972 ເກີດທີ່ບ້ານໜອງບົວໃຫຍ່ ເມືອງປະທຸມພອນ ແຂວງຈຳປາສັກ ບວດເປັນສາມະເນນປີ 1986 ບວດເປັນພຣະພິກຂຸປີ 1995 ຜ່ານມາເຄີຍເປັນອາຈານສອນ ເປັນຫົວໜ້າສຶກສາສົງເມືອງ ຄະນະ ອ.ພ.ສ ເມືອງປະທຸມພອນ ແຂວງຈຳປາສັກ ແລະນັກເຜີຍແຜ່ທັມ.

ຜົນງານຜ່ານມາສ່ວນໃຫຍ່ແມ່ນ ຈາກສະໜອງ ແລະຄອງປາກກາ ປັດຈຸບັນ 2001 ປະຈຳຢູ່ສຳນັກງານສູນກາງອົງພຸດທະສາສະນາ ສຳພັນລາວ ແລະເປັນອາຈານສອນປະຈຳທີ່ວິທະຍາໄລສົງລາວ ສັງກັດວັດພຣະທາດຫລວງເໜືອ ໂທ: (021) 451608

ຄະຕິທັມ ເພິ່ງຕົນເອງ ດີທີ່ສຸດໃນໂລກ

พระ ໝາຍເຖິງຜູ້ເລີດລ້ຳ ໃຈທ່ຽງທາງທັມ

ອາ ນາປະຊາຊົນ ຍົກຍ່ອງນັບນິຍົມ

ຈາຣຍ໌ ຈາຣະທ່ຽວສະແຫວງຄົ້ນ ທາງທັມພຸດທະບາດ

ບຸນ ປາຣະມີພຸ່ງພົ້ນ ເປັນໂພຕົ້ນຮົ່ມຊົນ

ທອງ ທ່ອນທັມຈູດໄຕ້ ເຜົາຈີ່ໃຫ້ເປັນແສງ

ວິ ຣິຍະບຳເພັງພຽນ ຮຸ່ງໃສປັນຍາກວ້າງ

ປະ ລະໄລລາເວັ້ນ ຕັນຫາກາມກິເລດ

ໄຊຍ໌ ໄຍປຸກປ່າວເອີ້ນ ປະຊາສ້າງສ່ວນກຸສົນ

พระ ໄທກວ້າງໃຫຍ່ເຍີ້ນ ເກີນກວ່າທະເລເລິກ

ອາຈາຣຍ໌ ຄົນສອນຄົນ ສ່ອງເຍືອງປັນຍາໄຕ້

ຊາ ຊ່າຊານໄຊກ້ອງ ຄົນສັດທານົບນອບ

ໂງນ ໂງ່ນຫີນແຜ່ນລ້ານ ສີລາເຂັ້ມເຂື່ອນແຂງ



ຜູ້ຂ້າເຫັ້ນ!.....



ໂດຍ: ດາວວຽງ ບຸດນາໂດ